**<u>ຄະນະຜູ້ຈັດທຳ ບົດຮຽນພຣະຄັມພີ ພາສາລາວ</u>**

**Copyright © 2006 by BAPTISTWAY PRESS®.**
**ສງວນລິກຂະສິດ**

ອະນຸດຍາດໃຫ້ທາງຄຣິສຕະຈັກເຮັດກອບປີ້ໄດ້ຕາມຄວາມຕ້ອງການ ເພື່ອໃຊ້ຢູ່ພາຍໃນຄຣິສຕະຈັກ. ຫ້າມຂາຍ, ຫ້າມແຈກຢາຍ, ຫລືໃຊ້ໃນທາງອື່ນໆ ໂດຍທີ່ບໍ່ໄດ້ຂຽນຄຳຮ້ອງຂໍອະນຸຍາດເສັຽກ່ອນ. ຖ້າຢາກຊາບລາຍລະອຽດເພີ້ມເຕີມ ກະຣຸນາຕິດຕໍ່ໄປທີ່ BAPTISTWAY PRESS, Baptist General Convention of Texas, 333 North Washington, Dallas, TX 75246-1798.

BAPTISTWAY PRESS® is registered in U.S. Patent and Trademark Office

ຂໍ້ຄວາມພຣະຄັມພີອ້າງອີງໃນບົດຮຽນນີ້ ໄດ້ຄັດມາຈາກປຶ້ມພຣະຄັມພີຕາມທີ່ໄດ້ບົ່ງຊື່ໄວ້ ລວມທັງການແປ, ແລະວັນທີຈົດທະບຽນສງວນລິຂະສິດຂອງປຶ້ມພຣະຄັມພີເຫລົ່ານັ້ນ.

ພິມອອກຄັ້ງທຳອິດ: ເດືອນ ມີນາ, 2004

BAPTISTWAY Management Team

Executive Director, Baptist General Convention of Texas: Charles Wade
Director, Missions, Evangelism, and Ministry Team: Wayne Shuffield
Director, Bible Study/Discipleship Center: Dennis Parrott

Publishing consultant: Ross West, Positive Difference Communications

Language Materials Team

Bible Study Writer for Lessons 1-3
Bounhome Phommachanh, Lao-Thai Baptist, San Antonio, Texas
Editor for Lessons 1-3
Phaisane Somsith, Grace Baptist Church, Dallas, Texas

Bible Study Writer for Lessons 4-6
Houmphanh Vongsurith, First Laotian Baptist Church, Dallas, Texas
Editor for Lessons 4-6
Phaisane Somsith, Grace Baptist Church, Dallas, Texas

Bible Study Writer for Lessons 7-9
Sidney Kahn, Saginaw Community Church, Fort Worth, Texas
Editor for Lessons 7-9
Phaisane Somsith, Grace Baptist Church, Dallas, Texas

Bible Study Writer for Lessons 10-13
Houmphanh Vongsurith, First Laotian Baptist Church, Dallas, Texas
Editor for Lessons 10-13
Phaisane Somsith, Grace Baptist Church, Dallas, Texas

Facilitator for the LAOTIAN TEAM
Joe Haag, Associate Director, Christian Life Commission, Baptist General Convention of Texas

Patty Lane, Director, Office of Intercultural Initiatives, Baptist General Convention of Texas
Nelda P. Williams, Facilitators Coordinator and Manager, Curriculum Development Office

# ບົດຮຽນທີ 1
# ທາງທີ່ຈະມີຄວາມສຸກທີ່ແທ້ຈິງ

---

**ຂໍ້ພຣະຄັມພີສຳລັບບົດຮຽນນີ້:** ເພງສັຣເສີນ ບົດທີ 1

**ຂໍ້ພຣະຄັມພີສຳລັບເບື້ອງຫລັງ:** ເພງສັຣເສີນ ບົດທີ 1

**ຈຸດສຳຄັນຂອງບົດຮຽນນີ້:** ຕິດຕາມພຣະທັມຂອງພຣະເຈົ້າ ຈະນຳໄປສູ່ຄວາມສຸກທີ່ແທ້ຈິງຂອງຊີວິດ

**ຄຳຖາມເພື່ອສຳຣວດ:** ຊີວິດແບບໃດທີ່ຈະນຳໄປສູ່ຄວາມສຸກຢ່າງແທ້ຈິງ?

**ຈຸດປະສົງຂອງບົດຮຽນ:** ເພື່ອຈະເຮັດໃຫ້ທ່ານທັງຫລາຍຮູ້ວ່າຜູ້ທີ່ຕິດຕາມແລະຜູ້ທີ່ບໍ່ຕິດຕາມພຣະເຈົ້າມີຊີວິດແຕກຕ່າງກັນຄືແນວໃດ?

## ໜ້າທີ່ສຳຄັນຂອງຄຣິສຕຽນທຸກຄົນໃຫ້ເຂົ້າໃຈວ່າ

- ຢັ້ງຢືນວ່າພຣະຄັມພີມີອຳນາດ ນຳພາຊີວິດ ໄປສູ່ຄວາມສຸກທີ່ແທ້ຈິງໄດ້
- ແບ່ງປັນພຣະກິດຕິຄຸນຂອງພຣະເຢຊູໃຫ້ແກ່ທຸກງຄົນ
- ຂຍາຍການເຕີບໃຫຍ່, ເຮັດໃຫ້ຄວາມເຊື່ອມີຄວາມໝາຍ
- ຊີວິດຄຣິສຕຽນ ແມ່ນຊີວິດທີ່ມີຄວາມແຕກຕ່າງຈາກຊາວໂລກ

## ຄຳນຳ

ເມື່ອອ່ານພຣະທັມເພງສັຣເສີນແລ້ວ ກໍເຫັນໄດ້ວ່າ ແມ່ນການຝຶກຝົນແນວຄິດ. ເລີ້ມປໂຍກທຳອິດກໍເຫັນໄດ້ວ່າແມ່ນການສ້າງແນວຄິດ. "ຄວາມສຸກເປັນຂອງບຸກຄົນ................" ທ່ານຈະຕື່ມທີ່ວ່າງຢູ່ນີ້ຢ່າງໃດກໍໄດ້. ຈົ່ງສັດຊື່ !!!!!!

- ✓ ພວກທີ່ມີເງິນຫລາຍ ເສດຖີ
- ✓ ຜູ້ທີ່ໂຊກດີໄດ້ແຕ່ງງານກັບອົງມົງກຸດຫລືພຣະຣາຊີນີ
- ✓ ທີ່ຄອບຄົວບໍ່ເຄີຍປະສົບເຄາະຮ້າຍ
- ✓ ທີ່ຖືກຄັດເລືອກໄດ້
- ✓ ທີ່ວຽກງານບໍ່ເຄີຍເລື່ອຟຈັກເທື່ອ
- ✓ ທີ່ໄດ້ກິນອາຫານດີໆ
- ✓ ທີ່ມີແຟນງາມໆ ສວຍໆ.......

ຈະເປັນຂອງພວກໃດກໍແລ້ວແຕ່ ພວກເຮົາຈະໄດ້ເວົ້າກັນຕໍ່ໄປໃນບົດຮຽນ ຕໍ່ໄປນີ້:

**ການເປັນຫ່ວງເປັນໃຍ** !!!! (1:1)

ພຣະທັມເພງສັຣເສີນທັງໝົດມີ 150 ບົດ. ແຕ່ບົດທີ 1 ເປັນບົດທີ່ໃຫ້ສະຕິປັນຍາອັນດີ ຕາມທີ່ນັກຄົ້ນຄວ້າຫລາຍທ່ານໄດ້ໃຫ້ທັສນະມາ. ສ່ວນບົດອື່ນໆອີກກໍມີເໝືອນກັນເຊັ່ນບົດທີ 37, 49, 73, 112,119, 127,128 ແລະ 133. ສະຕິປັນຍາຂອງເພງສັຣເສີນໃນບົດເຫລົ່ານີ້ສ່ວນຫລາຍແລ້ວຈະກົງກັນຂ້າມກັບຊີວິດຂອງຜູ້ສລາດ, ຜູ້ໂງ່, ຜູ້ອ່ອນແອ ແລະຜູ້ທີ່

ຊອບທັມທັງຫລາຍ. ຂໍ້ພຣະທັມເຫລົ່ານີ້ຈະຮຽກຮ້ອງໃຫ້ອອກຈາກການບໍ່ຕິດຕາມພຣະເຈົ້າ ໃຫ້ມາອີງໃສ່ຄຳແນະນຳສັ່ງສອນຂອງພຣະເຈົ້າ.ບົດ 1:1 ສອນວ່າ ພຣະເຈົ້າຈະອວຍພຣະພອນຕໍ່ຜູ້ທີ່ດຳເນີນຕາມທາງຂອງພຣະເຈົ້າ. ໃນທີ່ນີ້ກໍຫມາຍຄວາມວ່າ ຜູ້ທີ່ຕ້ອນຮັບເອົາພຣະເຈົ້າ ແມ່ນຜູ້ທີ່: ບໍ່ດຳເນີນຕາມທາງອະທັມ, ບໍ່ຢືນຢູ່ໃນທາງຂອງຄົນບາບ, ບໍ່ນັ່ງໃນທີ່ນັ່ງຂອງຄົນທີ່ມັກເຢາະເຢີ້ຍ.

**ບໍ່ດຳເນີນຕາມທາງອະທັມ:** ແມ່ນເດີນກົງກັນຂ້າມກັບທາງຂອງພຣະເຈົ້າ, ບໍ່ມີຄວາມສວ່າງ ແລະກໍບໍ່ຮູ້ວ່າຈະເດີນທາງກັນຢ່າງໃດ. ບໍ່ມີເປົ້າຫມາຍຂອງຊີວິດ. ສ່ວນຫລາຍ ຄົນພວກນີ້ຈະເປັນພວກທີ່ຖືວ່າຕົວເອງສລາດ.

**ບໍ່ຢືນຢູ່ໃນທາງຂອງຄົນບາບ:** ຄົນພວກນີ້ແມ່ນພວກທີ່ອັນຕລາຍ ເພາະເຂົາຈະບໍ່ຍອມຟັງຄຳແນະນຳໃດໆທັງນັ້ນ. ພວກນີ້ຂູຊີ, ແລະຍັງບໍ່ພໍທໍ່ນັ້ນ ພວກເຂົາຍັງພະຍາຍາມຈ່ອງດຶງເອົາຄຣິສຕຽນໃຫ້ຫ່າງອອກຈາກພຣະເຈົ້າ ແລະກໍຍັງສະແດງຕົວເອງວ່າຮູ້ພຣະເຈົ້າດີກວ່າໃຜໆທັງນັ້ນ.

**ບໍ່ນັ່ງໃນທີ່ນັ່ງຂອງຄົນທີ່ມັກເຍາະເຢີ້ຍ:** ພວກນີ້ແມ່ນມັກສົງສັຍພຣະເຈົ້າ, ບໍ່ເຫັນຄວາມສຳຄັນ ແລະຍັງທ້າທາຍ, ບໍ່ເຊື່ອໃນການຊົງເປັນຢູ່ຂອງພຣະເຈົ້າ. ດຳເນີນ, ຢືນຢູ່, ແລະນັ່ງ ສາມຄຳນີ້ ນັກອະທິບາຍພຣະຄັມພີ ອາດຈະອະທິບາຍ ແຕກຕ່າງກັນອອກໄປ, ຢ່າງໃດກໍຕາມ ຜູ້ຂຽນເພງສັຣເສີນມີຄວາມເປັນຫ່ວງເປັນໃຍພວກເຮົາຫລາຍໃນສິ່ງເຫລົ່ານີ້.

## ຈົ່ງປັກໃຈໃສ່ເສັ້ນທາງຂອງພຣະເຈົ້າ (1:2)

ຖ້າພວກເຮົາຢາກຈະເປັນຜູ້ທີ່ ພຣະເຈົ້າອວຍພຣະພອນໃນຊີວິດແທ້ໆນັ້ນ ເຮົາຕ້ອງປັກໃຈໃສ່ພຣະຄຳຂອງພຣະເຈົ້າ. ການປັກຈິດປັກໃຈນີ້ ຜູ້ຂຽນເພງສັຣເສີນບໍ່ມີວິທີການໃດທີ່ຈະມອບໃຫ້ເຮົາກະທຳ, ພຽງແຕ່ຫມູນໃຈໃຫ້ປະຕິບັດຕາມພຣະທັມຂອງພຣະເຈົ້າແລະຄຶດຕຶກຕອງ. ໃນສມັຍກ່ອນການປະຕິບັດຕາມພຣະທັມຂອງພຣະເຈົ້າແມ່ນປະຕິບັດຕາມພຣະບັນຍັດ. ພຣະບັນຍັດແມ່ນສິ່ງທີ່ນຳພາການດຳເນີນຊີວິດ ເພື່ອໃຫ້ຖືກຕາມຫລັກຂອງພຣະເຈົ້າແຕ່ຈະປະຕິບັດໄດ້ເຮົາຕ້ອງຄຶດຕຶກຕອງເພື່ອໃຫ້ເຂົ້າໃຈ. ຜູ້ຂຽນເພງສັຣເສີນຈຶ່ງສອນວ່າ ໃຫ້ຕຶກຕອງທັງກາງວັນແລະກາງຄືນ.

## ຜົນຕິດຕາມມາ (1:3-5)

ເມື່ອເຮົາເຮັດສິ່ງໃດສິ່ງນຶ່ງລົງໄປ ພວກເຮົາກໍມັກຫວັງຜົນຕອບແທນ. ຜູ້ຂຽນເພງສັຣເສີນໄດ້ຂຽນຕໍ່ໄປອີກວ່າ ຖ້າຜູ້ໃດຫາກປະຕິບັດຕາມທາງຂອງພຣະເຈົ້າ ແລະບໍ່ດຳເນີນຕາມທາງຂອງຜູ້ທີ່ຖືວ່າຕົວເອງສລາດແລະເຊື່ອໃນຕົວເອງ. ຜູ້ນັ້ນຈະເປັນເຫມືອນຕົ້ນໄມ້ທີ່ປູກໄວ້ແຄມນ້ຳ, ຕົ້ນໄມ້ທີ່ຢູ່ແຄມນ້ຳຈະເກີດໃບຂຽວຕລອດເວລາ ແລະມີຫມາກຕາມລະດູການຂອງມັນ ຫລືອີກຢ່າງນຶ່ງ ຖ້າມີຫມາກກໍເປັນຫມາກທີ່ອຸດົມສົມບູນ. ຕົ້ນໄມ້ນີ້ຍັງສາມາດຕໍ່ສູ້ກັບສັດຕຣູພືດຕ່າງໆໄດ້ດີ.

ຂໍ້ 4-5 ໄດ້ມາກ່າວເຖິງຄົນອະທັມ, ຜູ້ທີ່ບໍ່ເດີນຕາມພຣະທັມຂອງພຣະເຈົ້າ. ເຂົາຈະເປັນເຫມືອນແກບ (ຂີ້ແກບ). ສິ່ງນຶ່ງທີ່ເປັນເສດເຫລືອຈາກການຕຳເຂົ້າ, ຈະເອົາໄປລ້ຽງຫມູກໍບໍ່ໄດ້, ຈະເອົາໄປກິນກໍບໍ່ໄດ້ ມີແຕ່ກອງໄວ້ຫລືຊະຊາຍໄວ້ເພື່ອໃຫ້ໄກ່ເຂັ່ຍຫລືເຜົາໄຟ. ແກບເປັນສິ່ງນຶ່ງທີ່ເບົາລົມຈະພັດໄປທົ່ວທິບ ເພາະບໍ່ມີນ້ຳຫນັກຫຍັງເລີຍ. ເຫດສັນນັ້ນຄົນອະທັມຈະບໍ່ຍັ້ງຢືນຫຍັງເລີຍ ຈະທົນບໍ່ໄດ້ໃນການຕັດສິນຂອງພຣະເຈົ້າ ຫລືວ່າໃນປັດຈຸບັນຄົນບາບຈະບໍ່ສາມາດຢືນຢູ່ຮ່ວມກັບກຸ່ມຂອງຄົນຊອບທັມໄດ້, ມັນຈະຫາທາງເພື່ອໄປຫາຈຸດພິນາດຂອງມັນເອງ.

ຖ້າພວກເຮົາຫາກກໍ່ຮ່າງສ້າງຕົວຂຶ້ນ, ມີເປົ້າຫມາຍຂອງຕົວເອງໂດຍບໍ່ອີງໃສ່ພຣະເຈົ້າ, ແລະການກະທຳທີ່ສວນທາງຂອງພຣະເຈົ້າ ກໍແມ່ນພວກເຮົາກຳລັງສ້າງຊີວິດທີ່ບໍ່ຫມັ້ນຄົງ. ເພາະຊີວິດທີ່ເຮົາດຳເນີນຢູ່ນີ້ ມັນກໍບໍ່ຫມັ້ນຄົງຢູ່ແລ້ວ ເພາະຈະບໍ່ຢືນຍົງໃນວັນພິພາກສາໄດ້.

## ການຊົງສະຖິດຂອງພຣະເຈົ້າ (1:6)

ໃນຂໍ້ທີ 6 ຜູ້ຂຽນເພງສັດເສີນຮຽກຮ້ອງໃຫ້ພວກເຮົາເຫັນສອງເສັ້ນທາງຂອງຊີວິດ. ແຕ່ພຣະເຈົ້າຊົງຊາບແລ້ວວ່າ ໃຜເດີນທາງເສັ້ນໃດ ທາງຊອບທັມຫລືທາງອະທັມ. ໃນຂໍ້ 1 ເຮົາໄດ້ຮູ້ນຳກັນແລ້ວວ່າຄົນທີ່ບໍ່ດຳເນີນຕາມຄຳແນະນຳຂອງຄົນອະທັມ, ຄົນທີ່ບໍ່ຢືນຢູ່ໃນທາງຂອງຄົນບາບ, ແລະຄົນທີ່ບໍ່ນັ່ງໃນທີ່ຂອງຄົນມັກເຍາະເຍີ້ຍຜູ້ນັ້ນຈະໄດ້ຮັບພຣະພອນ. ເສັ້ນທາງຂອງພຣະເຈົ້າຈະສວນທາງກັນກັບຂອງຄົນອະທັມສເມີ.
ເປັນຫຍັງທ່ານຈຶ່ງຕັດສິນໃຈເດີນຕາມທາງຂອງຄວາມອະທັມ? ທ່ານບໍ່ຮູ້ເຖິງອັນຕະລາຍແດ່ບໍ່? ທ່ານບໍ່ເປັນຫ່ວງຊີວິດຂອງທ່ານບໍ່?

ນີ້ຄືຄຳຕອບ: ພຣະເຈົ້າຊົງເປັນຊີວິດ. ພຣະເຈົ້າຊົງເຫັນເຮົາຕົງໄດ້. ພຣະເຈົ້າຊົງຫລິງເຫັນທ່ານ. ພຣະອົງຊົງກ່າວຢ່າງໃດທຸກສິ່ງຈະເປັນຢ່າງນັ້ນ.

<u>ຄຳຖາມ</u>

1. ທ່ານເຄີຍເຫັນຜູ້ໃດແດ່ບໍ່ທີ່ໃຫ້ພຣະເຈົ້າເປັນສູນກາງຂອງຊີວິດຢ່າງແທ້ຈິງ?

2. ລອງເວົ້າກ່ຽວກັບຕົວເອງເບິ່ງວ່າທ່ານມີຄວາມສຸກຫລືໄດ້ຮັບພຣະພອນຈາກພຣະເຈົ້າບໍ່?

3. ຖ້າທ່ານຫາກເປັນຜູ້ແນະນຳຄຣິສຕຽນໃຫມ່ເພື່ອໃຫ້ມີຊີວິດທີ່ໄດ້ຮັບພຣະພອນ, ທ່ານຈະເວົ້າຢ່າງໃດແດ່?

4. ໃນທຸກວັນນີ້ ໃຫ້ທ່ານຂຽນບັນຊີລົງວ່າແມ່ນຫຍັງຄືຄວາມອະທັມ.

5. ແມ່ນຫຍັງທີ່ກຳລັງດຶງພວກເຮົາອອກຈາກພຣະເຈົ້າໃນທຸກວັນນີ້?

*ດຣ. ບຸນໂຮມ ພົມມະຈັນ*

# ບົດຮຽນທີ 2
# ທູນຂໍຄວາມຊ່ວຍເຫລືອຈາກພຣະເຈົ້າ

---

**ຂໍ້ພຣະຄັມພີສຳລັບບົດຮຽນນີ້:** ເພງສັຣເສີນ 3.1-8; 13;1-6; 22:1-5, 22-24

**ຂໍ້ພຣະຄັມພີສຳລັບເບື້ອງຫລັງ:** ເພງສັຣເສີນ 3; 6; 13; 22

**ຈຸດສຳຄັນຂອງບົດຮຽນນີ້:** ພວກເຮົາຄວນວາງໃຈໃນພຣະເຈົ້າ, ເຖິງແມ່ນວ່າພຣະອົງຈະຢູ່ຫ່າງໄກ, ແລະຄືວ່າບໍ່ເປັນຫ່ວງເປັນໃຍ ແລະບໍ່ຮັບຜິດຊອບຫຍັງເລີຍຕໍ່ຄຳທູນຂໍຂອງພວກເຮົາກໍຕາມ.

**ຄຳຖາມເພື່ອສຳຣວດ:** ທ່ານເຄີຍມີຄວາມສົງສັຍບໍ່ວ່າ ເປັນຫຍັງພຣະເຈົ້າຈິ່ງຊັກຊ້າໃນການຕອບຄຳອະທິຖານຂອງເຮົາ?

**ຈຸດປະສົງຂອງບົດຮຽນ:** ເພື່ອໃຫ້ເຮົາໄດ້ສົມທຽບໃນປະສົບການຂອງຜູ້ຂຽນເພງສັຣເສີນ ແລະຄວາມສົງສັຍຂອງພວກເຮົາວ່າເປັນຫຍັງ ພຣະເຈົ້າຈິ່ງໃຫ້ພວກເຮົາລໍຖ້າດົນແທ້?

**ເນັ້ນໜັກເຖິງການສຶກສາແລະການກະທຳ**

- ຢັ້ງຢືນວ່າພຣະທັມຄັມພີມີອຳນາດໃນການນຳພາຊີວິດ ແລະການປ່າວປະກາດດ້ວຍ
- ເສີມຂຍາຍການຈະເຣີນເຕີບໂຕ, ເຄື່ອນໄຫວໃນຄວາມເຊື່ອ
- ໜູນໃຈຄອບຄົວຄຣິສຕຽນໃຫ້ມີສຸຂພາບດີ

## ຄຳນຳ

ຫລາຍໆໂບດກໍເຫມືອນກັນກັບໂບດຂອງພວກເຮົາ, ຄືພວກເຮົາໄດ້ເປີດຕ້ອນຮັບເອົາຜູ້ປະສົບພັຍນ້ຳຖ້ວມຈາກພະຍຸໃຫຍ່ "ກາຕຣີນາ" ໃນປີ 2005. ຜູ້ຊາຍຜູ້ຍິງ, ເດັກນ້ອຍຊາຍຍິງ ໄດ້ມາເຖິງສູນຕ້ອນຮັບຄຣິສຕຽນ. ສ່ວນຫລາຍແລ້ວແມ່ນບໍ່ມີຫຍັງຕິດມືມາ ນອກຈາກສິ້ງເສື້ອຄາຄີງ. ພະຍຸໄດ້ທຳລາຍເຮືອນຊານບ້ານຊ່ອງ, ທຳລາຍວຽກງານຂອງເຂົາເຈົ້າ. ຍັງບໍ່ພໍທໍ່ນັ້ນມັນຍັງເຮັດໃຫ້ຄອບຄົວແຕກແຍກກັນ ບາງຄົນກໍຍັງບໍ່ຮູ້ວ່າລູກຫລືຜົວໄປຢູ່ໃສ ແລະຍັງມີຊີວິດຢູ່ຫລືບໍ່. ໂບດແລະອົງການຊ່ວຍເຫລືອຕ່າງໆ ກໍພາກັນຈັດຕຽມທີ່ພັກພາອາສັຍ, ອາຫານ, ເຄື່ອງນຸ່ງຫົ່ມ, ຢາປົວພະຍາດແລະອື່ນໆອີກ. ພວກເຮົາບໍ່ສາມາດເອົາຄວາມເຈັບປວດ, ຄວາມຫວາດກົວ, ຄວາມຕະນົກຕົກໃຈ, ແລະຄວາມຕຶງຄຽດອອກຈາກຫົວໃຈຂອງເຂົາເຈົ້າໄດ້ ເພາະມັນເປັນທັມມະຊາດແລະຄວາມຮູ້ສຶກຂອງມະນຸດທີ່ວງໄປທີ່ຈະສະແດງອອກ. ຫລາຍຄົນກໍເປັນຄຣິສຕຽນ. ຊາຍສູງອາຍຸຄົນນຶ່ງກ່າວຕາງໜ້າຫລາຍໆຄົນວ່າ: "ຂ້ອຍບໍ່ຮູ້, ຂ້ອຍບໍ່ຮູ້ອີ່ຫລີ ! ມັນເປັນແນວໃດອາຈານ, ນຶ່ງນາທີສອງນາທີທຸກສິ່ງຮຽບຮ້ອຍດີ, ແຕ່ອີກນາທີຕໍ່ມາທຸກສິ່ງທຸກຢ່າງກໍຫາຍໄປໝົດ. ຂ້ອຍກໍໄປໂບດຕລອດຊົ່ວຊີວິດຂອງຂ້ອຍ. ຂ້ອຍເຊື່ອພຣະເຈົ້າຕລອດມາ ຂ້ອຍບໍ່ໄດ້ເວົ້າວ່າຂ້ອຍເຮັດດີທຸກຢ່າງແຕ່ວ່າຂ້ອຍກໍເຊື່ອໃນພຣະເຈົ້າ. ເມື່ອມາເຖິງດຽວນີ້ພຣະເຈົ້າຄືວ່າຢູ່ຫ່າງໄກເຮົາແທ້, ຂ້ອຍບໍ່ຮູ້ແທ້ໆແຕ່ຂ້ອຍກໍຍັງເຊື່ອວ່າພຣະເຈົ້າຈະຊ່ວຍຂ້ອຍຢູ່.

**ຈອມກະສັດທູນຂໍຕໍ່ພຣະເຈົ້າ** (3:1-8)

ເພງສັຣເສີນ ບົດທີ 3 ໄດ້ກ່າວເຖິງການສັຣເສີນ ຂອບພຣະຄຸນຂອງກະສັດດາວິດ ທີ່ໄດ້ຊ່ອຍກູ້ພຣະອົງຈາກການກະບົດລຸກຂຶ້ນຕໍ່ສູ້ໂດຍລູກຊາຍຂອງຕົນເອງ ອັບຊາໂລມ. ຊີວິດຂອງກະສັດດາວິດ ໄດ້ຫລົ້ມຈົມລົງເມື່ອລູກຊາຍມີການ

ກະບົດປົດລາວລົງຈາກບັນລັງ. ລາວເສັຽບັນລັງແລະເກືອບຈະສູນເສັຍຊີວິດຂອງຕົນອີກ. ຫລັງຈາກ 10 ກວ່າປີໃນການຄອງຣາຊ, ຄົນອິດສາບັງບຽດ ຄົນຢ້ານລົ່ມ ກໍເພີ້ມທະວີຂຶ້ນຕໍ່ສູ້ລາວ (3:1), ບາງຄົນກໍຍັງກ່າວວ່າພຣະເຈົ້າຂອງລາວຈະບໍ່ຊ່ວຍລາວຕໍ່ໄປອີກແລ້ວ (3:2) ສ່ວນດາວິດລາວເປັນຄົນຮວບຮວມເອົາຄວາມເຈັບປວດ, ຄວາມຕື້ນຕັນໃຈ, ຄວາມໂສກເສົ້າແລະບັນຫາຕ່າງໆມອບແດ່ພຣະເຈົ້າ. "ພຣະອົງຊົງເປັນໂລ່ລ້ອມຮອບຕົວຂອງຂ້ານ້ອຍໄວ້" (3:3) ນີ້ຄືຈຸດດີຂອງດາວິດ ເຖິງແມ່ນວ່າບັນຫາຈະມາກມາຍຫລວງຫລາຍປານໃດກໍຕາມ ແລະເຖິງແມ່ນວ່າຈະມີຜູ້ທີ່ອຸດໜູນສິ່ງເສີມໜ້ອຍປານໃດກໍຕາມ ຄຳເວົ້າແຕ່ລະຄຳຂອງລາວຍັງຄົງສະແດງເຖິງຄວາມເຊື່ອຢູ່ບໍ່ຂາດ. "ປ້ອງກັນສັກສີຂອງຂ້ານ້ອຍໄວ້" (3:3)ດາວິດກ່າວຄຳນີ້ອອກມາກໍເພາະວ່າ ກຽດແລະສະງ່າຣາສີເປັນຂອງພຣະເຈົ້າທີ່ເຮັດໃຫ້ລາວລອດພົ້ນຈາກການກະບົດຂອງລູກຊາຍ. ລາວຮູ້ອີກວ່າມີແຕ່ພຣະເຈົ້າເທົ່ານັ້ນທີ່ຈະແຕ່ງຕັ້ງວ່າໃຜຈະເປັນກະສັດ. "ຂ້ານ້ອຍຮ້ອງທູນພຣະເຈົ້າແລະພຣະອົງຊົງຕອບ" (3:4) ດາວິດອ່ວາຍໜ້າຫາພຣະເຈົ້າທັນທີ. ລາວບໍ່ໄດ້ຫັນໜ້າໄປຫາເພື່ອນຝູງບໍ່ໄດ້ຫັນໜ້າໄປຫາຜູ້ໃດທັງນັ້ນ. ລາວບອກວ່າພຣະເຈົ້າຊົງຟັງສຽງຂອງລາວແລະຊົງຕອບລາວ. "ຂ້ານ້ອຍນອນລົງແລະຫລັບໄປແລະຂ້ານ້ອຍຕື່ນຂຶ້ນກໍເພາະພຣະເຈົ້າຊົງເປັນຜູ້ອຸປຖັມ" (3:5) ເໝືອນກັນກັບພວກເຮົາທັງຫລາຍ, ພວກເຮົາອ້ອນວອນກ່ອນກິນເຂົ້າ, ກ່ອນນອນ, ກ່ອນອອກໄປທຳງານຫລືຈະທຳອັນໃດກໍແລ້ວແຕ່. ກະສັດຜູ້ທີ່ຖືກທອດຖິ້ມບໍ່ໄດ້ກ່າວເຖິງຄວາມເກັ່ງກ້າສາມາດຂອງຕົວເອງເລີຍ ແຕ່ຍັງກັບໃຫ້ພຣະເຈົ້າໄດ້ຮັບກຽດ. "ຂ້ານ້ອຍຈະບໍ່ຢ້ານຄົນເປັນໝື່ນໆ" (3:6)ດາວິດພົບກັບສະພາບການອັນໜ້າຢ້ານກົວ, ແຕ່ລາວບອກວ່າລາວບໍ່ຢ້ານກົວເລີຍ. ເມື່ອເຮົາເບິ່ງກະສັດດາວິດແລ້ວພວກເຮົາຈະເຫັນໄດ້ວ່າ ລາວພະຍາຍາມເອົາຄວາມຢ້ານກົວອອກແລະເອົາຄວາມຫວັງຈາກພຣະເຈົ້າເຂົ້າມາແທນທີ່.

## <u>ຄຳຖາມທີ່ກົງໄປກົງມາ</u> (13:1-6)

ເພງສັຣເສີນບົດທີ 13 ປະຕິກິຣິຍາຂອງດາວິດທີ່ມີຕໍ່ສັດຕຣູຄືຄຳຖາມທີ່ອອກມາຈາກສ່ວນເລິກຂອງຫົວໃຈວ່າ " ຂ້າແດ່ພຣະເຈົ້າຍັງອີກດົນປານໃດ" ພວກເຮົາທັງຫລາຍກໍມັກຖາມໃນຄຳຖາມດຽວກັນນີ້ຕລອດເວລາ. ອີກດົນປານໃດຄວາມທຸກຍາກຈະຫາຍໄປ, ອີກດົນປານໃດຄວາມຣະທົມຂົມຂື່ນຈະໝົດໄປແລະຕໍ່ໆໄປ.......ຜູ້ຂຽນເພງສັຣເສີນກ່າວອີກວ່າ "ພຣະອົງຊົງລືມຂ້ານ້ອຍແລ້ວ, ພຣະອົງອ່ວາຍໜ້າໜີຈາກຂ້ານ້ອຍ" ນີ້ຄືຄວາມຮູ້ສຶກທັງຫລາຍທີ່ພວກເຮົາຄິດກັນເມື່ອສັດຕຣູກຳລັງມີອິດທິພົນ. ເຖິງຈະຖາມຫລືຈະກ່າວຢ່າງໃດ ແຕ່ຜູ້ຂຽນເພງສັຣເສີນຍັງລົງທ້າຍດ້ວຍການສັຣເສີນພຣະເຈົ້າ (3:5) ສັຣເສີນໃນຄວາມຮັກໝັ້ນຄົງຂອງພຣະອົງ. ພວກເຮົາອາດຈະບໍ່ເຄີຍສຳຜັດໃນຄວາມຮັກຢ່າງນີ້ ຫລືບໍ່ເຄີຍໄດ້ຍິນຄຳເວົ້າຢ່າງນີ້ມາກ່ອນ ແຕ່ພວກເຮົາກໍພໍເຂົ້າໃຈໄດ້ໃນຄວາມຮູ້ສຶກທີ່ໄດ້ບັລຍາຍອອກມາ.ໃນຊີວິດຂອງລາວແຕ່ຍັງນ້ອຍລາວມີແນວຄິດເອກຊົນແຕ່ວ່າຮູ້ສຶກບໍ່ດີໃຈໃນຄອບຄົວ. ພໍ່ຂອງຂ້ອຍເປັນຄົນຕິດເຫລົ້າຢ່າງໜັກຊຶ່ງເປັນຜົນສະທ້ອນມາສູ່ຄອບຄົວທຸກໆຄືນ. ຫລາຍຄືນທີ່ຂ້າພະເຈົ້ານອນຢູ່ຕຽງແລ້ວຖາມວ່າເປັນຫຍັງພຣະເຈົ້າຈຶ່ງບໍ່ເຮັດສິ່ງໃດສິ່ງນຶ່ງທີ່ຈະຊ່ວຍພວກເຮົາແດ່. ຂ້ອຍຈຳບໍ່ໄດ້ທຸກຢ່າງວ່າວັນນັ້ນຂ້ອຍໄດ້ເວົ້າກັບພຣະເຈົ້າຢ່າງໃດແດ່ ແຕ່ວ່າຂ້ອຍຄິດເຖິງບົດເພັງສັລເສີນ 13:1-5 ຊຶ່ງຝັງໃນໃຈຂອງຂ້ອຍ.

ເພງສັຣເສີນບົດ 13 ນີ້ ຮຽກຮ້ອງໃຫ້ພວກເຮົານຳເອົາຄວາມຮູ້ສຶກຕ່າງໆມາຫາພຣະເຈົ້າ ແມ່ນວ່າຈະເປັນເວລາທີ່ຮ້າຍກາດປານໃດກໍຕາມ. ພຣະເຈົ້າຈະບໍ່ນິ້ງເສີຍແລະຈະບໍ່ໂກດຮ້າຍ ເຖິງແມ່ນເຮົາຈະເວົ້າຕາມອາລົມກໍຕາມ. ຍິ່ງໄປກວ່ານັ້ນພຣະອົງຍັງໃຫ້ຄວາມຫວັງແກ່ເຮົາແລະເສີມພະລັງໃຫ້ດ້ວຍ.

## <u>ຄວາມດີສາມາດນຳເຮົາອອກຈາກຄວາມໂສກເສົ້າໄດ້ບໍ່?</u> (22:1-5, 22-24)

ຄຣິສຕຽນສ່ວນຫລາຍມັກຂໍ້ພຣະຄັມພີເພງສັຣເສີນບົດທີ 22 ເພາະພຣະເຢຊູໄດ້ໃຊ້ຂໍ້ພຣະຄຳນີ້ໃນເວລາຢູ່ເທິງໄມ້ກາງແຂນ (ມທ.27:46; ມກ. 15:34) "ພຣະອົງເຈົ້າ, ພຣະອົງເຈົ້າ, ເປັນຫຍັງພຣະອົງຈຶ່ງທອດຖິ້ມຂ້ານ້ອຍ" ຜູ້ຂຽນມີຄວາມຮູ້ສຶກວ່າພຣະອົງຊົງທອດຖິ້ມ ເຖິງແມ່ນວ່າຈະມີຄວາມໂສກເສົ້າດ້ວຍການກ່າວຫາປານໃດກໍຕາມ ພຣະອົງກໍ

ຍັງຊີງຄວາມບໍຣິສຸດ, ພຣະອົງຈຳເປັນຕ້ອງຖືກຍົກຂຶ້ນສັຣເສີນ.
ຜ່ານມາ ພຣະອົງໄດ້ຊົງຊ່ວຍກູ້ແລະພຣະອົງໄດ້ໃຫ້ຄວາມລອດແກ່ພວກເຂົາ. ຜູ້ຂຽນຍັງລຳພືງລຳພັນເຖິງຄວາມຕ່ຳຕ້ອຍຂອງຕົວວ່າ: ຂ້ານ້ອຍປຽບເຫມືອນຕົວຫນອນ, ຜູ້ຄົນດູຖູກ, ບໍ່ຽວສີບ, ບິດຄາງ, ສັ່ນຫົວໃສ່ວ່າຂ້ານ້ອຍເຊື່ອພຣະເຈົ້າ ໃຫ້ພຣະເຈົ້າຊ່ວຍພວກເຂົາເທາະ (22: 6-8). ພວກເຮົາສມັຍນີ້ກໍຕົກຢູ່ໃນສະພາບທີ່ຫນ້າຫວາດກົວຢ່າງນີ້ເຫມືອນກັນ.
ມາເບິ່ງສະພາບຂອງຜູ້ຂຽນໃນເວລາທີ່ຖືກທອດຖິ້ມລາວມີຄວາມຮູ້ສືກຢ່າງໃດ. ໃນຂໍ້ທີ 14-15 "ຂ້າພຣະອົງຖືກເທອອກເຫມືອນຢ່າງນ້ຳກະດູກທັງຫມົດກໍຫລຸດຫລຸ່ຍໄປ, ຈິດໃຈກໍເຫມືອນຂີ້ເຜີ້ງ, ກຳລັງກໍເຫືອດຫາຍໄປ, ລີ້ນກໍເປັນເຫມືອນວ່າຢູ່ກາງມີດຕັດທີ່ຈະຕັດມັນຂາດໄດ້ທຸກເວລາ" ຄຣິສຕຽນແທ້ມັກຈະເຂົ້າໃຈວ່າການທົດລອງເປັນສິ່ງທີ່ປະເສີດເພື່ອຄວາມເຊື່ອຈະໄດ້ຈະເຣີນຂຶ້ນ ແລະຍັງເປັນຫນ້າທີ່ທີ່ພຣະເຢຊູຊົງມອບຫມາຍໄວ້ໃຫ້.

ການສູ້ຊົນໃນວັຍເດັກຂອງຂ້າພະເຈົ້າເປັນເວລາປະມານ 10 ກວ່າປີ ກ່ຽວກັບພໍ່ຜູ້ຕິດເຫລົ້າ. ເມື່ອຫລຽວກັບຫລັງແລ້ວກໍເຫັນວ່າພຣະເຈົ້າຊົງຊິດຊ່ວຍແລະຊົງນຳເອົາສິ່ງທີ່ດີຫລາຍຢ່າງອອກມາຈາກຄວາມເຈັບປວດນັ້ນ. ສ່ວນຫລາຍແລ້ວກໍແມ່ນພຣະເຈົ້າໄດ້ສົ່ງຄົນມາຊ່ວຍ, ສົ່ງຄຣູມາສິດສອນ, ສົ່ງຜູ້ທີ່ມີຄວາມຮັກມາເຮັດວຽກກັບຄອບຄົວຂອງຂ້າພະເຈົ້າທຸກໆຄົນໄດ້ສິດສອນແລະເປັນຕົວຢ່າງທີ່ດີໃຫ້ແກ່ຂ້າພະເຈົ້າ. ພວກເຂົາເຈົ້າໄດ້ປູກຝັງຄວາມຫວັງໄວ້ໃນຫົວໃຈຂອງຂ້າພະເຈົ້າ. ນີ້ລະຈິ່ງເປັນເຫດຜົນທີ່ເຮັດໃຫ້ຂ້າພະເຈົ້າກັບກາຍມາເປັນຜູ້ປ່າວປະກາດພຣະທັມຂອງພຣະເຈົ້າ.

ການໃຫ້ຄຳພະຍານແບບສັດຊື່ ນຳດວງໃຈມາຫາພຣະເຈົ້າໄດ້.

## <u>ຄຳຖາມ</u>

1. ອ່ານ 2 ຊາມູເອນ 13:1--19:8. ອະທິບາຍຄວາມສັມພັນຣະຫວ່າງດາວິດແລະອັບຊາໂລມ. ແມ່ນຫຍັງທີ່ເຮັດໃຫ້ອັບຊາໂລມເປັນກະບົດຕໍ່ພໍ່ຂອງຕົວເອງ?

2. ເປັນຫຍັງຈິ່ງກ່າວຄຳພະຍານເຣື່ອງຄວາມໂສກເສົ້າແລະຄວາມເຊື່ອໃຫ້ຜູ້ອື່ນຟັງ?

3. ຊີວິດການນະມັສການຂອງດາວິດມີຜົນສະທ້ອນບໍ່ໃນການທີ່ລາວບໍ່ນະມັສການພຣະເຈົ້າຕາມທີ່ຄວນ? ຖ້າມີ, ມີຢ່າງໃດ?

4. ພວກເຮົາຄວນຈະກະທຳຢ່າງໃດຕໍ່ຜູ້ທີ່ມີຄວາມເຊື່ອ ແຕ່ພະຍາຍາມສ້າງຄວາມແຕກແຍກ?

*ດຣ. ບຸນໂຮມ ພົມມະຈັນ*

## ບົດຮຽນທີ 3
## ວາງໃຈໃນຄວາມເປັນຫ່ວງເປັນໃຍຂອງພຣະເຈົ້າ

---

**ຂໍ້ພຣະຄັມພີສໍາລັບບົດຮຽນນີ້:** ເພງສັຣເສີນ 23:1-6; 27:1-6

**ຂໍ້ພຣະຄັມພີສໍາລັບເບື້ອງຫລັງ:** ເພງສັຣເສີນ ບົດທີ 23 ແລະ 27

**ຈຸດສໍາຄັນຂອງບົດຮຽນນີ້:** ເຮົາຄວນວາງໃຈໃນຄວາມເປັນຫ່ວງເປັນໃຍຂອງພຣະເຈົ້າ ແມ່ນວ່າວິກິດການເລວຮ້າຍຈະເກີດຂື້ນກໍຕາມ.

**ຄໍາຖາມເພື່ອສໍາຣວດ:** ເຮົາຄວນວາງໃຈຄືແນວໃດ?

**ຈຸດປະສົງຂອງບົດຮຽນ:** ເພື່ອຢັ້ງຢືນເຖິງການວາງໃຈໃນພຣະເຈົ້າ ເວລາມີວິກິດການເກີດຂື້ນ

**ເນັ້ນຫນັກເຖິງການສຶກສາແລະການກະທໍາ**

- ຢັ້ງຢືນວ່າພຣະທັມຄັມພີມີອໍານາດໃນການນໍາພາຊີວິດ ແລະການປ່າວປະກາດດ້ວຍ
- ເສີມຂຍາຍການຈະເຣີນເຕີບໂຕ, ເຄື່ອນໄຫວໃນຄວາມເຊື່ອ
- ແບ່ງປັນພຣະກິດຕິຄຸນແກ່ທຸກໆຄົນ

### ຄໍານໍາ

ນາຍ ທິມ ຊຶ່ງເຄີຍຍືນກົງ ກິນອາຫານເຫມືອນກັບຄົນຫນຸ່ມໆກິນ, ແລະບໍ່ເຄີຍຂາດການໄປໂບດຫລືລາຍການຕ່າງໆຂອງໂບດເລີຍ. ເມື່ອມີຄົນຖາມຊາຍສູງອາຍຸຄົນນີ້ເຖິງເຄັດລັບ (80 ກວ່າປີ) ລາວມັກຈະຕອບວ່າ " ຂ້ອຍພະຍາຍາມຈະເຮັດໃຫ້ຖືກຕ້ອງແລະວາງໃຈໃນພຣະເຈົ້າ "

ພາຍຫລັງຕໍ່ມາ, ສຸຂພາບຂອງລາວກໍຊຸດໂຊມລົງແລະກໍເຊື່ອມໂຊມລົງຈົນເກືອບເອົາຊີວິດບໍ່ລອດ. ນາຍທິມໄດ້ນັ່ງເທິງຕັ່ງ (Wheelchair ). ຊີວິດຂອງລາວຕ້ອງສັບສົນວຸ້ນວາຍຄືຕ້ອງກິນຢາເປັນປະຈໍາ ແລະແພດສັ່ງໃຫ້ລົດຄວາມອ້ວນ. ສຽງເວົ້າກໍປ່ຽນແປງເປັນສຽງແຫບໆ ເກືອບບໍ່ໄດ້ຍິນ.

ຄັ້ງສຸດທ້າຍທີ່ຂ້າພະເຈົ້າໄດ້ເຫັນ ທິມ ຂ້າພະເຈົ້າກໍຈັບມືລາວແລະຖາມສະບາຍດີ ແລະຖາມເຖິງຄວາມເປັນຢູ່ທິມຕອບວ່າ: "ຂ້ອຍພະຍາຍາມຈະເຮັດໃຫ້ຖືກຕ້ອງແລະວາງໃຈໃນພຣະເຈົ້າ " ຄໍາເວົ້າຂອງທິມເຫມືອນກັບວ່າໄດ້ບັນທຶກໄວ້ໃນພຣະທັມເພງສັຣເສີນ.

**ພຣະເຈົ້າຊົງເປັນຜູ້ລ້ຽງແກະທີ່ດີ** (23:1-6)

ຄັ້ງນຶ່ງຂ້າພະເຈົ້າໄດ້ໄປຢ້ຽມຢາມຄົນເຈັບ (ໃກ້ຈະຕາຍແລ້ວ) ທີ່ໂຮງພະຍາບານ, ຂ້າພະເຈົ້າເຫັນສາຍນໍ້າທະເລ, ສາຍຊ່ວຍຫາຍໃຈ, ສາຍວັດແທກລະບົບການເດີນຂອງເລືອດແລະອື່ນໆຕິດຕໍ່ກັບຮ່າງກາຍຂອງລາວ. ຂ້າພະເຈົ້າບໍ່ເຄີຍພົບຊາຍຄົນນີ້ຈັກເທື່ອແຕ່ກໍຮູ້ດຽວນີ້ວ່າຊີວິດຂອງລາວຍັງເຫລືອຫນ້ອຍເຕັມທີ ແລະກໍຢາກຮູ້ວ່າລາວມີສິ່ງໃດບໍ່ທີ່ພົວພັນກັບ ຄຣິສຕຽນ. ລາວເປັນນັກທຸຣະກິດຕາມທີ່ຮູ້ມາ. ເວລາທີ່ຂ້າພະເຈົ້າກ້າວເຂົ້າໄປໃນຫ້ອງລາວມືນຕາກວ້າງເບິ່ງຂ້າ

ພະເຈົ້າ.

"ເຈົ້າເປັນນັກເທດແມ່ນບໍ່? ລາວຖາມຂຶ້ນ. ຂ້າພະເຈົ້າກໍຍອມຮັບທັນທີ. ລາວກ່າວຕໍ່ໄປອີກວ່າ : ເຈົ້າໄດ້ເອົາພຣະຄັມພີມານຳບໍ່? ຂ້າພະເຈົ້າກໍຈົກເອົາພຣະຄັມພີນ້ອຍໆ ຊະນິດຕິດຖົງອອກມາ. ຂ້ອຍຢາກໃຫ້ເຈົ້າຊອກຫາຂໍ້ຕອນທີ່ເລີ້ມຕົ້ນວ່າ "ພຣະເຈົ້າຊົງລ້ຽງດູຂ້າພະເຈົ້າ" ຂ້ອຍບໍ່ຮູ້ວ່າຢູ່ບ່ອນໃດ.

ຂ້ອຍຄິດວ່າເຈົ້າຢາກຟັງບົດເພງສັຣເສີນບົດທີ 23 ຂ້ອຍຕອບ. ແລ້ວຂ້ອຍກໍອ່ານເພງສັຣເສີນໃຫ້ລາວຟັງ. ລາວເຫັ້ງຕົວລົງຕຽງແລະກໍກ່າວວ່າ ເອີ້ແມ່ນບ່ອນນີ້ລະ. ຂອບໃຈ.

ປະສົບການຕອນນີ້ເຮັດໃຫ້ຂ້າພະເຈົ້າຊາບຊຶ້ງໃນໃຈຫລາຍເພາະວ່າເພງສັຣເສີນບົດທີ 23 ນີ້ມີອິດທິພົນໃນໃຈຂອງຄົນທັງຫລາຍທັງຄົນໃນໂບດແລະຄົນນອກໂບດ. ຫລາຍຄົນພວກເຮົາອາດຈະຂື້ນໃຈໄດ້ໃນຂໍ້ທຳອິດແຕ່ຖ້າພວກເຮົາຈະທ່ອງທັງຫມົດບົດໄດ້ກໍບໍ່ເປັນຫຍັງ.

ເພງສັຣເສີນບົດ23 ຂື້ນກັບຫມວດສັຣເສີນໃນການວາງໃຈ, ເປັນຫມວດທີ່ສັຣເສີນການເປັນຫ່ວງເປັນໃຍຂອງພຣະເຈົ້າຕໍ່ພວກເຮົາ. ຫົກຂໍ້ທັງຫມົດແມ່ນເວົ້າເຖິງການກະທຳຂອງພຣະເຈົ້າຕໍ່ຄົນຂອງພຣະອົງ.

ຜູ້ລ້ຽງແກະທີ່ດີຈະຮັກສາເຝົ້າດູແກະຂອງຕົນເອງ. ລາວຈະຮູ້ຈັກແກະຂອງລາວແລະຈະປະຕິບັດກັບແກະແຕ່ລະຕົວຢ່າງໃດ. ກາງຄືນມາຜູ້ລ້ຽງແກະຈະນອນຂວາງປະຕູເພື່ອກັນສັດຕຣູໄວ້. ເມື່ອເຫັນຮູບພາບນີ້ແລ້ວເຮົາຈຶ່ງເຫັນໄດ້ວ່າເຈົ້າຂອງແກະແມ່ນສ່ຽງຕໍ່ພັຍ ສ່ຽງຕໍ່ຄວາມຕາຍເພື່ອແກະຂອງຕົວເອງບໍ່ວ່າກາງເວັນຫລືກາງຄືນ.

ເຈົ້າຂອງແກະຈະເຮັດຢ່າງໃດອີກແດ່? ນຳໄປສູ່ທົ່ງຫຍ້າອັນຂຽວສົດ. ໃນປະເທດປາແລສໄຕສມັຍນັ້ນຫາບ່ອນທີ່ມີຫຍ້າຂຽວສົດຍາກເພາະສ່ວນຫລາຍແລ້ວຈະເປັນທະເລຊາຍ. ນຳໄປດື່ມນ້ຳແດນສະງົບຫມາຍຄວາມວ່າບ່ອນທີ່ບໍ່ມີຢາພິດ, ບ່ອນທີ່ບໍ່ມີແຂ້, ບ່ອນທີ່ບໍ່ມີສັດຕ່າງໆມາຣົບກວນ. ຜູ້ລ້ຽງແກະຈະຫາສະຖານທີ່ທີ່ເຫມາະສົມກັບແກະຂອງຕົນເພື່ອຈະໄດ້ພັກຜ່ອນຢ່າງດີ. (23:2)

ໃນຂໍ້ 3 ກ່າວວ່າ " ຊົງຟື້ນຈິດວິນຍານຂອງຂ້າພະເຈົ້າ" ຄຳວ່າຈິດວິນຍານພາສາລາວຂອງພວກເຮົາກໍຫມາຍຄວາມວ່າຍັງມີຊີວິດຢູ່ ແລະຊີວິນັ້ນເປັນຊີວິດທີ່ຢູ່ໃນທາງຊອບທັມຂອງພຣະເຈົ້າ. ຜູ້ຂຽນມີຈຸດປະສົງຢາກໃຫ້ພວກເຮົາວ່າບໍ່ແມ່ນແຕ່ວັດຖຸສິ່ງຂອງທີ່ຈະລ້ຽງດູເທົ່ານັ້ນ ແຕ່ຝ່າຍຈິດວິນຍານພຣະອົງກໍຍັງຊົງນຳພາແລະເຮັດໃຫ້ມີຊີວິດດ້ວຍ. ທ່ານອາດຈະເຄີຍໄດ້ຍິນຄົນທີ່ໄດ້ກິນດີຢູ່ດີແຕ່ຍັງຈົ່ມວ່າ "ໂອຍ" ຢູ່ໄປເຫມືອນບໍ່ມີຊີວິດຊີວາຫຍັງເລີຍ, ຄວາມຊື່ນຊົມຍິນດີທີ່ແທ້ຈິງມັນຢູ່ໃສ. "ແມ່ນວ່າຂ້າພະອົງຈະເດີນຕາມຫຸບເຂົາເງົາມັດຈຸຣາດ ຂ້າພຣະອົງຈະບໍ່ຢ້ານກົວສິ່ງໃດໆເລີຍ" ຂໍ້ 4. ຢູ່ໃນຫຸບເຂົາຊື່ງມີແຕ່ຄວາມມືດບໍ່ສາມາດຜ່ານເຂົ້າໄປໄດ້ ມີອັນຕະລາຍຫລາຍປະການເຊັ່ນ ສັດເດັຍຣະສານ, ມະຫາໂຈນ...ພຣະອົງຍັງຊົງໃຊ້ໄມ້ຄ້ອນຂອງພຣະອົງປົກປ້ອງ ຖ້າແກະຕົວໃດຫາກຕົກຢູ່ໃນຂຸມພຣະອົງຈະຊົງໃຊ້ເຄື່ອງມືພຣະອົງຍົກຂຶ້ນມາ. ສິ່ງສຳຄັນທີ່ສຸດກໍຄື ຜູ້ລ້ຽງແກະຈະຢູ່ກັບແກະຂອງຕົນຕລອດເວລາ. ຄຣິສຕຽນເຮົາມັກຈະໄດ້ຍິນພຣະທັມຕອນນີ້ ໃນພິທີສົບ ເພາະຈະຫນູນໃຈຜູ້ທີ່ມີຊີວິດຢູ່ວ່າຜູ້ທີ່ເສັຍຊີວິດໄປນັ້ນ ແມ່ນໄປຢູ່ໃນການດູແລຢ່າງດີຂອງພຣະເຈົ້າແລ້ວ.

ຜູ້ຂຽນ ໄດ້ອ່າຍໄປຫາການຈັດຕຽມແລະການເປັນຫ່ວງເປັນໃຍນີ້ວ່າ "ພຣະອົງຊົງຕຽມສຳຫລັບໃຫ້ຂ້າພຣະອົງ" ເຫມືອນກັບວ່າຈະເດີນທາງ ພຣະອົງຊົງຈັດຕຽມເພາະພຣະອົງຊົງຮູ້ດີວ່າການເດີນທາງຕ້ອງພົບຄວາມຫຍຸ້ງຍາກຫຼາຍປະການໃນທະເລຊາຍກໍຍັງມີສັດຕຣູຫລາຍຢ່າງ ໂດຍສະເພາະຢ່າງຍິ່ງແມ່ນການຫິວນ້ຳ ຜູ້ຂຽນຈຶ່ງຂຽນວ່າຂັນນ້ຳ ຂອງພຣະອົງຈະເຕັມລົ້ນຢູ່ຕລອດເວລາ ຖ້າເຮົາຫາກອີງໃສ່ພຣະອົງ, ເຊື່ອໃນພຣະອົງ ແລະວາງໃຈໃນຄວາມເປັນຫ່ວງເປັນໃຍຂອງພຣະອົງເຮົາຈະບໍ່ຢ້ານກົວສິ່ງໃດເລີຍ.

ຂໍ້ 6 ຜູ້ຂຽນສະລຸບດ້ວຍການຢັ້ງຢືນຢ່າງແຂງຂັນວ່າ ຄວາມຮັກແລະຄວາມດີຂອງພຣະເຈົ້າຈະຕິດຕາມໄປທຸກເວລາ ແລະທຸກຫົນທຸກແຫ່ງ. ພຣະເຈົ້າຊົງຊາບແລະຊົງຈັດຕຽມສຳລັບຄວາມຕ້ອງການຂອງທຸກໆ ຄົນ ແລະການນຳພາໃຫ້ທຸກຄົນໃນການເດີນທາງເຂົ້າໄປໃນພຣະນິເວດຂອງພຣະເຈົ້ານີ້.

"ຂ່າວດີ ສຳລັບຄຣິສຕຽນທຸກຄົນກໍຄືວ່າ ເຮົາຕ້ອງເຮັດດ້ວຍຕົວເຮົາເອງ ເຮົາຕ້ອງອີງໃສ່ພຣະເຈົ້າ ແລະຂ້າພະເຈົ້າກໍຮູ້ດີວ່າພຣະເຈົ້າຊົງຊ່ວຍຂ້າພະເຈົ້າຕລອດເວລາ"

## <u>ພຣະເຈົ້າຊົງເປັນທີ່ກຳບັງ</u> (27:1-6)

ເພງສັຣເສີນ 27:1-6 ກໍເຫມືອນກັນ ຕົກຢູ່ໃນເພັງສັຣເສີນຂອງຄວາມວາງໃຈໃນພຣະເຈົ້າ. ຜູ້ຂຽນໄດ້ວາງຫລາຍຮູບພາບອອກມາບອກວ່າລາວບໍ່ມີຊີວິດທີ່ຂີ້ຢ້ານຕໍ່ສັດຕຣູຂອງລາວ ແລະລາວຈະກ້າຕໍ່ສູ້ກັບພວກເຂົາໄດ້.

ລາວບອກວ່າ ພຣະເຈົ້າຊົງເປັນແສງສະຫວ່າງແລະເປັນຄວາມລອດຂອງລາວ (27:1) ຄວາມມືດເຮັດໃຫ້ຫົນທາງມືດຕັນແລະນຳໄປສູ່ຄວາມຫາຍະນະ. ພວດເຮົາອາດເຄີຍມີປະສົບການໃນຄວາມມືດ ແມ່ນວ່າຈະເປັນສະຖານທີ່ທີ່ເຮົາເຄີຍຢູ່ກໍຕາມເຮົາກໍຍັງຈະຢ້ານຢູ່. ຄວາມຢ້ານກົວແມ່ນຢູ່ໃນຄວາມມືດຢູ່ແລ້ວ. ຄວາມສະຫວ່າງເທົ່ານັ້ນຈຶ່ງຈະສາມາດທຳລາຍຄວາມມືດໄດ້. ຖ້າມີຄວາມສະຫວ່າງແລ້ວເຮັດອັນໃດກໍໄດ້ເຫັນທຸກສິ່ງຈະແຈ້ງ.

ພຣະເຈົ້າເປັນທີ່ກຳບັງແຫ່ງຊີວິດຂອງຂ້າພະເຈົ້າ. ທຸກຄົນຮັກສາຊີວິດຂອງຕົວເອງຕ້ອງຊອກຫາອາວຸດມາໄວ້ປ້ອງກັນ, ຕ້ອງຊອກຫາເງິນມາເພື່ອຊື້ຈ່າຍ, ຕ້ອງຫາສະຖານທີ່ດີໆ ເພື່ອຈະໄດ້ພັກຜ່ອນ ແຕ່ປານນັ້ນມະນຸດກໍຍັງຢ້ານຢູ່. "ພຣະເຈົ້າເປັນທີ່ກຳບັງອັນເຂັ້ມແຂງແຫ່ງຊີວິດ" (27:1)

ພຣະທັມຕອນນີ້ເຮັດໃຫ້ຂ້າພະເຈົ້າຄິດເຖິງຕອນທີ່ກະສັດດາວິດປະເຊີນຫນ້າກັບການກະບົດຂອງລູກຊາຍ. (2 ຊາມູເອນ ບົດ 13 ເຖິງ ບົດ 15; ແລະເພງສັຣເສີນຂອງບົດຮຽນທີ່ຜ່ານມາ)

ຜູ້ຂຽນຂໍຮ້ອງພວກເຮົາໃຫ້ເພິ່ງພຣະເຈົ້າທຸກເວລາ, ແມ່ນວ່າຈະຊື່ນຊົມຫລືໂສກເສົ້າເພາະວ່າລາວມີປະສົບການແລ້ວ. ບໍ່ມີສິ່ງອື່ນໃດນອກຈາກພຣະເຈົ້າ. (27:4-6)

ຂໍ້ 7-12 ຜູ້ຂຽນຫັນມາຫາການຫລິ້ນຂອງລີລາການຂຽນ. ແຕ່ທັງຫມົດກໍແມ່ນຂໍຮ້ອງໃຫ້ພຣະອົງຊົງຟັງສຽງແລະຕອບຄຳທູນຂໍ.

ຂໍ້ 13-14 ຄວາມວາງໃຈເຊື່ອຫມັ້ນໃນພຣະເຈົ້າຢ່າໄດ້ເລື່ອນລາງ ຈົ່ງລໍຄອຍ, ຈົ່ງເຂັ້ມແຂງ, ຈົ່ງກ້າຫານແລະອົກອັນນິ່ງຈົ່ງລໍຄອຍ.

**<u>ຄຳຖາມ:</u>**

1. ຂໍ້ພຣະຄັມພີຕອນໃດທີ່ທ່ານມັກທີ່ສຸດທ່ານຢາກຈະໃຫ້ອາຈານຂອງທ່ານອ່ານໃຫ້ຟັງ ຫລືເວລາທ່ານເສັຍຊີວິດ? ດ້ວຍເຫດໃດ?

2. ຖ້າທ່ານຄິດວ່າຢາກຈະປ່ຽນແປງຮູບພາບໃນເພງສັຣເສີນ 23 ນີ້ ທ່ານຈະໃຫ້ຮູບພາບແບບໃດ? ເປັນຫຍັງ

3. ເພງສັຣເສີນ 27 ມີທັງຫມູນໃຈໃຫ້ເຊື່ອແລະບໍ່ສົງສັຍ. ທ່ານເດເຄີຍເປັນຢ່າງນີ້ຫລືບໍ່? ຖ້າບໍ່ເຄີຍເປັນທ່ານເຄີຍຮູ້ຜູ້ທີ່ເປັນຢ່າງນີ້ຫລືບໍ່?

4. ທ່ານເຄີຍເວົ້າໃຫ້ຜູ້ໃດຟັງແດ່ບໍ່ ວ່າ " ຂ້ອຍຈະຢູ່ໃນພຣະນິເວດຂອງພຣະເຈົ້າສືບໆໄປເປັນນິດ " ຖ້າບໍ່ເວົ້າເປັນຫຍັງຈຶ່ງບໍ່ເວົ້າ?

*ດຣ. ບຸນໂຮມ ພົມມະຈັນ*

# ບົດຮຽນທີ 4
# ທີວກະຫາຍຫາພຣະເຈົ້າ

---

**ຂໍ້ພຣະຄັມພີສຳລັບບົດຮຽນ:** ເພງສັຣເສີນ 42-43
**ຂໍ້ພຣະຄັມພີສຳລັບເບື້ອງຫລັງ:** ເພງສັຣເສີນ 42-43
**ຈຸດສຳຄັນພິເສດຂອງບົດຮຽນນີ້:** ມີຄວາມຮູ້ສຶກວ່າພຣະເຈົ້າຊົງສະຖິດຢູ່ນຳເປັນສິ່ງຈຳເປັນຫລາຍຕໍ່ຊີວິດ ເຊິ່ງຊີວິດທີ່ມີຄວາມຮູ້ສຶກວ່າພຣະອົງຊົງບໍ່ໄດ້ສະຖິດຢູ່ນຳແລະຢູ່ຮ່າງໄກເຮັດໃຫ້ເກີດຄວາມທຸກໃຈ.
**ຄຳຖາມເພື່ອການສຳຣວດ:** ຝູງຊົນສ່ວນຫລາຍໃນສມັຍນີ້ຄອງຄອຍຫາພຣະເຈົ້າສະຖິດຢູ່ນຳພວກເຂົາຫລືບໍ່?
**ຈຸດປະສົງຂອງບົດຮຽນນີ້:** ເພື່ອບອກໃຫ້ຮູ້ວ່າການດຳຣົງຊີວິດທີ່ປາສຈາກພຣະເຈົ້າ ມັນຄ້າຍຄືຕົວກວາງສແວງຫານ້ຳເຢັນໃນບຶງໜອງນ້ຳ, ບຶງບໍ່ມີນ້ຳມັນຄ້າຍຄືຄຣິສຕຽນບໍ່ມີພຣະເຈົ້າ.

**ຫນ້າທີ່ສຳຄັນຂອງຄຣິສຕຽນທຸກຄົນໃຫ້ເຂົ້າໃຈວ່າ**

- ພຣະຄັມພີເທົ່ານັ້ນເປັນຣິດອຳນາດນຳພາທາງແຫ່ງຊີວິດໃນການເຮັດພາຣະຫນ້າທີ່ການຮັບໃຊ້.
- ເພື່ອເສີມຂຍາຍຄວາມເຊື່ອໃຫ້ເຂັ້ມແຂງ

## ຄຳນຳ

ຝູງຊົນທີ່ມີຄວາມເຊື່ອຈະເກີດຄວາມເຈັບປວດໃນຈິດໃຈຫລາຍ ເມື່ອພວກເຂົາບໍ່ສາມາດມີຄວາມຮູ້ສຶກວ່າພຣະເຈົ້າຊົງສະຖິດຢູ່ນຳພວກເຂົາ. ພຣະທັມເພງສັຣເສີນບົດທີ 42-43 ເຮັດໃຫ້ເຫັນສະພາບການດັ່ງນັ້ນ ເພື່ອການນະມັສການແລະຫນູນຈິດໃຈພວກເຮົາໃຫ້ມອບຄວາມຫວັງໄວ້ກັບພຣະເຈົ້າ.

**ເພງຄ່ຳຄວນຫາພຣະເຈົ້າຄັ້ງທີນຶ່ງ** (42:1-4)

ພຣະທັມເພງສັຣເສີນບົດທີ 42 ແລະ 43 ມີເຣື່ອງລາວທຳນອງດຽວກັນ ທາງທີ່ດີແລ້ວຈະຕ້ອງອ່ານຕໍ່ກັນຈຶ່ງຈະເຂົ້າໃຈເຣື່ອງລາວຂອງພຣະທັມຕອນນີ້. ຜູ້ຂຽນໄດ້ເລົ່າຄວາມທຸກຂອງລາວສາມຄັ້ງ ແຕ່ລະເທື່ອລາວຈະມ້ວນທ້າຍດ້ວຍຄຳເວົ້າອັນດຽວກັນ. ນັກຮຽນຮ້ອງຂໍໃຫ້ຂ້າພະເຈົ້າບັນລະຍາຍຄຳກອນຕອນນີ້ໃຫ້ເປັນຂໍ້ຄວາມສັ້ນໆໃຫ້ລາວ. ຂ້າພະເຈົ້າຕອບລາວວ່າ "ຜູ້ຂຽນເພງສັຣເສີນໄດ້ທູນຕໍ່ພຣະເຈົ້າສາມເທື່ອວ່າ ເຫດການທີ່ເກີດຂຶ້ນກັບລາວນັ້ນຮ້າຍຫລາຍ. ແຕ່ລະເທື່ອ ຫລັງຈາກລາວທູນຕໍ່ພຣະເຈົ້າແລ້ວ ລາວກໍບອກລາວເອງວ່າ ເຖິງຢ່າງໃດກໍຕາມໃຫ້ໄວ້ວາງໃຈກັບພຣະເຈົ້າ."

ຜູ້ຂຽນເພງສັຣເສີນໄດ້ສົມທຽບໃຫ້ເຫັນວ່າ ລາວຕ້ອງການພຣະເຈົ້າເຫມືອນກັບກວາງທີວນ້ຳໃນດິນແດນອັນແຫ້ງແລ້ງ. ສັດເຫລົ່ານີ້ເກີດຄວາມກັງວົນໃນເມື່ອມັນພໍ້ຊຸມນ້ຳແຫ້ງໄປ. ຜູ້ຂຽນເພງສັຣເສີນມີຄວາມຮູ້ສຶກຢ່າງດຽວກັນ. ລາວປາຖນາຫາ "ພຣະເຈົ້າອົງຊົງພຣະຊົນຢູ່" (ເພງສັຣເສີນ 42:2).

*"ເວລາໃດຫນໍຂ້ານ້ອຍຈຶ່ງຈະໄດ້ໄປນະມັສການຕໍ່ພຣະພັກພຣະອົງ"* ລາວໄດ້ພັດບ້ານເມືອງຂອງລາວແລະພຣະວິຫານທີ່ລາວເຄີຍໄປນະມັສການ ຫລືວ່າລາວຖືກຜັກຫນີບໍ່ໃຫ້ເຂົ້າໄປໃນພຣະວິຫານຍ້ອນວ່າລາວມີພຍາດຂີ້ທູດກໍໄດ້. ເຖິງຢ່າງໃດກໍຕາມ ລາວຄິດເຖິງພຣະວິຫານຂອງພຣະເຈົ້າ ແລະລາວທວນຄິດຢູ່ວ່າດົນປານໃດຫນໍລາວຈຶ່ງຈະໄດ້ກັບໄປ

ນະມັສການພຣະອົງອີກ. ລາວອຸກໃຈຫລາຍ ລາວຮ້ອງໄຫ້ທັງກາງເວັນແລະກາງຄືນ ຄຳເຂົ້າຂອງລາວປົນນ້ຳຕາ.

ຄົນອື່ນໆພາກັນຫົວຂວັນເຍາະເຍີ້ຍພຣະເຈົ້າຂອງລາວ ຈຶ່ງເພີ້ມຄວາມເຈັບປວດໃຫ້ລາວຕື່ມອີກ. ພວກເຂົາເຄີຍເຫັນວ່າລາວມີຄວາມໝັ້ນໃຈໃນພຣະເຈົ້າ. ລາວອາດຈະເຄີຍຊັກຊວນພວກເຂົາໃຫ້ໄວ້ວາງໃຈເຊື່ອພຣະເຈົ້າ. ບັດນີ້ ພວກເຂົາເຫັນວ່າລາວເປັນເຫມືອນກັບຄົນສິ້ນຫວັງ ແລະບໍ່ເຫັນວ່າມີຫຍັງຜໍຈະຊ່ອຍລາວໃຫ້ຊື່ນຊົມຍິນດີອີກ. ພວກເຂົາຈຶ່ງຖາມລາວວ່າ "ພຣະເຈົ້າຂອງເຈົ້າຢູ່ໃສ?" ຄຳຖາມດັ່ງກ່າວເປັນຄຳເວົ້າທີ່ເຮັດໃຫ້ຜູ້ທີ່ເຊື່ອມີຄວາມຊ້ຳຊອກໃຈຫລາຍ.

ເມື່ອລາວຄິດເຖິງອະດີດທີ່ຜ່ານມາ ລາວເກີດຄວາມທຸກໃຈຫລາຍຂຶ້ນ. ລາວເຄີຍນະມັສການພຣະເຈົ້າກັບຄົນອື່ນໆໃນພຣະວິຫານ ລາວມີຄວາມສຸກດ້ວຍການຮ້ອງເພງແລະໂຮຮ້ອງສັຣເສີນພຣະເຈົ້າ. ລາວເຄີຍເປັນຜູ້ນຳພາໃນການນະມັສການໃນພຣະວິຫານລາວຄົງຈະເຄີຍເປັນຢູ່ໃນຄະນະປະໂຣຫິດ. ປະສົບການທີ່ມີຄວາມສຸກໃນການນະມັສການພຣະເຈົ້າທີ່ຜ່ານມາໄດ້ສູນເສັຽໄປ. ລາວຈຶ່ງມີຄວາມທຸກໃຈທີ່ບໍ່ມີໂອກາດຢ່າງນັ້ນອີກ.

<u>ທົບທວນດ້ວຍຄວາມຫວັງຕໍ່</u> (42:5)
ໃນບໍ່ທັນໃດນັ້ນ ຜູ້ຂຽນເພງສັຣເສີນເກີດມີຄວາມຫວັງຂຶ້ນມາໃຫມ່. ລາວຖາມຕົວເອງວ່າ *"ເປັນຫຍັງຂ້ານ້ອຍຈຶ່ງໂສກເສົ້າ? ເປັນຫຍັງຂ້ານ້ອຍຈຶ່ງທຸກລຳບາກ?"* ລາວໄດ້ປອບໃຈຕົວເອງ ພາສາອັງກິດເອີ້ນວ່າ (self talk) ເວົ້າຜູ້ດຽວ. ນັກ
ວິຊາການຝ່າຍຈິຕວິທະຍາໄດ້ຫນູນໃຈຜູ້ທີ່ມີຄວາມໂສກເສົ້າໃຫ້ໃຊ້ວິທີການນີ້ ຄືໃຫ້ກຳລັງໃຈຕົວເອງ ແລະເບິ່ງໄປໃນທາງບວກ (positive talk). ທ່ານເຄີຍໃຫ້ກຳລັງໃຈຕົວຂອງທ່ານເອງຫລືບໍ່?
ຜູ້ຂຽນເພງສັຣເສີນໄດ້ປອບໃຈຕົວລາວ ເອງວ່າ <u>ເບິ່ງເຫມືອນກັບວ່າຂ້ານ້ອຍບໍ່ມີຄວາມຫວັງອັນໃດເລີຍ ແຕ່ຄວາມຫວັງຂອງຂ້ານ້ອຍມອບໄວ້ກັບພຣະເຈົ້າ ແລະຂ້ານ້ອຍຈະບໍ່ປະການສັຣເສີນພຣະອົງ. ເພາະວ່າ ພຣະອົງຊົງເປັນພຣະຜູ້ຊ່ອຍໃຫ້ພົ້ນພັຍ ແລະພຣະອົງຊົງເປັນ</u>
<u>ພຣະເຈົ້າຂອງຂ້ານ້ອຍ.</u>

ການທົບທວນດ້ວຍຄວາມຫວັງຂອງລາວບົ່ງບອກໃຫ້ເຫັນວ່າ ການຕັດສິນໃຈໃນການເດີນພັນຊີວິດກັບພຣະເຈົ້າ ແມ່ນຄວາມຕັ້ງໃຈບໍ່ແມ່ນຂຶ້ນຢູ່ກັບຄວາມຮູ້ສຶກ. ຕາມຄວາມຈິງແລ້ວ ບໍ່ວ່າຄວາມຮູ້ສຶກຂອງພວກເຮົາຈະເປັນຢ່າງໃດກໍຕາມພຣະເຈົ້າຊົງຫ່ວງໃຍພວກຮົາຢູ່ສເມີ. ບາງມື້ແສງແດດແຈ່ມໃສທົ່ວໃຕ້ຟ້າ ແຕ່ຄວາມຮູ້ສຶກຂອງພວກເຮົາມືດມົນແລະເສົ້າຫມອງເຫມືອນດັ່ງຂີ້ເຝື້ອມາບັງແສງແດດໃນມື້ນັ້ນ. ຄວາມຮູ້ສຶກຂອງພວກເຮົາບໍ່ໄດ້ປ່ຽນສະພາບຂອງຄວາມຈິງ. ຕາເວັນກໍຍັງສ່ອງແສງຢູ່ ລາວຮູ້ແລ້ວວ່ານີ້ແມ່ນຄວາມຈິງແທ້. ດັ່ງນັ້ນຄວາມຮູ້ສຶກຂອງລາວຢູ່ໃນສະພາບໂສກເສົ້າຫລາຍປານໃດກໍຕາມ ແຕ່ລາວມີຄວາມຫວັງໃນສິ່ງທີ່ດີຈະຕາມມາ.

<u>ເພງຄ່ຳຄວນຫາພຣະເຈົ້າຄັ້ງທີສອງ</u> (42:6-10)
ຄວາມຮູ້ສຶກນັ້ນສຳຄັນແທ້. ຫລັງຈາກຜູ້ຂຽນເພງສັຣເສີນໄດ້ປະກາດວ່າລາວໄດ້ຕັດສິນໃຈຝາກຄວາມຫວັງໄວ້ກັບພຣະເຈົ້າ. ຕໍ່ມາບໍ່ດົນປານໃດ ຈິດໃຈຂອງລາວກໍເກີດຄວາມໂສກເສົ້າອີກ. ເຖິງແມ່ນວ່າລາວຕັດສິນໃຈເຊື່ອວ່າພຣະເຈົ້າຊົງຢູ່ນຳລາວ ແຕ່ລາວບໍ່ສາມາດທີ່ຈະປະຕິເສດຄວາມເຈັບປວດໃນຈິດໃຈຂອງລາວ.

ລາວມີຄວາມຮູ້ສຶກວ່າພຣະເຈົ້າແລະລາວຢູ່ໄກກັນຄືນລະຟາກນ້ຳ ຈາກແມ່ນ້ຳຈໍແດນ ຫນ້າຜາສູງຂອງພູເຮໂມນ ແລະຈາກພູມີຊາ. ເມື່ອຄວາມຮູ້ສຶກຢ່າງນັ້ນເກີດຂຶ້ນ ຫົວໃຈຂອງລາວແຫນ້ນຂຶ້ນມາແລະອຸກອັ່ງແທບຈະຂາດ. ພຣະເຈົ້າທີ່ລາວເຄີຍນະມັສການບໍ່ໄດ້ຢູ່ນຳລາວອີກ ເນື່ອງຈາກວ່າລາວຢູ່ຫ່າງໄກຈາກພຣະວິຫານທີ່ລາວເຄີຍໄປນະມັສການ.

ແມ່ນແຕ່ສຽງຂອງນ້ຳຕົກຕາດໃນພູເຂົາຕ່າງໆກໍເຮັດໃຫ້ລາວຮູ້ສຶກມີຄວາມເຈັບປວດ ພ້ອມທັງສຽງດັງສນັ່ນຫວັ່ນໄຫວ "ມັນເປັນເຫມືອນກະແສຄື້ນແຫ່ງຄວາມເສັຽໃຈ ຊຶ່ງໄຫລຖ້ວມວິນຍານຂອງຂ້ານ້ອຍ" (42:7).

ເບິ່ງເຫມືອນກັບວ່າຜູ້ຂຽນເພງສັຣເສີນໄດ້ທູນຂໍແລະທູນຖາມພຣະເຈົ້າຕໍ່ພຣະເຈົ້າ (42:8-9) ລາວທວງຖາມຫນ້າທີ່ຮັບຜິດຊອບຂອງພຣະເຈົ້າໂດຍກ່າວວ່າ: ຫນ້າທີ່ຂອງພຣະອົງຈະຕ້ອງເຮັດໃຫ້ຂ້ານ້ອຍຮູ້ສຶກຄວາມຮັກຂອງພຣະອົງ ແລະຮູ້ສຶກວ່າພຣະອົງຊົງສະຖິດຢູ່ກັບຂ້ານ້ອຍ.

**ທົບທວນດ້ວຍຄວາມຫວັງຕໍ່** (42:11)

*"ເປັນຫຍັງຂ້ານ້ອຍຈຶ່ງໂສກເສົ້າ? ເປັນຫຍັງຂ້ານ້ອຍຈຶ່ງທຸກລຳບາກ ຂ້ານ້ອຍຂໍມອບຄວາມຫວັງໄວ້ກັບອົງພຣະເຈົ້າ ແລະຂ້ານ້ອຍຍັງຈະສັຣເສີນພຣະອົງພຣະຜູ້ຊ່ອຍໃຫ້ພົ້ນພັຍແລະພຣະເຈົ້າຂອງຂ້ານ້ອຍ"* (ຂໍ້ 11). ເປັນຫຍັງຂ້ານ້ອຍຈຶ່ງໂສກເສົ້າ? ເປັນຫຍັງຂ້ານ້ອຍຈຶ່ງທຸກລຳບາກ? ເປັນຄຳຖາມທີ່ເຮົາທຸກຄົນສົມຄວນຖາມ, ແຕ່ເມື່ອຖາມແລ້ວຢ່າຟ້າວເລັ່ງຫາຄຳຕອບ ແຕ່ໃຫ້ເລັ່ງຫາຄວາມໄວ້ວາງໃຈໃນພຣະເຈົ້າ ເພາະດາວິດເປັນຜູ້ຄຶດຫາຄຳຖາມເຫລົ່ານີ້ແຕ່ບໍ່ໄດ້ສແວງຫາຄຳຄອບແຕ່ຢ່າງໃດ, ເພິ່ນກັບຍອມຈຳນົນຕົວຕໍ່ພຣະເຈົ້າສາກ່ອນ. ເພິ່ນຍັງເວົ້າອີກວ່າ *"ຂ້ານ້ອຍຍັງຈະສັຣ ເສີນພຣະອົງພຣະຜູ້ຊ່ອຍໃຫ້ພົ້ນພັຍແລະພຣະເຈົ້າຂອງຂ້ານ້ອຍ"* ຊຶ່ງມີຄວາມໝາຍວ່າ ເຖິງແມ່ນຈະມີຄວາມທຸກໂສກເສົ້າ ຫລືຄວາມທຸກລຳບາກກໍຈະສັຣເສີນພຣະເຈົ້າຢູ່ສເມີ, ເພິ່ນໄດ້ສະແດງຄວາມໄວ້ວາງໃຈທີ່ເຮົາສົມຄວນຮຽນເອົາແບບຢ່າງຂອງເພິ່ນ.

**ເພງຄ່ຳຄວນຫາພຣະເຈົ້າຄັ້ງທີສາມ** (43:1-4)

ຄຳອ້ອນວອນດ້ວຍເພງຄຳຄວນຂອງດາວິດວ່າເພິ່ນເປັນຄົນມີຈິດໃຈບໍຣິສຸດຕໍ່ພຣະເຈົ້າ ເພິ່ນໄດ້ອ້ອນວອນຕໍ່ພຣະເຈົ້າເປັນສຽງເພງຂໍໃຫ້ພຣະເຈົ້າເບິ່ງພາຍໃນຈິດໃຈຂອງເພິ່ນແລ້ວພຣະອົງຈະຮູ້ວ່າເພິ່ນເປັນຄົນບໍຣິສຸດແທ້. ຄຳວ່າ *"ຂໍພຣະອົງປະກາດຄວາມບໍຣິສຸດ"* ທີ່ດາວິດກ່າວມີຄວາມໝາຍວ່າ ຂໍໃຫ້ພຣະເຈົ້າຕັດສິນເຫັນວ່າດາວິດມີໃຈບໍຣິສຸດ ເພາະດາວິດຮູ້ວ່າພຣະເຈົ້າສາມາດເບິ່ງຈິດໃຈຂອງທຸກຄົນໄດ້. ຫາກພຣະເຈົ້າເຫັນວ່າດາວິດບໍຣິສຸດແທ້ຈິງແລ້ວ ດາວິດຂໍຮ້ອງຂໍວ່າ *"ຊ່ອຍຂ້ານ້ອຍໃນການຕໍ່ສູ້ຄະດີກັບຄົນອະທັມ ຂໍຊົງຊ່ອຍຂ້ານ້ອຍໃຫ້ພົ້ນຈາກການຕົວະຍົວະຂອງຄົນຊົ່ວ"*. (ຂໍ້ 1). ດາວິດກ່າວໃນຕອນທ້າຍຂໍ້ 1 ວ່າ ການຕົວະຍົວະຂອງຄົນຊົ່ວແປວ່າຄົນຕົວະຍົວະບໍ່ແມ່ນຄົນດີຈັກຄົນ.

*"ພຣະອົງຊົງເປັນທີ່ເພິ່ງຂອງຂ້ານ້ອຍ ເປັນຫຍັງພຣະອົງຈຶ່ງປະລະຂ້ານ້ອຍໄປ? ເປັນຫຍັງຂ້າຍ້ອຍຈຶ່ງທົນທຸກທໍຣະມານຍ້ອນຄວາມໂຫດຮ້າຍຂອງສັດຕູ"* (ຂໍ້ 2). ດາວິດສາຣະພາບວ່າພຣະເຈົ້າເທົ່ານັ້ນຊົງເປັນທີ່ເພິ່ງຂອງເພິ່ນໆມີກຳລັງວັງຊາເມື່ອມີພຣະເຈົ້າຢູ່ນຳ ແລະເພິ່ນອ່ອນທັງກຳລັງແລະຈິດໃນເມື່ອເພິ່ນພົບກັບບັນຫາ, ດຽວນີ້ເພິ່ນອ່ອນກຳລັງໃຈຮ້ອງເພງດ້ວຍນ້ຳຕາໄຫລ ຈຶ່ງຖາມພຣະເຈົ້າວ່າ *ເປັນຫຍັງພຣະອົງຈຶ່ງປະລະຂ້ານ້ອຍໄປ? ເປັນຫຍັງຂ້ານ້ອຍຈຶ່ງທົນທຸກທໍຣະມານຍ້ອນຄວາມໂຫດຮ້າຍຂອງສັດຕູ"*. ພຣະທັມຕອນນີ້ສອນຂ້າພະເຈົ້າບໍ່ໃຫ້ຢ້ານທີ່ຈະຖາມພຣະເຈົ້າໃນຂະນະທີ່ອ້ອນວອນ ຫລືໃນຍາມນະມັສການພຣະອົງ ແຕ່ຂ້າພະເຈົ້າຈະບໍ່ເລັ່ງຫາຄຳຕອບເພື່ອໃຫ້ຕົນເອງດີໃຈ ແຕ່ຈະດຳເນີນສັຣເສີນພຣະອົງຕໍ່ໄປຈົນກວ່າຈະໄດ້ຄຳຕອບ. ຂໍ້ 3-4 ແມ່ນການຂໍໃຫ້ພຣະເຈົ້າຮັບກັບຄືນມາຢູ່ໃກ້ກັບພຣະອົງໂດຍໃຊ້ຄຳເວົ້າ ກັບຄືນສູ່ເມືອງຊີໂອນ ມີຄວາມໝາຍວ່າເມືອງຊີໂອນຫລືພູເຂົາຊີໂອນເປັນພູເຂົາສັກສິດທີ່ພວກຜູ້ຮັບໃຊ້ພຣະເຈົ້າຫລາຍຄົນໄດ້ເຂົ້າເຝົ້າພຣະເຈົ້າໃນພູຊີໂອນນັ້ນ.

**ທົບທວນດ້ວຍຄວາມຫວັງຕໍ່** (43:5)

*"ເປັນຫຍັງຂ້ານ້ອຍຈຶ່ງໂສກເສົ້າ? ເປັນຫຍັງຂ້ານ້ອຍຈຶ່ງທຸກລຳບາກ ຂ້ານ້ອຍຂໍມອບຄວາມຫວັງໄວ້ກັບອົງພຣະເຈົ້າ ແລະຂ້ານ້ອຍຍັງຈະສັຣເສີນພຣະອົງພຣະຜູ້ຊ່ອຍໃຫ້ພົ້ນພັຍແລະພຣະເຈົ້າຂອງຂ້ານ້ອຍ(ຂໍ້ 5).* ເປັນຄຳເວົ້າດຽວກັບ 42:11. ເບິ່ງແລ້ວມັນຄ້າຍຄືເພງທ່ອນແຍກຂອງສມັຍນີ້ ເມື່ອຮ້ອງຈົບແລ້ວກໍກັບໄປຮ້ອງທ່ອນແຍກແລະຈົບບ່ອນນັ້ນ. ສຳລັບດາວິດເປັນການເວົ້າຢໍ້າອີກເພື່ອສະແດງຄວາມໄວ້ວາງໃຈໃນພຣະເຈົ້າ ແທນທີ່ຈະເບິ່ງບັນຫາ.

**<u>ຄຳຖາມ</u>**

1. ການນະມັສການ ຫລືປະສົບການທີ່ຜ່ານມາແມ່ນຕອນໃດ ທີ່ທ່ານຮູ້ສຶກວ່າພຣະເຈົ້າຊົງສະຖິດຢູ່ນຳທ່ານ?

2. ເປັນຫຍັງດາວິດຈຶ່ງຮູ້ສຶກວ່າພຣະເຈົ້າປະຖິ້ມເພິ່ນ?

3. ເມື່ອເພິ່ນຮູ້ສຶກວ່າພຣະເຈົ້າປະຖິ້ມເພິ່ນແລ້ວເພິ່ນເຮັດແນວໃດ?

4. ເມື່ອດາວິດມີບັນຫາເພິ່ນຮ້ອງເພງດ້ວຍຄວາມໄວ້ວາງໃຈ ແທນທີ່ຈະໃຈຮ້າຍຫລືໜີຈາກພຣະເຈົ້າ ການກະທຳຂອງດາວິດສອນເຮົາຫຍັງແດ່?

5. ທີ່ຜ່ານມາເມື່ອທ່ານພົບກັບຄວາມທຸກໃຈຄືດາວິດທ່ານໄດ້ໄປຫາໃຜ? ຕໍ່ໄປນີ້ຈະໄປຫາໃຜ?

*ດຣ. ທຸນພັນ ວົງສຸຣິດທ໌*

## <u>ບົດຮຽນບົດທີ 5</u>
## <u>ເກືອບສົງສັຍ</u>

---

**<u>ຂໍ້ພຣະຄັມພີສໍາລັບບົດຮຽນນີ້:</u>** ເພງສັຣເສີນ 73
**<u>ຂໍ້ພຣະຄັມພີທັງຫມົດສໍາລັບບົດຮຽນນີ້:</u>** ເພງສັຣເສີນ 73
**<u>ຈຸດສໍາຄັນຂອງບົດຮຽນນີ້:</u>** ເມື່ອເກີດສົງສັຍຄວນແກ້ໄຂຢ່າງໃດ
**<u>ຄໍາຖາມເພື່ອການສໍາຣວດ:</u>** ການໄວ້ວາງໃຈໃນພຣະເຈົ້ານັ້ນຄຸ້ມຄ່າບໍ່?
**<u>ຈຸດປະສົງຂອງບົດຮຽນນີ້:</u>** ເພື່ອບັລຍາຍເພງສັຣເສີນເກືອບສົງສັຍແລະຫາເຫດຜົນໃນຄວາມເຊື່ອຖືພຣະເຈົ້າ.

**<u>ຫນ້າທີ່ສໍາຄັນຂອງຄຣິສຕຽນທຸກຄົນໃຫ້ເຂົ້າໃຈວ່າ</u>**

- ພຣະຄັມພີເທົ່ານັ້ນເປັນຣິດອໍານາດນໍາພາທາງແຫ່ງຊີວິດໃນການເຮັດພາຣະຫນ້າທີ່ການຮັບໃຊ້.
- ເພື່ອແບ່ງປັນຂ່າວປະເສີດແກ່ທຸກຄົນໂດຍບໍ່ເລືອກໜ້າ.
- ນໍາຄອບຄົວໃຫ້ມີຄວາມເຊື່ອເຂັ້ມແຂງ.

### <u>ບົດນໍາ</u>

ບາງເທື່ອເຫດການທີ່ເກີດຂຶ້ນໃນຊີວິດເຮົາກໍເປັນການທ້າທາຍໃນເຣື່ອງຄວາມເຊື່ອໃນພຣະເຈົ້າ ຈົນລາງເທື່ອຄິດວ່າພຣະເຈົ້າບໍ່ເບິ່ງແຍງຈົນເຮົາເກີດສົງສັຍໃນໃຈຂອງເຮົາ, ເມື່ອເປັນເຊັ່ນນັ້ນເຮົາຄວນຈະນໍາເອົາເຣື່ອງໃນໃຈນີ້ມາທູນຕໍ່ພຣະເຈົ້າ ແລະເຮົາກໍເຊື່ອວ່າພຣະອົງຈະຊ່ອຍໃຫ້ເຮົາເຂົ້າໃຈເຖິງຊີວິດ.

**<u>ຄວາມຄິດທີ່ຜິດປົກກະຕິ</u>** (73:1-12)
*"ພຣະເຈົ້າຊົງດີຕໍ່ພວກອິສຣາເອນຢ່າງແທ້ຈິງ ແລະຕໍ່ຜູ້ມີຈິດໃຈບໍຣິສຸດ ແຕ່ຝ່າຍພວກຂ້ານ້ອຍ ຂ້ານ້ອຍເກືອບລົ້ມລົງ ຕີນຂອງພວກຂ້ານ້ອຍເກືອບມື່ນພະລາດໄປ ເພາະຂ້ານ້ອຍອິດສາຈອງຫອງ ຄືຄົນຊົ່ວຮ້າຍຈະເຣີນຮຸ່ງເຮືອງ"* (ຂໍ້ 1-3). ພຣະເຈົ້າຊົງດີຕໍ່ອິສຣາເອນ ແລະດີຕໍ່ທຸກຄົນທີ່ມີຈິດໃຈບໍຣິສຸດຕໍ່ພຣະເຈົ້າ, 1. ຄໍາວ່າພຣະເຈົ້າຊົງດີທີ່ ດາວິດກ່າວມີໝາຍວ່າພຣະອົງຊົງລ້ຽງດູປະຊາຊົນຂອງພຣະອົງໃຫ້ອີ່ມໜໍາສໍາຣານ, ຊົງປົກປ້ອງເຂົາຈາກພະຍາດ ຕ່າງໆ ປົກປ້ອງເຂົາບໍ່ໃຫ້ສັດຕຣູມາຍຣຸບຢໍ່າທໍາລາຍເຂົາ. 2. ຄໍາວ່າຜູ້ທີ່ມີຈິດໃຈບໍຣິສຸດທີ່ດາວິດກ່າວ ແມ່ນຜູ້ບໍ່ແບ່ງຈິດໃຈໄປນະມັສການພະອື່ນ ແລະນະມັສການພຣະອົງຕາມກໍາໜົດເວລາ. 3. *ແຕ່ຝ່າຍຂ້ານ້ອຍເກືອບລົ້ມລົງ* ແມ່ນດາວິດເວົ້າເຖິງຕົວເພິ່ນເອງທີ່ມີຈິດໃຈບໍຣິສຸດຕໍ່ພຣະເຈົ້າ ແຕ່ບໍ່ສົມຄວນຈະໄປຄິດອິດສາຄົນຊົ່ວຮ້າຍຈະເຣີນຮຸ່ງເຮືອງ, ເພິ່ນເວົ້າວ່າເກືອບລົ້ມ ແຕ່ຍັງບໍ່ທັນລົ້ມດ້ວຍວ່າພຣະເຈົ້າຈະຊົງຊ່ອຍຜູ້ທີ່ມີໃຈບໍຣິສຸດບໍ່ໃຫ້ລົ້ມ.

ກ. ຄໍາວ່າອິດສາທີ່ດາວິດກ່າວໝາຍຄວາມວ່າ ເພິ່ນບໍ່ດີໃຈເມື່ອຄົນຊົ່ວຈະເຣີນຮຸ່ງເຮືອງ ຂ. ຄໍາວ່າຈະເຣີນຮຸ່ງເຮືອງໝາຍຄວາມວ່າຮັ່ງມີເປັນດີທັງຍົດຖາບັນດາສັກແລະຊັບສົມບັດ. ໃນຄວາມຄິດຂອງດາວິດອາຈຄິດວ່າຄົນຊົ່ວຮ້າຍສົມຄວນຕາຍແຕ່ກັບຈະເຣີນ. ດ້ວຍເຫດນີ້ແຫລະເພິ່ນຈຶ່ງເວົ້າວ່າ ພຣະເຈົ້າຊົງດີແຕ່ເພິ່ນເກືອບລົ້ມລົງ ມັນຄ້າຍຄືຜູ້ນຶ່ງຍ່າງລົງເຫວເລິກທີ່ເຕັມໄປດ້ວຍຕົມມື່ນພະລາດລົ້ມ ຄວາມຈິງແລ້ວຄຣິສຕຽນກໍປຽບເໝືອນຄົນຜູ້ນຶ່ງທີ່ຢືນຢູ່ທີ່ສູງແລະບໍ່ຈໍາ

ເປັນຈະຕ້ອງລົງໄປເຫວເລິກເພື່ອມີຊີວິດເໝືອນຄົນຊົ່ວທີ່ກຳລັງຈະເຣີນຮຸ່ງເຮືອງຢູ່ເຫວເລິກ, ຄຣິສຕຽນບໍ່ສົມຄວນຄິດອິດສາຄົນຊົ່ວຮ້າຍຈະເຣີນຮຸ່ງເຮືອງ, ຫາກຄຣິສຕຽນມີຄວາມຮູ້ສຶກແນວນີ້ແມ່ນເພິ່ນມີຄວາມ ຮູ້ສຶກບໍ່ຖືກຕ້ອງແລ້ວຈົ່ງຟ້າວແກ້ໄຂໂວງເພາະມັນບໍ່ແມ່ນຄວາມຄິດຂອງຄຣິສຕຽນ.

ດາວິດແຄ້ນເຄືອງໃຈຄຶດວ່າພຣະເຈົ້າດີໂພດ ແມ່ນແຕ່ຄົນຊົ່ວຮ້າຍພຣະອົງກໍບໍ່ທຳລາຍ, ແລະຈົ່ມຕໍ່ພຣະເຈົ້າວ່າ *"ພວກເຂົາບໍ່ໄດ້ທົນທຸກທໍຣະມານ ພວກເຂົາມີສຸກຂະພາບສົມບູນ ພວກເຂົາບໍ່ໄດ້ທົນທຸກທໍຣະມານເໝືອນຄົນອື່ນ ແລະບໍ່ມີຄວາມຫຍຸ້ງຍາກລຳບາກເໝືອນຄົນອື່ນ ພວກເຂົາເອົາຄວາມຈອງຫອງເຂົ້າໃສ່ຄໍ ດັ່ງເອົາສາຍສ້ອຍຄໍ້ອງຄໍໄວ້ ແລະເອົາຄວາມໂຫດຮ້າຍຫຸ້ມຫໍ່ຕົວ ເໝືອນທີ່ນເສື້ອຄຸມ ຫົວໃຈຂອງເຂົາສະແດງອອກແຕ່ຄວາມຊົ່ວຮ້າຍແລະຈິດໃຈຂອງເຂົາກໍເຕັມໄປດ້ວຍກົນອຸບາຍອັນຊົ່ວຮ້າຍ ພວກເຂົາຫົວຂວັນແລະເວົ້າຫຍໍ້ຫຍັນຄົນອື່ນ ພວກເຂົາຈອງຫອງແລະເວົ້າແຕ່ຄວາມຊົ່ວ" (ຂໍ້ 4-8)*

ດາວິດກ່າວຟ້ອງພຣະເຈົ້າເພື່ອໃຫ້ພຣະເຈົ້າພຣະພິໂຣດລົງໂທດຄົນຊົ່ວວ່າ *"ພວກເຂົາເວົ້າຄວາມຊົ່ວຊ້າຕໍ່ພຣະເຈົ້າຜູ້ຊົງປະທັບຢູ່ເທິງສວັນຊັ້ນຟ້າ ແລະອອກຄຳສັ່ງຢ່າງອວດອ້າງຈອງຫອງແກ່ມະນຸດຢູ່ໃນໂລກນີ້ ຈົນກວ່າໄພ່ພົນຂອງພຣະເຈົ້າຈະໄປຫາພວກເຂົາ ແລະມັກເຊື່ອຄຳເວົ້າຂອງພວກເຂົາ ພວກເຂົາເວົ້າວ່າ "ພຣະເຈົ້າບໍ່ຮູ້ຫຍັງດອກພຣະຜູ້ຊົງຍິ່ງໃຫຍ່ກໍຈະບໍ່ພົບພໍ້ສິ່ງໃດ ຄົນຊົ່ວຊ້າກໍເປັນຢ່າງນັ້ນ ພວກເຂົາມີທຸກສິ່ງອຸດົມສົມບູນແລະຈະເຣີນຂຶ້ນເລື້ອຍໆ"* (ຂໍ້ 9-12).

<u>ຄວບຄຸມຄວາມຄິດ</u> (73:13-17)

ດາວິດທຽບພວກທີ່ຊື່ສັດບໍຣິສຸດໃຈຕໍ່ພຣະເຈົ້າ ແລະພວກຄົນຊົ່ວຊ້າທັງຫລາຍບໍ່ເຫັນມີຄວາມແຕກຢ່າງຫຍັງກັນ ເຊື່ອພຣະເຈົ້າ ແລະບໍ່ເຊື່ອພຣະເຈົ້າກໍບໍ່ເຫັນມີຫຍັງດີລື່ນກັນເພິ່ນຈົ່ມຕໍ່ພຣະເຈົ້າວ່າ *"ການທີ່ຂ້ານ້ອຍທຳຕົນໃຫ້ບໍຣິສຸດ ແລະລ້າງມືໃຫ້ສະອາດຈາກຄວາມຜິດນັ້ນ ຈະບໍ່ມີປໂຍດຫຍັງບໍ່? ພຣະເຈົ້າຂາພຣະອົງຊົງທຳໃຫ້ຂ້ານ້ອຍທົນທຸກທໍຣະມານຕລອດວັນ ແລະພຣະອົງຊົງລົງໂທດຂ້ານ້ອຍທຸກເຊົ້າ ຫາກວ່າຂ້ານ້ອຍໄດ້ເວົ້າຢ່າງນີ້ ຂ້ານ້ອຍກໍຈະເປັນຄົນບໍ່ສັດຊື່ຕໍ່ໄພ່ພົນຂອງພຣະອົງ ເຖິງແມ່ນວ່າການນີ້ຍາກເທົ່າໃດກໍຕາມ ຂ້ານ້ອຍກໍໄດ້ພະຍາຍາມຢ່າງສຸດຄວາມສາມາດ ເພື່ອໃຫ້ເຂົ້າໃຈໃນເຣື່ອງນີ້ ຈົນກວ່າຂ້ານ້ອຍໄດ້ໄປເຖິງພະວິຫານຂອງພຣະອົງ ແລະເຂົ້າໃຈສິ່ງທີ່ຈະເກີດຂຶ້ນກັບຄົນຊົ່ວຮ້າຍນັ້ນ"* (ຂໍ້ 13-17). 1. ດາວິດຈົ່ມວ່າເປັນຄົນບໍຣິສຸດບໍ່ມີປໂຍດຫຍັງບໍ່? 2. ດາວິດຄຶດວ່າພຣະເຈົ້າລົງໂທດເພິ່ນທຸກມື້ ຫລືເວົ້າວ່າຂ້ານ້ອຍເຮັດດີກະຍັງຖືກລົງໂດຢູ່ບໍ່? ພວກຊົ່ວນັ້ນພຣະອົງຄືບໍ່ລົງໂທດ. 3. ດາວິດບໍ່ເຂົ້າໃຈແຜນການຂອງພຣະເຈົ້າ ແຕ່ພະຍາຍາມເຂົ້າໃຈພຣະເຈົ້າ ແລະເພິ່ນຮູ້ຢູ່ເຕັມອົກວ່າໃນບັ້ນປາຍຂອງຄົນຊົ່ວຮ້າຍຈະເປັນແນວໃດ. ເວລານີ້ເພິ່ນບໍ່ສາມາດຄວບຄຸມຄວາມຄິດຂອງເພິ່ນໄວ້ໄດ້, ດັ່ງນັ້ນໃຜກໍຕາມຫາກມີໃຈອິດສາຜູ້ນັ້ນຈະຄວບຄຸມຄວາມຄິດຂອງຕົນເອງບໍ່ໄດ້ ແລະໃນທີ່ສຸດຄວາມຄິດຂອງຕົນເອງກໍເຮັດໃຫ້ຕົນເອງເຈັບແສບຈົນສົງ ສັຍພຣະເຈົ້າ.

<u>ໝັ້ນຄົງໃນຄວາມເຊື່ອ</u> (73:18-28)

ໃນທີ່ສຸດດາວິດກໍນຳຄວາມຄິດຂອງເພິ່ນກັບຄືນສູ່ສະພາບປົກກະຕິຈຶ່ງກ່າວວ່າ *"ແນ່ນອນທີ່ສຸດ ພຣະອົງຊົງປ່ອຍໃຫ້ພວກເຂົາພະລາດລົ້ມ ແລະໃຫ້ພວກເຂົາຖືກທຳລາຍ"* (ຂໍ້ 18). ຄືໃນວັນພິພາກສາພຣະເຈົ້າຈະບໍ່ຊ່ອຍຊູຄົນຊົ່ວຮ້າຍໃນເມື່ອເຂົາພວມລົ້ມລົງໂດຍປ່ອຍໃຫ້ລົ້ມແລະຖືກທຳລາຍ, ຄົນຊົ່ວຮ້າຍເຫລົ່ານີ້ມີຄວາມເປັນຢູ່ຢ່າງຈະເຣີນຮຸ່ງເຮືອງໃນເວລາລາອັນສັ້ນໆ ແຕ່ຫາກເຂົາກັບໃຈຈາກການຊົ່ວຮ້າຍແລະຍອມຮັບເຊື່ອ ພຣະເຈົ້າກໍຈະປົກປ້ອງເຂົາເຊັ່ນດຽວກັນ. *"ພວກເຂົາຖືກທຳລາຍໃນປັບດຽວ ແລະຈະລົງໄປສູ່ຈຸດຈົບອັນໜ້າຢ້ານໃນຂັ້ນສຸດທ້າຍ"* (ຂໍ້ 19).

*"ຂ້ານ້ອຍເປັນຄົນໂງ່ຈ້າແລະຂາດຄວາມເຂົ້າໃຈ ຕໍ່ພຣະພັກຂອງພຣະອົງ ຂ້ານ້ອຍທຳຕົນເໝືອນສັດເດັຽຣະສານ ແຕ່ແລ້ວຂ້ານ້ອຍກໍຢູ່ກັບພຣະອົງເລື້ອຍມາ ພຣະອົງຊົງຈູງແຂນຂ້ານ້ອຍໄປ ພຣະອົງຊົງນຳພາຂ້ານ້ອຍດ້ວຍການຕັກເຕືອນຂອງພຣະອົງ ແລະໃນທີ່ສຸດພຣະອົງຈະຕ້ອນຮັບຂ້ານ້ອຍດ້ວຍກຽດຕິຍົດ"* (ຂໍ້ 22-24). ດາວິດປະກາດຄວາມໂງ່ຈ້າຂອງເພິ່ນຕໍ່ພຣະເຈົ້າ ດ້ວຍວ່າເພິ່ນບໍ່ສາມາດເຂົ້າໃຈພຣະເຈົ້າ ຈຶ່ງຕໍ່ວ່າພຣະເຈົ້າ, ຈົ່ມທຸກຕໍ່ພຣະເຈົ້າແລະຍັງເຂົ້າໃຈຜິດວ່າພຣະເຈົ້າປະຖິ້ມເພິ່ນ ມາເຖິງຕອນນີ້ເພິ່ນສຳນຶກໄດ້ວ່າພຣະເຈົ້າຍັງຢູ່ກັບເພິ່ນເລື້ອຍມາ, ຍັງຊົງຈູງແຂນເພິ່ນໄປບ່ອນທີ່ພຣະອົງຢາກພາໄປ, ດາວິດຮູ້ເມື່ອຄຶງວ່າພຣະເຈົ້າບໍ່ຢູ່ຫ່າງໄກຈາກເພິ່ນແລະຈະນຳພາເພິ່ນຈາກມື້ເກີດຈົນເຖິງມື້ຕາຍ, ເຮົາທັງຫລາຍກໍຄວນມີຄວາມຮູ້ສຶກເຊັ່ນນີ້.

ດາວິດອ້ອນວອນສາຣະພາບດ້ວຍສຽງເພງວ່າ *"ນອກຈາກພຣະເຈົ້າຂ້ານ້ອຍບໍ່ມີຜູ້ໃດອີກໃນສວັນຊັ້ນຟ້າ ຂ້ານ້ອຍບໍ່ຕ້ອງການສິ່ງໃດໃນໂລກນີ້ ຈິດໃຈແລະຮ່າງກາຍຂອງຂ້ານ້ອຍອ່ອນແຮງລົງ ແຕ່ພຣະອົງຊົງເປັນກຳລັງເຊີດຊູຂ້ານ້ອຍ ພຣະອົງຊົງເປັນທຸກສິ່ງທີ່ຂ້ານ້ອຍຕ້ອງການຕລອດໄປ ແນ່ນອນທີ່ສຸດຜູ້ທີ່ປະລະພຣະອົງໄປຈະຕ້ອງຕາຍ ແລະຖືກທຳລາຍ ແຕ່ສຳລັບຂ້ານ້ອຍເປັນການດີທີ່ສຸດທີ່ຢູ່ໃກ້ພຣະອົງ ພຣະອົງເປັນທີ່ເພິ່ງຂອງຂ້ານ້ອຍ ແລະຂ້ານ້ອຍຈະປ່າວປະກາດໃນທຸກໆສິ່ງທີ່ພຣະອົງຊົງກະທຳ"* (ຂໍ້ 25-28). ດາວິດເປັນເຈົ້າຊີວິດທີ່ຄຶດພິຈາຣະນາຕຶກຕອງທີ່ເພິ່ນໄດ້ຮູ້ແລະໄດ້ເຫັນແລະປະສົບປະການໃນຊີວິດຂອງເພິ່ນເອງ, ເພິ່ນເກືອບສົງສັຍວ່າພຣະເຈົ້າປະຖິ້ມເພິ່ນໃຫ້ໂສກເສົ້າເຫງົາໃຈ, ເພິ່ນເກືອບສົງສັຍວ່າເປັນຫຍັງພຣະເຈົ້າຈຶ່ງປ່ອຍໃຫ້ຄົນຊົ່ວຈະເຣີນຮຸ່ງເຮືອງ ສ່ວນຄົນດີມີສິນທັມກັບມີຄວາມທຸກທໍຣະມານ, ເພິ່ນເກືອບສົງສັຍວ່າຄົນທີ່ເຊື່ອພຣະເຈົ້າກໍບໍ່ມີຫຍັງດີລື່ນຄົນບໍ່ເຊື່ອພຣະເຈົ້າ, ເພິ່ນເອງເກືອບລົ້ມລົງຈາກຄວາມເຊື່ອ. ໃນຕອນທ້າຍນີ້ເພິ່ນຈຶ່ງຄຶດໄດ້ວ່າພຣະເຈົ້າຈະບໍ່ປະຖິ້ມຜູ້ທີ່ເຊື່ອແລະມີຄວາມບໍຣິສຸດໃຈໃນພຣະເຈົ້າຈັກເທື່ອ, ສ່ວນຄົນຊົ່ວຮ້າຍນັ້ນພຣະອົງກໍຈະບໍ່ຊ່ອຍເມື່ອເຂົາພວມລົ້ມລົງ.

<u>ຄຳຖາມ:</u>

1. ດາວິດມີຄວາມຄຶດຜິດປົກກະຕິຢ່າງໃດ? ທ່ານມີຄວາມຄຶດນີ້ເປັນບາງຄັ້ງບໍ່?

2. ດາວິດບໍ່ຄອບຄຸມຄວາມຄຶດຂອງເພິ່ນແນວໃດ? ທ່ານເຄີຄອບຄຸມຄວາມຄຶດຂອງທ່ານບໍ່?

3. ໃນທີ່ສຸດດາວິດສແດງຄວາມເຊື່ອອັນໝັ້ນຄົງຢ່າງໃດ? ທ່ານເຄີຈະສແດງຄວາມເຊື່ອໝັ້ນຄົງຢ່າງໃດ?

4. ທ່ານຈະປ້ອງກັນຄວາມຄຶດບໍ່ໃຫ້ສົງສັຍແຜນການຂອງພຣະເຈົ້າຢ່າງໃດ?

*ດຣ. ຫຸມພັນ ວົງສຸຣິດທ໌*

# ບົດຮຽນບົດທີ 6
# ພໍໃຈຢູ່ໃນພຣະວິຫານ

---

**ຂໍ້ພຣະຄັມພີສຳລັບບົດຮຽນນີ້:** ເພງສັຣເສີນ 84
**ຂໍ້ພຣະຄັມພີທັງຫມົດສຳລັບບົດຮຽນນີ້:** ເພງສັຣເສີນ 76; 84; 87
**ຈຸດສຳຄັນຂອງບົດຮຽນນີ້:** ການນະມັສການຮ່ວມກັນເຮັດໃຫ້ຮູ້ຈັກຮັກແພງກັນ
**ຄຳຖາມເພື່ອການສຳຣວດ:** ການນະມັສການຮ່ວມກັບເພື່ອນຝູງເຮັດໃຫ້ທ່ານມີຄວາມສຸກໃຈບໍ່?
**ຈຸດປະສົງຂອງບົດຮຽນນີ້:** ເພື່ອນຳທ່ານໃຫ້ພໍໃຈທີ່ຈະຢູ່ກັບຄຣິສຕຽນດ້ວຍກັນ.

**ຫນ້າທີ່ສຳຄັນຂອງຄຣິສຕຽນທຸກຄົນໃຫ້ເຂົ້າໃຈວ່າ**

- ພຣະຄັມພີເທົ່ານັ້ນເປັນຣິດອຳນາດນຳພາທາງແຫ່ງຊີວິດໃນການເຮັດພາຣະຫນ້າທີ່ການຮັບໃຊ້.
- ນຳຄອບຄົວໃຫ້ມີຄວາມເຊື່ອເຂັ້ມແຂງ.

## ບົດນຳ

ການນະມັສການທີ່ພຣະວິຫານຂອງພຣະເຈົ້າເປັນສິ່ງທີ່ຖວາຍກຽດແກ່ອົງພຣະຜູ້ເປັນເຈົ້າ, ບຸກຄົນທີ່ເຊື່ອໄວ້ວາງໃຈໃນພຣະ ເຈົ້າຈະມີຄວາມປິ້ມປິຕິຍິນດີ ເມື່ອເຂົ້າໃນພຣະວິຫານຂອງພຣະອົງເພາະວ່າລາວຈະໄດ້ຢູ່ໃກ້ກັບພຣະເຈົ້າແລະໃກ້ກັບໄພ່ພົນຂອງອົງພຣະຜູ້ເປັນເຈົ້າ. ດ້ວຍເຫດນີ້ບົດເພງສັຣເສີນຂອງລູກຂອງທ່ານໂຄຣາຈຶ່ງຄໍ່າຄວນວ່າຢາກຢູ່ໃນ ພຣະວິຫານຂອງພຣະເຈົ້າ <u>ໝາຍເຫດ:</u> ທ່ານອາດສັງເກດເຫັນວ່າ ການລົງແຖວຂອງບົດເພງນັ້ນບໍ່ຊື່ກັນ ເພາະວ່າກາບກອນແລະຫລັກໄວຍະກອນຂອງຊາວເຮັບເຣີ, ທ່ານບໍ່ຈຳເປັນຕ້ອງເຂົ້າໃຈຫລັກການນີ້ຈົນກວ່າທ່ານຈະເປັນຄຣູສອນໂຮງຮຽນພຣະຄັມພີ.

**ພໍໃຈໃນພຣະວິຫານ** (84:1-4)
ນະມັສການເລີ້ມຕົ້ນດ້ວຍພຣະເຈົ້ ແລະຈົບລົງດ້ວຍພຣະເຈົ້າ ເພາະວ່າພຣະເຈົ້າຊົງເປັນພຣະເຈົ້າທີ່ຊົງສ້າງທຸກສິ່ງທຸກຢ່າງໂດຍຣິດອຳນາດຂອງພຣະອົງ ແລະຊົງສ້າງມະນຸດດ້ວຍສີພຣະຫັດຂອງພຣະອົງ ດັ່ງນັ້ນທຸກໆສິ່ງທີ່ພຣະອົງຊົງສ້າງສົມຄວນແລ້ວທີ່ຈະນະມັສການພຣະອົງ, ນອກນັ້ນຍັງເປັນຄຳສັ່ງຂອງພຣະອົງໃຫ້ມະນຸດນະມັສການພຣະອົງ ດັ່ງນັ້ນມະນຸດຜູ້ທີ່ເຂົ້າໃຈເຣື່ອງການຊົງສ້າງກໍຈະມີຄວາມຫິວກະຫາຍຢາກເຂົ້າເຝົ້ານະມັສການພຣະເຈົ້າ. ຜູ້ປະພັນບົດເພງຂຶ້ນຕົ້ນບົດເພງດັ່ງນີ້; 1. "*ຂ້າແດ່ອົງພຣະຜູ້ເປັນເຈົ້າແຫ່ງຈັກກະວານ*" (ຂໍ້ 1ກ). ເປັນການເລີ້ມຕົ້ນຄຳອ້ອນວອນຂອງຜູ້ເຊື່ອພຣະເຈົ້າທີ່ເວົ້າສະເພາະເຈາະຈົງກັບພຣະເຈົ້າເທົ່ານັ້ນ.2. "*ຂ້ານ້ອຍຮັກແລະຢາກຢູ່ໃນ
ພຣະວິຫານຂອງພຣະ
ອົງອີ່ຫລີ*" (ຂໍ້ 1ຂ). ເພິ່ນບອກກັບພຣະເຈົ້າວ່າເພິ່ນຮັກພຣະວິຫານ (ໂບດ) ຂອງພຣະເຈົ້າ, ຄຳວ່າຮັກພຣະວິຫານຂອງພຣະເຈົ້າໝາຍຄວາມວ່າບົວຣະບັດຮັກສາ, ທະນຸຖນອມ, ປົວແປງບໍ່ໃຫ້ເສົ້າໝອງ. ເຮົາທັງຫລາຍກໍຄວນຮັກພຣະວິຫານພຣະເຈົ້າທີ່ເຮົານະມັສການທຸກວັນນີ້. ນັກເທດຜູ້ນຶ່ງ

ເທສນາວ່າ "ຮັກໂບດຄືຮັກບ້ານ, ຮັກບ້ານຄືຮັກໂບດ" ເພິ່ນອະທິບາຍວ່າ ຫາກເຮົາຮັກພຣະເຈົ້າຈຶ່ງຮັກໂບດຂອງພຣະອົງ, ການຮັກໂບດຂອງພຣະອົງຈຶ່ງເຮັດຄືເຮົາຮັກບ້ານ ເພາະເຮົາຕົບແຕ່ງປົວແປງບ້ານເຮືອນຂອງເຮົາຫລາຍປານໃດກໍຈຶ່ງຕົບແຕ່ງໂບດຂອງພຣະເຈົ້າຫລາຍປານນັ້ນ ແລ້ວພຣະອົງຈະອວຍພອນທ່ານດອກ. 3. ຜູ້ແຕ່ງເພງສັຣເສີນບົດນີ້ຍັງບອກພຣະເຈົ້າອີກວ່າ *"ຢາກຢູ່ໃນພຣະວິຫານຂອງພຣະອົງອີ່ຫລີ" (ຂໍ້ 1ຄ).* ໝາຍຄວາມວ່າພຣະວິຫານຂອງພຣະເຈົ້າເມື່ອເຂົ້າມາໃນແລ້ວໜ້າຢາກຢູ່ເພາະວ່າ;ກ. ໄດ້ຢູ່ໃກ້ກັບພຣະເຈົ້າ, ເມື່ອຢູ່ໃກ້ພຣະເຈົ້າເທົ່າໃດຄວາມປອດພັຍກໍມີຫຼາຍເທົ່ານັ້ນ. ຂ.ໄດ້ຢູ່ໃກ້ກັບໄພ່ພົນຂອງພຣະເຈົ້າ, ເມື່ອຢູ່ໃກ້ກັບໄພ່ພົນຂອງເຈົ້າພຣະເທົ່າໃດຄວາມສາມັກຄີປອງດອງແລະຄວາມຮັກໃນພຣະນາມຂອງພຣະເຈົ້າກໍມີຫລາຍເທົ່ານັ້ນ. ຄ. ຄຸນນະພາບຂອງຕຶກອາຄານພຣະວິຫານດຶງດູດຈິດໃຈຫລາຍຈົນເພິ່ນເວົ້າວ່າ *"ຂ້ານ້ອຍຮ້ອງເພງຢ່າງມ່ວນຊື່ນ ດ້ວຍໝົດຈິດ ໝົດໃຈ"* (ຂໍ້ 2ຄ). ຜູ້ແຕ່ງບົດເພງນີ້ຍັງພັລນາວ່າ *"ນົກຈອກແລະນົກແອ່ນກໍຍັງມີຮັງຢູ່"* (ຂໍ້3ຄ). ເປັນການເວົ້າຍົກຍ້ອງພຣະວິຫານອີກເທື່ອນຶ່ງເພາະວ່າແມ່ນແຕ່ພວກນົກກໍຍັງມັກເຮັດຮັງຢູ່ພຣະວິຫານຂອງພຣະເຈົ້າ, ເມື່ອມັນເຮັດຮັງຢູ່ພຣະວິຫານຂອງພຣະເຈົ້າມັນກໍຈະໄດ້ຮັບຄວາມປອດພັຍຕາມສົມຄວນ *"ພວກມັນຮັກສາລູກນ້ອຍຂອງມັນໄວ້ໃກ້ແທ່ນບູຊາຂອງພຣະອົງ"* (ຂໍ້ 3ງ). ພວກມັນຈະຟັງຄຳສັ່ງສອນຂອງພຣະເຈົ້າ ແລະມັນຈະພາກັນຮ້ອງເພງສັຣເສີນພຣະເຈົ້າທຸກມື້ທຸກຄືນ. ພວກນົກກໍນັບວ່າເປັນສັດທີ່ພຣະເຈົ້າຊົງສ້າງ ສ່ວນມະນຸດກໍປະເສີດຫລາຍກວ່ານົກແທ້ ເຫດສັນໃດຈຶ່ງຈະບໍ່ຢາກຢູ່ໃນພຣະວິຫານຂອງພຣະເຈົ້າ. ຜູ້ທີ່ຢູ່ໃນພຣະວິຫານຈະເປັນຜູ້ມີຄວາມສຸກແລະຮ້ອງສັຣ*ເສີນພຣະອົງຢູ່ບໍ່ຂາດ*" (ຂໍ້4).

**ອອກນອກພຣະວິຫານ** (84:5-12)

ພຣະເຈົ້າອວຍພຣະພອນໄພ່ພົນຂອງພຣະອົງໃນຍາມນະມັສການ ດັ່ງນັ້ນທຸກຄົນທີ່ເຂົ້ານະມັສການຈະໄດ້ຮັບພຣະພອນກັບບ້ານ *"ຄວາມສຸກເປັນຂອງຜູ້ໄດ້ຮັບເຫື່ອແຮງມາຈາກພຣະອົງ"* (ຂໍ້ 5ກ). ຄຳວ່າ "ຄວາມສຸກ" ແປມາຈາກຄຳວ່າ Blessed ແປວ່າຄວາມສຸກ, ດັ່ງທີ່ເຫັນໃນພຣະທັມມັດທາຍ 5 ພຣະເຢຊູໄດ້ເວົ້າຄຳນີ້ຕັ້ງຫລາຍເທື່ອ. ສລຸບແລ້ວຄວາມສຸກແມ່ນພຣະພອນທີ່ມາຈາກພຣະເຈົ້ານັ້ນເອງ. ການນະມັສການພຣະເຈົ້າໄດ້ນຳເອົາເຫື່ອແຮງມາສູ່ຜູ້ນະມັສການ ເຫື່ອແຮງນັ້ນຈະເຮັດໃຫ້ລາວຢາກເດີນທາງໄປນະມັສການພຣະເຈົ້າ *"ແລະຢາກເດີນທາງໄປນະມັສະການທີ່ພູຊີໂອນ"* (ຂໍ້ 5ຂ). ທ່ານຈະສັງເກດເຫັນວ່າຜູ້ໃດເຂົ້ານະມັສການພຣະເຈົ້າບໍ່ຂາດຜູ້ນັ້ນກໍມີເຫື່ອແຮງທາງຈິດວິນຍານແຫ່ງຄວາມເຊື່ອ ເມື່ອລາວມີແຮງໃນຂະນະທີ່ອອກຈາກໂບດໄປລາວກໍຈະເວົ້າແລະປະຕິບັດຕາມຄຳສອນຂອງພຣະເຈົ້າ, ສ່ວນຜູ້ທີ່ຂາດການນະມັສການເລື້ອຍໆນັບມື້ນັບອ່ອນແຮງ ແລະໃນທີ່ສຸດລາວກໍຈະໝົດແຮງ ແລະບໍ່ຢາກເຂົ້າເຝົ້ານະມັສການພຣະເຈົ້າ. ດັ່ງການນະມັສການພຣະເຈົ້າຈຶ່ງຈຳເປັນສຳລັບຊາວຄຣິສຕຽນເພື່ອຈະເສີມກຳລັງແຮງຈາກຄຳສັ່ງສອນຂອງພຣະເຈົ້າ.

*"ຂະນະທີ່ພວກເຂົາໄດ້ເດີນທາງຜ່ານໄປໃນຮ່ອມພູທີ່ແຫ້ງແລ້ງ ບ່ອນນັ້ນກໍກາຍເປັນບ່ອນທີ່ບໍ່ມີນ້ຳ"* (ຂໍ້ 6ຂ). ສົມຄວນຈະເວົ້າວ່າ (ບ່ອນນັ້ນກໍກາຍເປັນບ່ອນທີ່ມີນ້ຳ) ຫລືເອົາ (ບໍ່) ອອກ. ອີງຕາມພາສາອັງກິດເວົ້າວ່າ As they pass through the Valley of Baca, they make it a place of springs; the autumn rains also cover it with pools. ແລະພາສາໄທເວົ້າວ່າ "**ขณะที่เขาผ่านไปตามหว่างเขาบาคา เขากระทำให้เป็นที่น้ำพุ ฝนต้นฤดูกระทำให้สระน้ำเต็ม**." ເຮົາສັງເກດເຫັນອີກວ່າ ຫວ່າງພູເຂົາ ບາຄາ ແລະຄຳວ່າບາຄາແປວ່າບ່ອນພູເຂົາຮ້ອງໄຫ້ໃຜໆກໍບໍ່ຢາກເດີນທາງຜ່ານໄປເພາະວ່າມັນເປັນພູເຂົາແຫ້ງແລ້ງ ດ້ວຍເຫດນີ້ພຣະຄັມພີພາສາລາວຈຶ່ງບໍ່ໃຊ້ຄຳວ່າບາຄາ ແຕ່ເລືອກແປວ່າແຫ້ງແລ້ງ. ຜູ້ແຕ່ງເພງສັຣເສີນເສີມຂຍາຍພຣະພອນຂອງພຣະເຈົ້າທີ່ອວຍພອນຜູ້ນະມັສການພຣະອົງໄດ້ນຳພຣະພອນໄປທຸກບ່ອນ ແມ່ນແຕ່ພູເຂົາແຫ້ງແລ້ງກໍກາຍເປັນບ່ອນຊຸ່ມເຢັນ. ຄົນຂອງພຣະເຈົ້າເຂົ້ານະມັສການເພື່ອຮັບພຣະພອນ ແລະເມື່ອອອກຈາກໂບດໄປທາງໃດກໍນຳພຣະພອນໄປເຖິງບ່ອນນັ້ນ ບ່ອນໃດແຫ້ງແລ້ງຂາດນ້ຳໃຈ, ບ່ອນໃດທີ່ຜູ້ຄົນບໍ່ຢາກໄປ ຄົນຂອງພຣະເຈົ້າກໍໄປ ແລະພຣະພອນທີ່ເຂົານຳໄປນັ້ນກໍໃຫ້ຄວາມຊຸ່ມເຢັນເໝືອນດັ່ງພຣະທັມບົດນີ້ *"ບ່ອນນັ້ນກໍກາຍເປັນບ່ອນທີ່ມີນ້ຳ ເມື່ອລະດູຝົນມາ ບ່ອນນັ້ນກໍເຕັມໄປດ້ວຍນ້ຳ"* (ຂໍ້ 6ຄ).

*"ໃນຂະນະທີ່ເຂົາຍ່າງໄປ ເຂົາໄດ້ມີແຮງຫລາຍຂຶ້ນຫລາຍກວ່າເກົ່າ ພວກເຂົາຈະເຫັນພຣະເຈົ້າຂອງພຣະທັງຫລາຍເທິງພູຊີໂອນ"* (ຂໍ້ 7). ມັນເປັນການຜິດປົກກະຕິທີ່ຜູ້ໃດຜູ້ນຶ່ງຍ່າງໄປແລ້ວຈະມີແຮງຂຶ້ນຫລາຍກວ່າເກົ່າ ນອກຈາກວ່າແຮງຍ່າງກໍແຮງເມື່ອຍບໍ່ແມ່ນບໍ່? ແຕ່ສຳລັບບົດເພງສັຣເສີນນີ້ເພິ່ນບອກວ່າຄົນຂອງພຣະເຈົ້າແຫ່ງຍ່າງກໍແຫ່ງມີແຮງຂຶ້ນຫລາຍກວ່າເກົ່າ ເພາະວ່າກຳລັງທີ່ເພີ້ມຂຶ້ນນັ້ນບໍ່ແມ່ນມາຈາກມະນຸດແຕ່ມາຈາກພຣະເຈົ້າ. ທຸກຄົນທີ່ເຫຼື້ອມໃສນະມັສການພຣະເຈົ້າຈະບໍ່ເມື່ອຍໃນການໄປນະມັສການພຣະເຈົ້າອົງທ່ຽງແທ້ຈັກເທື່ອ.

ຜູ້ແຕ່ງເພງບອກວ່າຄົນພວກນີ້ຍ່າງຕາມພູເຂົາ (ບາຄາ) ແປວ່າພູແຫ້ງແລ້ງຫລືບ່ອນຮ້ອງໄຫ້ ຫລືເວົ້າໃຫ້ແຈ້ງກວ່ານັ້ນແມ່ນຜ່ານຄວາມທຸກຍາກລຳບາກ ແລະອຸປະສັກກີດກັ້ນເຂົາກໍຈະຍ່າງ ແລະເຂົາກໍຈະມີແຮງດ້ວຍຣິດເດດຂອງພຣະເຈົ້ານຳພາເຂົາໃຫ້ໄປພົບກັບພຣະອົງຜູ້ຊົງເປັນພຣະເຈົ້າຂອງພຣະທັງຫລາຍໃນໂລກ *"ພວກເຂົາຈະເຫັນພຣະເຈົ້າຂອງພຣະທັງຫລາຍເທິງພູຊີໂອນ"* (ຂໍ້ 7ຂ). ຜູ້ແຕ່ງເພງໄດ້ອ້ອນວອນເພື່ອເຈົ້າຊີວິດດາວິດວ່າ *"ພຣະເຈົ້າຂາ ຂໍຊົງອວຍພອນແກ່ເຈົ້າຊີວິດຂອງພວກຂ້ານ້ອຍ ຜູ້ທີ່ພຣະອົງຊົງເລືອກໄວ້ແລ້ວ"* (ຂໍ້ 9). ເພິ່ນໄດ້ຂໍໃຫ້ພຣະເຈົ້າອວຍພອນໃຫ້ດາວິດມີສຸຂະພາບແຂງແຮງເພື່ອຕໍ່ສູ້ກັບພວກສັດຕູ, ອວຍພອນໃຫ້ເພິ່ນເຕັມໄປດ້ວຍສະຕິປັນຍາໃນການປົກຄອງປະຊົນໃຫ້ຢູ່ໃນການຊົງນຳຂອງອົງພຣະຜູ້ເປັນເຈົ້າ.

*"ຢູ່ໃນພຣະວິຫານຂອງພຣະອົງມື້ດຽວ ກໍມີຄວາມສຸກກວ່າພັນມື້ໃນແຫ່ງອື່ນ"* (ຂໍ້ 10ກ). ຜູ້ແຕ່ງເພງສະແດງຄວາມພໍໃຈທີ່ຈະຢູ່ໃນພຣະວິຫານຂອງພຣະເຈົ້າເພື່ອຟັງຄຳສັ່ງສອນຂອງພຣະເຈົ້າ, ແລະຂະນະທີ່ເພິ່ນຢູ່ໃນພຣະວິຫານຂອງພຣະເຈົ້າ ເພິ່ນກໍມີເວລາຮ່ວມສາມັກຄີທັມກັບປະຊາຊົນຂອງພຣະເຈົ້າ. ການເວົ້າຂອງເພິ່ນສະແດງອອກເຖິງຄວາມຍອມຈຳນົນແລະຄວາມຈົງຮັກພັກດີຕໍ່ພຣະເຈົ້າຢ່າງແທ້ຈິງຈົນເພິ່ນສາມາດເວົ້າໄດ້ວ່າ *"ຢູ່ໃນພຣະວິຫານຂອງພຣະອົງມື້ດຽວກໍມີຄວາມສຸກກວ່າພັນມື້ໃນແຫ່ງອື່ນ ຂ້ານ້ອຍຢາກຢືນຢູ່ໃກ້ປະຕູພຣະວິຫານຂອງພຣະເຈົ້າ ຫລາຍກວ່າທີ່ຈະຢູ່ໃນເຮືອນຂອງຄົນຊົ່ວຮ້າຍ"* (ຂໍ້ 10).

ຜູ້ແຕ່ງເພງຮູ້ຈັກນ້ຳພຣະທັຍພຣະເຈົ້າໃນເຣື່ອງຂອງປະທານທີ່ມາຈາກພຣະເຈົ້າ, ເພິ່ນຮູ້ດີວ່າພຣະເຈົ້າຈະບໍ່ເອົາຂອງທຸກຢ່າງທີ່ເຮົາຢາກໄດ້ໃຫ້ແກ່ເຮົາໃນຂນະທີ່ເຮົາຍັງຢູ່ໃນໂລກນີ້, ພຣະອົງຈະເອົາແຕ່ສິ່ງພຣະອົງເຫັນວ່າສົມຄວນແລະເໝາະສົມກັບເຮົາແຕ່ລະຄົນ *"ພຣະອົງບໍ່ປະຕິເສດທີ່ຈະໃຫ້ຂອງປະທານອັນດີແກ່ຜູ້ທີ່ເຮັດຕາມທາງສິນທັມ"* (ຂໍ້ 11ງ).

<u>ຄຳຖາມ:</u>

1. ແມ່ນຫຍັງຄືຈຸດປະສົງຂອງການໄປນະມັສການ?

2. ການໄປນະມັສການພຣະເຈົ້າແຕ່ລະວັນອາທິດທ່ານໄດ້ຫຍັງກັບບ້ານແດ່?

3. ເປັນຫຍັງທ່ານຈຶ່ງໄປນະມັສການພຣະເຈົ້າ?

4. ຫາກທ່ານຮັກພຣະວິຫານຂອງພຣະເຈົ້າ ທ່ານຈະເຮັດແນວໃດຕໍ່ພຣະວິຫານພຣະເຈົ້າໃນມື້ນີ້?

5. ພຣະວິຫານຂອງພຣະເຈົ້າທີ່ທ່ານມານະມັສການເປັນທີ່ດຶງດູດໃຈບໍ່? ຫາກບໍ່ດຶງດູດໃຈ ທ່ານຈະເຮັດແນວໃດ?

6. ເປັນຫຍັງຜູ້ແຕ່ເພງສັຣເສີນຈຶ່ງຢາກມາຢູ່ໃນພຣະວິຫານ? ທ່ານເດ! ຢາກຢູ່ບໍ່?

7. ໃນບົດເພງບັນທຶກວ່າ ຄືນຂອງພຣະເຈົ້າເດີນທາງໄປບ່ອນແຫ້ງແລ້ງບ່ອນນັ້ນກໍກັບຊຸ່ມເຢັນ ທ່ານເຂົ້າໃຈແນວໃດ?

8. ເປັນຫຍັງການໄປພຣະວິຫານຈຶ່ງເພີ້ມກໍາລັງ?

*ດຣ. ທຸມພັນ ວົງສຸຣິດທ໌*

# ບົດຮຽນບົດທີ 7
# ໃຊ້ຊີວິດທີ່ມີຄວາມໝາຍ

---

**ຂໍ້ພຣະຄັມພີສຳລັບບົດຮຽນນີ້:** ເພງສັຣເສີນ 90
**ຂໍ້ພຣະຄັມພີສຳລັບເບື້ອງຫຼັງ:** ເພງສັຣເສີນ 90
**ຈຸດສຳຄັນຂອງບົດຮຽນນີ້:** ເຖິງວ່າຊີວິດນີ້ຈະສັ້ນ ແລະມີປັນຫາ, ພວກເຮົາສາມາດທີ່ຈະຊື່ນຊົມຍິນດີ ແລະຈະເຮັດໃຫ້ຊີວິດນີ້ມີຄວາມໝາຍໄດ້ ເມື່ອພວກເຮົາມີຄວາມເຊື່ອໃນອົງພຣະຜູ້ເປັນເຈົ້າ.
ຄຳຖາມເພື່ອການສຳຣວດ: ພວກເຮົາຈະພົບຄວາມໝາຍຂອງຊີວິດທີ່ສັ້ນໆ ແລະເຕັມໄປດ້ວຍປັນຫານີ້ໄດ້ຈາກໃສ?
ຈຸດປະສົງຂອງບົດຮຽນນີ້: ເພື່ອຈະເອົາຕົວຢ່າງຈາກຜູ້ຂຽນບົດເພງສັຣເສີນກ່ຽວກັບຊີວິດ ແລະວິທີທີ່ລາວສາມາດພົບຄວາມໝາຍໃນຊີວິດນີ້ ທ່າມກາງຄວາມທ້ອງໃຍຕ່າງໆ.

**ເຣື່ອງທີ່ຄວນເນັ້ນໃນການຮຽນຄັ້ງນີ້:**

- ພຣະຄັມພີຄືຫລັກສຳຄັນສຳລັບຊີວິດແລະການຮັບໃຊ້.
- ສ້າງຄວາມເຊື່ອໃຫ້ສົມບູນແລະເຂັ້ມແຂງ.
- ປະກາດຂ່າວປະເສີດກັບທຸກຄົນ.

## ຄຳນຳ

ກົງກັນຂ້າມກັບຊີວິດນິຣັນແລະບໍຣິສຸດຂອງພຣະເຈົ້າ, ປະສົບການຂອງມະນຸດເປັນຂອງຊົ່ວຄາວ ແລະກໍຍັງເຕັມໄປດ້ວຍຄວາມຜິດບາບ. ເຖິງປານນັ້ນ ພວກເຮົາຍັງສາມາດທີ່ຈະຍິນດີໃນຊີວິດທີ່ມີຄວາມໝາຍ ຖ້າພວກເຮົາເຊື່ອແລະໄວ້ວາງໃຈໃນພຣະເຈົ້າ.

ເພງສັຣເສີນ 90 ເປັນຄຳພຍານຊະນິດນຶ່ງສຳລັບພວກເຮົາ. ຜູ້ຂຽນໄດ້ເຕືອນພວກເຮົາວ່າ ເຖິງຊີວິດນີ້ຈະເປັນເວລາພຽງສັ້ນໆ ແລະເປັນຊີວິດທີ່ບໍ່ມີຄວາມສັດຊື່ຕໍ່ພຣະເຈົ້າກໍຕາມ, ຄວາມເຊື່ອໃນພຣະເຈົ້າສາມາດປ່ຽນແປງເຮົາແລະປ່ຽນແປງຜູ້ຄົນທັງຫລາຍໃນຊີວິດຂອງເຮົາ. ເວລາຂອງພວກເຮົາໃນໂລກນີ້ສັ້ນຫລາຍ ສະນັ້ນພວກເຮົາຄວນທີ່ຈະໃຊ້ຊີວິດແຕ່ລະວັນຢ່າງມີຄວາມໝາຍ ຢ່າມົວຫລຽວເບິ່ງແຕ່ປັດຈຸບັນ ແຕ່ໃຫ້ເບິ່ງນິຣັນດອນເປັນຫລັກ.

ນັກສາສນາສາດຫລາຍຄົນເຊື່ອວ່າ ໂມເຊເປັນຄົນຂຽນບົດເພງສັຣເສີນນີ້ ແລະອາດຈະເປັນບົດເພງທີ່ມີອາຍຸຫລາຍກວ່າບົດອື່ນໆ.

**ສັຣເສີນພຣະເຈົ້າຜູ້ຊົງເປັນຢູ່ຊົ່ວນິຣັນ** (90:1-2)
ພຣະເຈົ້າເປັນຈຸດເນັ້ນໃນພາກຕົ້ນຂອງບົດເພງສັຣເສີນນີ້. ຊີວິດນີ້ຈະມີຄວາມໝາຍໄດ້ຈະຕ້ອງເປັນຊີວິດທີ່ມີຄວາມສັມພັນກັບພຣະເຈົ້າ. ມະນຸດຈະບໍ່ສາມາດຢູ່ຢ່າງມີຄວາມໝາຍ ຖ້າຂາດຈາກຜູ້ທີ່ໄດ້ສ້າງພວກເຂົາຂຶ້ນມາ. ຜູ້ຂຽນໄດ້

ເວົ້າ ສາມຢ່າງກ່ຽວກັບພຣະເຈົ້າໃນຂໍ້ 1-2. ນຶ່ງ, ທ່ານໄດ້ບອກວ່າ ພຣະເຈົ້າຊົງເປັນທີ່ເພິ່ງຂອງໄພ່ພົນຂອງພຣະອົງ (ມະນຸດທຸກຄົນເປັນລູກຂອງພຣະເຈົ້າ). **ສອງ**, ພຣະເຈົ້າຊົງເປັນຜູ້ສ້າງສາຣະພັດຢ່າງ ແລະມະນຸດ ໄດ້ອາສັຍຢູ່ກັບສິ່ງທີ່ພຣະອົງຊົງສ້າງໄວ້. **ສາມ**, ພວກເຮົາຄວນເຂົ້າໃຈຄວາມແຕກຕ່າງຣະຫວ່າງຜູ້ສ້າງແລະຜູ້ຖືກສ້າງຂຶ້ນມາ. ພຣະເຈົ້າບໍ່ແມ່ນສິ່ງທີ່ຖືກສ້າງ; ພຣະອົງຊົງເປັນຢູ່ກ່ອນທີ່ຈະສ້າງທຸກຢ່າງຂຶ້ນ. ພຣະເຈົ້າບໍ່ມີຈຸດເລີ້ມຕົ້ນ ແລະຈຸດຈົບ. ພຣະອົງຊົງດຳຣົງຢູ່ເປັນນິດ.

**<u>ຄວາມສັ້ນຂອງຊີວິດມະນຸດ</u>** (90:3-6)
ເວລາຈະເຄື່ອນໄປເລື້ອຍໆ, ຈະໄວຫລືຊ້າຍອມຂຶ້ນຢູ່ກັບຜູ້ທີ່ໃຊ້ເວລານັ້ນ. ພວກເຮົາດຳເນີນຊີວິດຢູ່ໃນຊ່ວງເວລາທີ່ໜ້າຕື່ນເຕັ້ນ; ທຸກຢ່າງເຄື່ອນໄປຢ່າງວ່ອງໄວ. ຄົນໃນຍຸກນີ້ ພາກັນແລ່ນແຂ່ງເວລາ. ນັກທຸຣະກິດຮູ້ຄຸນຄ່າຂອງເວລາດີ.

ຜູ້ຂຽນບົດເພງນີ້ໄດ້ປຽບທຽບພຣະເຈົ້າຜູ້ຊົງຢູ່ຊົ່ວນິຣັນແລະຊີວິດມະນຸດຢ່າງໜ້າປະທັບໃຈ. ຊີວິດຂອງພວກເຮົາມີຈຸດເລີ້ມແລະຈຸດຈົບ. ພວກເຮົາອອກມາຈາກດິນ ແລະພວກເຮົາຈະກັບເປັນຝຸ່ນດິນອີກ (90:3). ພັນປີເປັນເວລານານສົມຄວນສຳລັບພວກເຮົາ, ແຕ່ສຳລັບພຣະເຈົ້າພັນປີເທົ່າກັບມື້ນຶ່ງທີ່ຜ່ານໄປ (90:4). ເວລາຂອງມະນຸດບໍ່ມີຄວາມໝາຍໃດໆສຳລັບພຣະເຈົ້າ. ພຣະອົງບໍ່ໄດ້ຊົງຢູ່ໃຕ້ຂອບເຂດຂອງເວລາເໝືອນມະນຸດເຮົາ.

ຊີວິດຂອງພວກເຮົາເຄື່ອນໄປຢ່າງຮີບດ່ວນ; ເໝືອນກັບຫຍ້າທີ່ປົ່ງຂຶ້ນໃນເວລາເຊົ້າເຕີບໃຫຍ່ສວຍງາມແລະອອກດອກເພາະຄວາມຊຸ່ມຊື່ນຈາກໝອກໃນຕອນເຊົ້າ; ແຕ່ພໍເຖິງຍາມແລງກໍຫ່ຽວແຫ້ງຕາຍເພາະຄວາມຮ້ອນຈາກແສງແດດ. ຊີວິດພຽງຊົ່ວຄາວຂອງຫຍ້ານີ້ ເຕືອນຜູ້ຂຽນເຖິງຄວາມສັ້ນຂອງຊີວິດມະນຸດ. ພຣະເຢຊູຄຣິດໄດ້ປຽບຊີວິດອັນຊົ່ວຄາວຂອງມະນຸດກັບດອກໄມ້ແລະຫຍ້າໃນການສອນພຣະອົງເຊັ່ນດຽວກັນ (ມັດທາຍ 6: 28-30).

**<u>ຄວາມຜິດບາບໃນຊີວິດມະນຸດ</u>** (90:7-11)
ຊີວິດຂອງພວກເຮົາບໍ່ພຽງແຕ່ເປັນຂອງຊົ່ວຄາວ, ແຕ່ເປັນຊີວິດທີ່ເຕັມໄປດ້ວຍການບໍ່ເຊື່ອຟັງຕໍ່ພຣະເຈົ້າ. ພຣະທັມຕອນນີ້ເວົ້າເຖິງຄວາມເພີ້ມທະວີຂອງການບໍ່ເຊື່ອຟັງ. ພຣະເຈົ້າຊົງຮູ້ທຸກຢ່າງກ່ຽວກັບຄວາມຜິດບາບຂອງມະນຸດ (90: 8). ຄວາມຜິດບາບຂອງພວກເຮົາເພີ້ມພຣະພິໂຣດຂອງພຣະເຈົ້າ ແລະເພີ້ມຄວາມທຸກລຳບາກໃຫ້ກັບພວກເຮົາເອງ (90: 7, 9). ຄວາມຜິດບາບ ແລະຄວາມທຸກລຳບາກຈະມີຕໍ່ໄປໃນຊົ່ວຊີວິດນີ້ (90:10).

ຄວາມຜິດບາບຂອງມະນຸດເຮັດໃຫ້ພຣະເຈົ້າຕ້ອງໂກດຮ້າຍຕໍ່ພວກເຂົາ (90: 11). ສະນັ້ນຊີວິດມະນຸດຈຶ່ງຕ້ອງພົບກັບຄວາມທຸກລຳບາກຕລອດໄປຊົ່ວຊີວິດ ແລະຊີວິດຂອງພວກເຂົາກໍສັ້ນລົງ (90:9). ມະນຸດອາດຈະຢູ່ໄດ້ເຈັດສິບປີຫລືແປດສິບປີ; ຄົນທີ່ຢູ່ໄດ້ຫລາຍກວ່ານັ້ນກໍຖືວ່າເປັນພຣະພອນ. ການຢູ່ດົນກໍໝາຍເຖິງການຕໍ່ສູ້ກັບຄວາມລຳບາກດົນ. ຜູ້ຂຽນໄດ້ສແດງຄວາມປາຖນາທີ່ຈະ "ບິນໜີ" ໄປໃຫ້ພົ້ນຈາກຄວາມທຸກລຳບາກຂອງຊີວິດ (90:10).

**<u>ຄຳອ້ອນວອນຕໍ່ພຣະເຈົ້າ</u>** (90: 12-17)
ຄວາມກັງວົນກັບຊີວິດໄດ້ຜ່ານໄປ; ພຣະເຈົ້າຜູ້ຊົງເປັນຢູ່ຊົ່ວນິຣັນຄືທີ່ເພິ່ງຂອງຜູ້ຂຽນບົດເພງນີ້ (90:1). ພຣະເຈົ້າຜູ້ດຽວທີ່ສາມາດຊ່ວຍໃຫ້ທຸກຄົນຕໍ່ສູ້ກັບຊີວິດອັນຊົ່ວຄາວ ແລະຊີວິດທີ່ເຕັມດ້ວຍຄວາມຜິດບາບນີ້. ຜູ້ຂຽນຍຶດໝັ້ນໃນຄວາມສັດທາແລະຄວາມຢຳເກງພຣະເຈົ້າຂອງເຂົາ.

ຈາກຄວາມຈິງທີ່ໄດ້ຮຽນຮູ້ກ່ຽວກັບຊີວິດ, ພຣະທັມຂໍ້ 12-17 ແມ່ນຄຳອ້ອນວອນຂອງຜູ້ຂຽນຕໍ່ພຣະເຈົ້າ. ຜູ້ຂຽນຮູ້ຕົວ ເອງວ່າຈະບໍ່ສາມາດດຳເນີນຊີວິດຢ່າງມີຄວາມໝາຍໄດ້ຖ້າບໍ່ມີພຣະເຈົ້າ. ພວກເຮົາຕ້ອງການພຣະອົງໃຫ້ສອນ

ພວກ ເຮົາໃຫ້ສລາດໃນການໃຊ້ເວລາແຕ່ລະມື້ໃຫ້ມີຄວາມໝາຍ (90:12). ແຕ່ກ່ອນພຣະເຈົ້າຈະສອນພວກເຮົາໃຫ້ເປັນຄົນສລາດ, ພວກເຮົາຈະຕ້ອງຍອມໃຫ້ພຣະອົງແກ້ໄຂເຣື່ອງຄວາມຜິດບາບໃນຊີວິດເສັຽກ່ອນ. ພວກເຮົາຈະຕ້ອງຂໍຄວາມ ເມດຕາຈາກພຣະອົງ (90:13); ພຣະອົງຜູ້ຊົງສັດຊື່ (90:14) ຈະອະພັຍໂທດພວກເຮົາ. ຄວາມຊົມຊື່ນຍິນດີຈະກັບຄືນມາສູ່ຊີວິດເມື່ອຮູ້ວ່າພຣະເຈົ້າໄດ້ຊົງປະທານຄວາມເມດຕາ ແລະເມື່ອພຣະອົງບໍ່ຊົງກໍານົດວັນເວລາເຣື່ອງຄວາມຜິດ ອີກຕໍ່ໄປ (90:15).

ຜູ້ຂຽນບົດເພງຈະຮູ້ໄດ້ຢ່າງໃດວ່າພຣະເຈົ້າໄດ້ຊົງພຣະເມດຕາຕໍ່ເຂົາ? ຄວາມສໍາເຣັດຜົນໃນທຸກສິ່ງທີ່ພວກເຂົາກະທໍາ (90:17) ແລະພຣະພອນສໍາລັບເຊື້ອສາຍຂອງພວກເຂົາ(90:16) ຈະເປັນສັນຍາລັກວ່າ ພຣະເຈົ້າໄດ້ຊົງຕອບຄໍາອ້ອນວອນໂດຍປະທານຄວາມເມດຕາແກ່ພວກຕົນ. ເວລາພວກເຮົາເຫັນພຣະພອນໃນຊີວິດຂອງພວກລູກຫລານ, ພວກເຮົາກໍສາມາດເວົ້າໄດ້ວ່າ ການດໍາເນີນຊີວິດຢ່າງສັດຊື່ກັບພຣະເຈົ້າເປັນເຣື່ອງສໍາຄັນ.

<u>**ຄໍາຖາມ:**</u>

1. ມີຫຍັງແດ່ທີ່ຊ່ວຍພວກເຮົາໃຫ້ສາມາດຮູ້ໄດ້ວ່າຄົນຜູ້ໃດຜູ້ນຶ່ງໄດ້ "ຕາຍກ່ອນເວລາກໍານົດ"?

2. ເວລາທ່ານໄດ້ຍິນຄໍາວ່າ "ພຣະພິໂຣດຂອງພຣະເຈົ້າ" ເທື່ອແລກ ທ່ານມີຄວາມຄິດແນວໃດ? ແມ່ນຫຍັງທີ່ເຮັດໃຫ້ທ່ານບໍ່ຄັກໃຈ ກ່ຽວກັບທີສດີນີ້? ແມ່ນຫຍັງທີ່ເຮັດໃຫ້ທ່ານໝັ້ນໃຈກ່ຽວກັບທີສດີນີ້?

3. ມີຫຍັງແດ່ທີ່ຊ່ວຍທ່ານໃຫ້ໃຊ້ຊີວິດແຕ່ລະມື້ຢ່າງມີຄວາມໝາຍ ໃນຄວາມສັດຊື່ຂອງທ່ານຕໍ່ພຣະເຈົ້າ ແລະຕໍ່ຄົນອື່ນໆ?

4. ມີຫຍັງແດ່ທີ່ທ່ານສາມາດຂຽນເປັນຄໍາພຍານເຖິງບຸກຄົນທີ່ຊ່ວຍປ່ຽນແປງຄວາມສັມພັນຂອງທ່ານກັບພຣະເຈົ້າ? ແມ່ນຫຍັງກີດກັ້ນທ່ານໄວ້ບໍ່ໃຫ້ຂຽນ?

*ດຣ. ສິດນີ ຄານ*

## ບົດຮຽນບົດທີ 8
## ສັຣເສີນຄຸນຄວາມດີຂອງພຣະເຈົ້າ

---

**ຂໍ້ພຣະຄັມພີສໍາລັບບົດຮຽນນີ້:** ເພງສັຣເສີນ 100; 103
**ຂໍ້ພຣະຄັມພີສໍາລັບເບື້ອງຫຼັງ:** ເພງສັຣເສີນ 100; 103; 105
**ຈຸດສໍາຄັນຂອງບົດຮຽນນີ້:** ສັຣເສີນຄຸນຄວາມດີຂອງພຣະເຈົ້າ ທີ່ໄດ້ຊົງສແດງໃຫ້ເຫັນຫລາຍໆວິທີ.
**ຄໍາຖາມເພື່ອການສໍາຣວດ:** ພຣະເຈົ້າໄດ້ຊົງສແດງຄຸນຄວາມດີຂອງພຣະອົງໃຫ້ທ່ານເຫັນວິທີໃດແດ່?
**ຈຸດປະສົງຂອງບົດຮຽນນີ້:** ເພື່ອຈະຮູ້ວິທີຕ່າງໆທີ່ພຣະເຈົ້າໄດ້ຊົງສະແດງຄຸນຄວາມດີຂອງພຣະອົງໃຫ້ກັບຂ້ອຍ ແລະເພື່ອຈະຮູ້ຈັກວິທີທີ່ຈະສັຣເສີນພຣະອົງ.

### ເຣື່ອງທີ່ຄວນເນັ້ນໃນການຮຽນຄັ້ງນີ້:

- ພຣະຄັມພີຄືຫລັກສໍາຄັນສໍາລັບຊີວິດແລະການຮັບໃຊ້.
- ສ້າງຄວາມເຊື່ອໃຫ້ສົມບູນແລະເຂັ້ມແຂງ.
- ປະກາດຂ່າວປະເສີດກັບທຸກໆຄົນ.

### ຄໍານໍາ

ພຣະເຈົ້າໄດ້ຊົງສະແດງຄຸນຄວາມດີຂອງພຣະອົງໃຫ້ພວກເຮົາເຫັນຜ່ານຫລາຍວິທີ. ພວກເຮົາຄວນຕອບຮັບຄຸນຄວາມດີນີ້ດ້ວຍການສັຣເສີນພຣະອົງ.

ໃນປະວັດສາດຂອງຄຣິສຕຽນຫຼາຍໆສັຕວັດທີ່ຜ່ານມາ, ຜູ້ຕິດຕາມພຣະຄຣິດໄດ້ໃຊ້ຄໍາເວົ້າຂອງຜູ້ອື່ນເພື່ອສະແດງຄໍາສັຣເສີນ ແລະນະມັສການພຣະເຈົ້າ. ພວກເຮົາໄດ້ເອົາຄໍາເວົ້າຂອງຜູ້ຂຽນມາເປັນຄວາມຮູ້ສຶກສ່ວນຕົວເພື່ອສັຣເສີນພຣະເຈົ້າ ເຊັ່ນຄໍາເວົ້າຂອງທ່ານໂທມາ ເຄັນ ໃນເພງ "ໃຫ້ຟ້າກັບໂລກ ຍ້ອງຍໍພຣະເຈົ້າ." ຄວາມເວົ້າຂອງລາວໄດ້ຊັກຊວນພວກເຮົາໃຫ້ສັຣເສີນພຣະເຈົ້າຜູ້ເປັນແຫລ່ງພຣະພອນ. ບົດເພງນີ້ໄດ້ໃຊ້ບົດເພງສັຣເສີນທີ 100 ເພື່ອເປັນຫລັກ.

ໃນບົດຮຽນນີ້ນີ້ພວກເຮົາຈະພິຈາຣະນາເບິ່ງບົດເພງສັຣເສີນທີ 100, 103, ແລະ 105 ຊຶ່ງເປັນບົດເພງສໍາລັບການສັຣເສີນໂດຍສະເພາະ.

**ຄໍາເຊີນໃຫ້ສັຣເສີນພຣະເຈົ້າ** (100:1-4; 103:1-2)
ບົດເພງສັຣເສີນທັງສອງບົດນີ້ເປັນຄໍາເຊີນໃຫ້ສັຣເສີນພຣະເຈົ້າ. ບົດເພັງ 103 ເວົ້າໃນທາງສ່ວນຕົວ; ຜູ້ຂຽນໜູນໃຈຕົວເອງໃຫ້ຮັບຮູ້ຄຸນຄວາມດີຂອງພຣະເຈົ້າ ແລະຮັບຮູ້ວ່າທຸກສິ່ງເກີດຂຶ້ນໄດ້ເພາະພຣະເຈົ້າ (103:1-2). ແຕ່ໃນບົດເພງ 100, ຄໍາເຊີນແມ່ນສໍາລັບທຸກໆຄົນ "ທົ່ວທັງໂລກ" ໃຫ້ຖວາຍຄໍາສັຣເສີນພຣະເຈົ້າເພາະຄຸນຄວາມດີຂອງພຣະອົງ (100:1). ທີ່ຈິງແລ້ວບົດເພງນີ້ເປັນຄໍາສັ່ງຫລາຍກວ່າຄໍາເຊີນ. ພວກເຮົາສັງເກດໄດ້ວ່າໃນບົດເພງ 100 ນີ້ ມີຄໍາວ່າ "ຈົ່ງ" ເຖິງເຈັດເທື່ອ.

ການສັຣເສີນພຣະເຈົ້າເລີ້ມຈາກຄວາມເຂົ້າໃຈວ່າພຣະເຈົ້າແມ່ນໃຜ. "ຈົ່ງຮູ້ຈັກພຣະຜູ້ເປັນເຈົ້າຄືພຣະເຈົ້າຜູ້ຊົງສ້າງພວກເຮົາ (100:3), ການຮັບຮູ້ວ່າ "ຢາໂຮວາ" ເປັນພຣະເຈົ້າອົງດຽວຜູ້ຊົງພຣະຊົນຢູ່ແມ່ນພື້ນຖານຂອງຄວາມເຊື່ອສຳລັບຊົນຊາດອິສຣາເອັນ (ພຣະບັນຍັດທີສອງ 4:35; 39; 6:4; ພົງກະສັດນຶ່ງ 18:39). ຊີວິດຂອງພວກເຮົາເລີ່ມຈາກພຣະເຈົ້າແລະຈົບລົງຢູ່ທີ່ພຣະເຈົ້າ. ສະນັ້ນການຮູ້ຈັກພຣະເຈົ້າຈະເປັນຈຸດເລີ້ມຕົ້ນ.

ຄຳສັ່ງຕໍ່ໄປແມ່ນໃຫ້ "ນະມັສການ" ພຣະເຈົ້າຢ່າງຊົມຊື່ນຍິນດີ (100:2), ໃຫ້ "ຮ້ອງເພງຖວາຍ" ພຣະອົງ (100:1), ແລະໃຫ້ "ເຂົ້າໄປປະຕູພຣະວິຫານ" ດ້ວຍຈິດໃຈຂອບພຣະຄຸນ (100:4). ການເຂົ້າໄປປະຕູພຣະວິຫານ ໝາຍເຖິງການຍັບເຂົ້າໃກ້ພຣະເຈົ້າ.

<u>**ຄຳອະທິບາຍເຣື່ອງຄຸນຄວາມດີຂອງພຣະເຈົ້າ**</u> (100:5; 103: 3-19)

ຂໍ້ 100:5 ບັລຍາຍຫລາຍຢ່າງກ່ຽວກັບພຣະເຈົ້າ, "ພຣະຜູ້ເປັນເຈົ້າຊົງຄຸນຄວາມດີ ແລະຄວາມຮັກຂອງພຣະອົງກໍດຳລົງສືບໆໄປເປັນນິດ ແລະຄວາມສັດຊື່ຂອງພຣະອົງຄືກັນກໍດຳລົງຢູ່ຕລອດໄປເປັນນິດ." ໃນຕອນນີ້ພວກເຮົາໄດ້ເຫັນຜູ້ຂຽນເວົ້າເຖິງຄຸນຄວາມດີ, ຄວາມຮັກ, ແລະຄວາມສັດຊື່ຂອງພຣະເຈົ້າໃນເວລາດຽວກັນຊຶ່ງເປັນສິ່ງທີ່ບໍ່ເຄີຍມີໃນພຣະສັນຍາເດີມ. ພຣະເຈົ້າເປັນແຫລ່ງພຣະພອນທັງຝ່າຍອຸປກອນ ແລະຝ່າຍຈິດວິນຍານ.

"ຄຸນຄວາມດີ" (100:5) ບອກເຖິງການຮັບຮູ້ວ່າທຸກສິ່ງທີ່ພຣະເຈົ້າຊົງສ້າງຂຶ້ນດີທຸກຢ່າງ; ພຣະອົງຊົງສ້າງທຸກຢ່າງໃນໂລກໄວ້ເພື່ອພວກເຮົາ. "ຄວາມຮັກ" (100:5) ເຕືອນເຖິງສັນຍາທີ່ພຣະເຈົ້າໄດ້ຊົງໃຫ້ໄວ້ກັບຊົນຊາດອິສຣາເອັນທີ່ພູເຂົາຊີນາຍ; ພຣະຜູ້ສ້າງຍອມເຮັດທຸກຢ່າງເພື່ອສິ່ງທີ່ໄດ້ສ້າງຂຶ້ນ. "ຄວາມສັດຊື່" ບອກເຖິງວ່າພວກເຮົາສາມາດໄວ້ໃຈໃນພຣະເຈົ້າ; ຄຳເວົ້ານີ້ໄດ້ປາກົດເຖິງເຈັດເທື່ອໃນບົດເພັງສັຣເສີນທີ 89.

ຜູ້ຂຽນໄດ້ບັລຍາຍເຣື່ອງຄຸນຄວາມດີຂອງພຣະເຈົ້າໂດຍລະອຽດໃນບົດເພງ 103:1-17. ຜູ້ຂຽນໄດ້ໜູນໃຈຕົວເອງໃຫ້ສັຣເສີນພຣະເຈົ້າ; ລາວໄດ້ເວົ້າເຖິງສິ່ງທີ່ພຣະເຈົ້າໄດ້ກະທຳໃຫ້ລາວ (103:3-5). "ຄວາມຮັກ" (103:4) ແລະ "ຄວາມເມດຕາ" (103:4) ຂອງພຣະເຈົ້າ (ເໝືອນດັ່ງຄວາມຮັກຂອງພໍ່ແມ່) ໄດ້ຮັກສາລາວໄວ້. ພຣະເຈົ້າໄດ້ຊົງໃຫ້ພຣະພອນກັບຄົນທີ່ຢຳເກງພຣະອົງ (103:6-13). ເພາະຄວາມຮັກພຣະເຈົ້າຊົງຍົກການບາບຂອງພວກເຮົາອອກໄປໃຫ້ໄກຈາກຕົວເຮົາ (103:11-12). ພຣະເຈົ້າຊົງອວຍພອນໃຫ້ມະນຸດທັງໝົດ (103:15-18). ພຣະຜູ້ເປັນເຈົ້າຊົງເຫັນຄວາມບົດພ່ອງທຸກໆຢ່າງຂອງມະນຸດ ແລະພຣະອົງຊົງຄວບຄຸມທຸກໆສິ່ງດ້ວຍ (103:19).

<u>**ຄຳຢືນຢັນການຊົງສ້າງຂອງພຣະເຈົ້າ**</u> (103: 20-22)

ເມື່ອພວກເຮົາຮູ້ວ່າຊີວິດໃນໂລກນີ້ເປັນພຽງຂອງຊົ່ວຄາວ, ພວກເຮົາຄວນພູມໃຈທີ່ພຣະເຈົ້າບໍ່ໄດ້ຊົງຢູ່ໄກຈາກເຮົາ; ພຣະອົງຊົງຕຽມພ້ອມທີ່ຈະຊ່ວຍຄົນທີ່ຮ້ອງຫາພຣະອົງ. ພວກເຮົາສາມາດຮູ້ພຣະເຈົ້າຜ່ານຄວາມຮັກ, ຄວາມເມດຕາ, ແລະການອະພັຍໂທດຂອງພຣະອົງ. ຜູ້ຂຽນບົດເພງກໍໄດ້ເນັ້ນເຣື່ອງນີ້ (103:3-5, 6-12, 17). ນອກນັ້ນພວກເຮົາຄວນພູມໃຈໃນຄວາມຍິ່ງໃຫຍ່ຂອງພຣະເຈົ້າຊຶ່ງເກີນຄວາມເຂົ້າໃຈຂອງພວກເຮົາ. ຜູ້ຂຽນໄດ້ບັລຍາຍໄວ້ໃນຂໍ້ 20-22 ໃນບົດເພງນີ້.

ບົດເພງ 103:19 ປະກາດວ່າພຣະຜູ້ເປັນເຈົ້າຊົງເປັນຜູ້ປົກຄອງຟ້າສວັນແລະສັພສິ່ງທັງປວງ; ຜູ້ຂຽນຊັກຊວນໃຫ້ທຸກຢ່າງໃນໂລກສັຣເສີນພຣະອົງ (103:20-22), ໃຫ້ພວກທູດສວັນທັງຫລາຍຈົ່ງສັຣເສີນພຣະອົງ, ແລະໃຫ້ຊາວສວັນຜູ້

ມີຣິດທັງຫຼາຍສັຣເສີນພຣະອົງ (103:21). ພຣະເຈົ້າມີທູດສວັນເປັນຜູ້ຮັບໃຊ້ພຣະອົງ; ພວກເຂົາເປັນຜູ້ຕິດຕໍ່ຣະຫວ່າງສວັນແລະແຜ່ນດິນໂລກ.

ພີ່ນ້ອງທັງຫລາຍເອີຍ, ໃຫ້ພວກເຮົາຢ່າລືມສັຣເສີນແລະຍ້ອງຍໍພຣະເຈົ້າ; ຄໍາສັຣເສີນຂອງແຕ່ລະຄົນມີຄວາມສໍາຄັນສໍາລັບພຣະເຈົ້າຜູ້ຊົງສ້າງພວກເຮົາມາ. ດ້ວຍເຫດນີ້ແຫລະ ຜູ້ຂຽນບົດເພງນີ້ຈຶ່ງໝູນໃຈຕົວເອງໃຫ້ຮ່ວມກັບທຸກຢ່າງໃນໂລກນີ້ຖວາຍຄໍາສັຣເສີນຍ້ອງຍໍພຣະເຈົ້າຂອງພວກເຮົາ ຊຶ່ງເປັນການສົມຄວນ.

**<u>ຄໍາຖາມ:</u>**

1. ອ່ານບົດເພງສັຣເສີນ 134; 135; ແລະ136 (ສາມບົດເພງເພື່ອການສັຣເສີນ) ແລ້ວສັງເກດວ່າໂຄງຮ່າງຂອງບົດກອນນີ້ຄ້າຍຄືກັນແນວໃດ?

2. ການອ່ານບົດເພງສັຣເສີນຊວນພວກເຮົາໃຫ້ສະແດງການສັຣເສີນຜ່ານຄວາມເວົ້າຂອງຄົນອື່ນໆ. ມີເພງໃດແດ່ທີ່ຊ່ວຍພວກຄຣິສຕຽນໃຫ້ສັຣເສີນພຣະເຈົ້າຈາກເນື້ອເພງນັ້ນ?

3. ທ່ານໄດ້ເຫັນຄໍາວ່າ "ທັງໝົດ" ຈັກເທື່ອໃນບົດເພງສັຣເສີນ 103? (ເບິ່ງພຣະຄັມພີພາສາອັງກິດອາດຈະດີກວ່າສໍາລັບຄໍາຕອບຂໍ້ນີ້) ທ່ານຄິດວ່າມັນມີຄວາມໝາຍແນວໃດ?

4. ພຣະເຈົ້າໄດ້ເຮັດຫຍັງດີໃນຊີວິດທ່ານແດ່? ໃຫ້ຂຽນເປັນລາຍການໄວ້ປະມານຫ້າຫາສິບຢ່າງ?

5. ເບິ່ງລາຍການທີ່ທ່ານໄດ້ຂຽນໄວ້. ຄຸນຄວາມດີຂອງພຣະເຈົ້າແມ່ນຢູ່ໃນລັກສນະຂອງພຣະພອນ ຫລືໃນລັກສນະຂອງກໍາລັງເພື່ອຕໍ່ສູ້ກັບອຸປສັກ?

6. ທ່ານໄດ້ສັຣເສີນແລະຍ້ອງຍໍພຣະເຈົ້າສໍາລັບສະມາຊິກຄອບຄົວ ຫລືມີສະຫາຍຄົນໃດຄົນນຶ່ງຫລາຍກວ່າຄົນອື່ນໆ?

*ດຣ. ສິດນີ ຄານ*

# ບົດຮຽນບົດທີ 9

# ຂອບຄຸນສຳລັບພຣະພອນ

---

**ຂໍ້ພຣະຄັມພີສຳລັບບົດຮຽນນີ້:** ເພງສັຣເສີນ 116
**ຂໍ້ພຣະຄັມພີສຳລັບເບື້ອງຫຼັງ:** ເພງສັຣເສີນ 107; 116
**ຈຸດສຳຄັນຂອງບົດຮຽນນີ້:** ພຣະພອນໃນເວລາຂາດເຂີນເຮັດໃຫ້ພວກເຮົາຢາກຂອບພຣະຄຸນດ້ວຍຄວາມຈິງໃຈ.
**ຄຳຖາມເພື່ອການສຳຣວດ:** ທ່ານຈະເວົ້າຫຍັງແດ່ເພື່ອຂອບພຣະຄຸນພຣະເຈົ້າ?
**ຈຸດປະສົງຂອງບົດຮຽນນີ້:** ເພື່ອຈະຮູ້ວິທີຕ່າງໆທີ່ຈະຂອບພຣະຄຸນພຣະເຈົ້າສຳລັບພຣະພອນທັງຫລາຍ.

**ເຣື່ອງທີ່ຄວນເນັ້ນໃນການຮຽນຄັ້ງນີ້:**

- ພຣະຄັມພີຄືຫລັກສຳຄັນສຳລັບຊີວິດແລະການຮັບໃຊ້.
- ສ້າງຄວາມເຊື່ອໃຫ້ສົມບູນແລະເຂັ້ມແຂງ.

## ຄຳນຳ

ການສແດງຄວາມຮູ້ບຸນຄຸນບໍ່ແມ່ນເຣື່ອງງ່າຍຖ້າຈະເວົ້າຕາມທັມຊາດຂອງມະນຸດເຮົາ. ມັນເປັນເຣື່ອງທີ່ພວກເຮົາຈະຕ້ອງຮຽນ. ຜູ້ຕິດຕາມພຣະຄຣິດທັງຫລາຍຄວນປັບປຸງອຸປນິສັຍເຣື່ອງການສະແດງການຮູ້ບຸນຄຸນສຳລັບພຣະເຈົ້າ. ແມ່ນຫຍັງທີ່ເຮັດໃຫ້ພວກເຮົາຢາກສະແດງຄວາມຮູ້ບຸນຄຸນ? ເນື່ອງຈາກການຮູ້ບຸນຄຸນບໍ່ແມ່ນທັມຊາດຂອງມະນຸດເຮົາ, ພວກເຮົາຈຶ່ງສັງເກດເຫັນໄດ້ວ່າ ພໍ່ແມ່ ຫລືຄຣູ ມັກຈະສອນເດັກໆໃຫ້ຂອບໃຈບຸກຄົນທີ່ເອົາສິ່ງຂອງໃຫ້ພວກເຂົາ.

ມື້ນີ້ພວກເຮົາຈະຮຽນຮູ້ບົດເພງຂອບພຣະຄຸນຈາກເພງສັຣເສີນ 116 ແລະຈະເບິ່ງເພງສັຣເສີນ 107 ເປັນເບື້ອງຫລັງສຳລັບບົດຮຽນນີ້. ບົດເພງສັຣເສີນ 116 ເປັນບົດເພງສຳລັບການຂອບພຣະຄຸນຂອງສ່ວນບຸກຄົນ. ໃນບົດເພງຂອບພຣະຄຸນພວກເຮົາຈະໄດ້ເຫັນການຄໍ່າຄວນຂອງສ່ວນບຸກຄົນ ຫລືກຸ່ມບຸກຄົນ. ຄຳຄໍ່າຄວນຈະອະທິບາຍເຖິງສະພາບການ ແຕ່ບົດເພງຂອບພຣະຄຸນຈະມີຄຳຄໍ່າຄວນເຖິງຄວາມທຸກລຳບາກທີ່ຜ່ານມາ ແລະການຂອບພຣະຄຸນພຣະເຈົ້າສຳລັບການຊົງປົດປ່ອຍ. ສະນັ້ນການແຈກແຍກຣະຫວ່າງບົດຄໍ່າຄວນ ແລະບົດເພງສັຣເສີນຈຶ່ງເປັນເຣື່ອງຍາກສຳລັບຜູ້ອ່ານສເມີ.

## ການຂອບພຣະຄຸນເລີ້ມມາຈາກໃສ? (116:1-7)

ການຂອບພຣະຄຸນພຣະເຈົ້າເລີ້ມຈາກຄວາມສັມພັນທີ່ພວກເຮົາມີຕໍ່ພຣະອົງ. ພວກເຮົາສະແດງການຮູ້ບຸນຄຸນຕໍ່ພຣະເຈົ້າເພາະພວກເຮົາຮັກພຣະອົງ ແລະໄດ້ເຫັນວ່າພຣະອົງຊົງປະທານພຣະພອນຫລາຍໆຢ່າງໃນຊີວິດເຮົາ (116:1). ຜູ້ຂຽນບົດເພງນີ້ປະກາດວ່າລາວຮັກພຣະຜູ້ເປັນເຈົ້າເພາະພຣະອົງໄດ້ເຮັດບາງຢ່າງສຳລັບຕົວລາວ. ເວລາລາວມີຄວາມລຳບາກ, ລາວໄດ້ຮ້ອງຫາພຣະເຈົ້າ ແລະພຣະອົງຊົງໄດ້ຍິນສຽງອ້ອນວອນຂອງລາວ. ການຂອບພຣະຄຸນຂອງລາວເກີດມາຈາກຄວາມສັມພັນທີ່ມີກັບພຣະເຈົ້າ ແລະຄວາມແນ່ໃຈວ່າພຣະເຈົ້າຊົງຕຽມພ້ອມທີ່ຈະຊ່ວຍລາວ.

ພວກເຮົາບໍ່ແນ່ໃຈວ່າຜູ້ຂຽນໄດ້ມີປັນຫາແນວໃດ; ໃນຂໍ້ 3, ພວກເຮົາພໍເດົາໄດ້ວ່າອາດຈະແມ່ນການເຈັບປ່ວຍໜັກ, "ຂ້າພະອົງຖືກລ້ອມດ້ວຍອັນຕະລາຍເຖິງຕາຍ," ຫລືອາດຈະເປັນພັຍອັນຕະລາຍສຳລັບຊີວິດເຖິງຂັ້ນຕ້ອງໄດ້ຮ້ອງຫາພຣະເຈົ້າ "ໂຜດຊ່ວຍໃຫ້ພົ້ນດ້ວຍ" (116:4).

ຂໍ້ 5 ພັລນາເຖິງພຣະລັກສນະຂອງພຣະເຈົ້າວ່າພຣະອົງຊົງສັດຊື່, ຊົງຄຸນຄວາມດີ, ແລະຊົງເມດຕາ." ພຣະອົງຊົງປົດປ່ອຍຜູ້ທີ່ເຊື່ອແລະວາງໃຈໃນພຣະອົງຈາກພັຍອັນຕະລາຍເພາະພຣະອົງຊົງສັດຊື່ແລະຊົງເມດຕາ (116:6). ຜູ້ຂຽນມີຄວາມໝັ້ນໃຈເພາະພຣະຜູ້ເປັນເຈົ້າຊົງດີຫລາຍ (116:7). ພວກເຮົາກາຍເປັນບຸກຄົນທີ່ຮູ້ການຂອບພຣະຄຸນເມື່ອພວກເຮົາໄດ້ຮັກພຣະເຈົ້າ ແລະໄດ້ໝັ້ນໃຈໃນຄວາມສັດຊື່, ຄວາມຮັກ, ແລະຄວາມເມດຕາຂອງພຣະອົງ.

**<u>ການຂອບພຣະຄຸນມີລັກສະນະຢ່າງໃດ?</u>** (116:8-14)

ຜູ້ຂຽນບົດເພງນີ້ມີຄວາມຊົມຊື່ນຍິນດີ ເພາະພຣະເຈົ້າຊົງປົດປ່ອຍເຂົາເວລາເຂົາຮ້ອງຫາພຣະອົງ (116:8). ລາວໄດ້ຖາມຕົວເອງວ່າ, "ຍ້ອນຄຸນຄວາມດີທີ່ມີຕໍ່ຂ້ອຍທຸກປະການ, ຂ້ອຍຈະຖວາຍຫຍັງແດ່ແກ່ພຣະຜູ້ເປັນເຈົ້າ?" (116:12). ຄຳຖາມນີ້ອາດຈະເປັນຄຳຖາມຂອງພວກເຮົາທຸກຄົນ ຜູ້ທີ່ເຊື່ອພຣະເຈົ້າ; ແຕ່ຄວາມຈິງແລ້ວ, ມະນຸດບໍ່ສາມາດເຮັດຫຍັງທີ່ຈະເທົ່າທຽມກັບພຣະຄຸນແລະຄວາມຮັກຂອງພຣະເຈົ້າທີ່ມີຕໍ່ພວກເຮົາ.

ການຂອບພຣະຄຸນຄືການຕອບຮັບທີ່ຖືກຕ້ອງສຳລັບພຣະຄຸນຄວາມດີຂອງພຣະເຈົ້າ. ການດຳເນີນຊີວິດດ້ວຍການເຊື່ອຟັງພຣະເຈົ້າ (116:9) ແລະການດຳເນີນຊີວິດດ້ວຍຄວາມສັດຊື່ຕໍ່ພຣະເຈົ້າ (116:10-11) ເປັນສິ່ງທີ່ພວກເຮົາຄວນເຮັດເພື່ອຕອບແທນຄວາມເມດຕາຂອງພຣະອົງ. ສິ່ງນຶ່ງທີ່ຜູ້ຂຽນຈະເຮັດຄືລາວຈະຖວາຍສິ່ງດີໆຕໍ່ພຣະເຈົ້າ (116:13). ທ້າຍສຸດລາວສະແດງຄວາມຮູ້ບຸນຄຸນຕໍ່ໜ້າຊຸມຊົນ ແລະຈະບອກຄົນອື່ນໆເຖິງສິ່ງທີ່ພຣະເຈົ້າໄດ້ກະທຳເພື່ອລາວ (116:14).

**<u>ການຂອບພຣະຄຸນແມ່ນແນໃສ່ໃຜ?</u>** (116:15-19)

ແນ່ນອນທີ່ສຸດການຂອບພຣະຄຸນຈະຕ້ອງແນໃສ່ພຣະຜູ້ເປັນເຈົ້າຜູ້ເປັນທີ່ພຣະພອນ. ການຂອບພຣະຄຸນເປັນການຮັບຮູ້ສິ່ງຍິ່ງໃຫຍ່ທີ່ພຣະອົງໄດ້ຊົງກະທຳ. ພຣະອົງໄດ້ສະແດງຄຸນຄວາມດີແກ່ພວກເຮົາທຸກຄົນ. ໃນຂໍ້ 15 ພຣະທັມຂອງພຣະເຈົ້າກ່າວວ່າ, "ເມື່ອຜູ້ນຶ່ງໃນປະຊາຊົນຂອງພຣະເຈົ້າຕາຍໄປ ພຣະອົງກໍໂສກເສົ້າເສັຽໃຈແທ້ໆ." ພວກເຮົາຄວນຈະແປພຣະທັມຂໍ້ນີ້ວ່າ "ການຕາຍຂອງໄພ່ພົນຂອງພຣະເຈົ້າມີຄ່າສູງສຳລັບພຣະອົງ." ພຣະເຈົ້າປົດປ່ອຍຜູ້ຂຽນຈາກຄວາມຕາຍເພື່ອເຂົາຈະໄດ້ຮັບໃຊ້ພຣະອົງຕໍ່ໄປ. ພຣະອົງສ້າງມະນຸດມາເພື່ອຮັບໃຊ້ພຣະອົງ; ພຣະອົງຊົງຈັດຕຽມແຕ່ລະຄົນເພື່ອການຮັບໃຊ້; ແລະພຣະອົງຊົງມີແຜນໃຫ້ແຕ່ລະຄົນເຮັດ. ສະນັ້ນການຕາຍຂອງຄຣິສຕຽນຈຶ່ງມີຄ່າສູງສຳລັບພຣະເຈົ້າ ແລະເຮັດໃຫ້ພຣະອົງໂສກເສົ້າໃຈ. ການຕອບແທນຄຸນຄວາມດີຂອງພຣະເຈົ້າໃນຂໍ້ 16 ເປັນການຕອບທີ່ຖືກຕ້ອງ, "ພຣະເຈົ້າຂ້າ, ຂ້າພະອົງເປັນຜູ້ຮັບໃຊ້ຂອງພຣະອົງຢ່າງແທ້ຈິງ; ຂ້າພະອົງເປັນຜູ້ຮັບໃຊ້, ລູກຊາຍຂອງຜູ້ຮັບໃຊ້ຂອງພຣະອົງ; ພຣະອົງໄດ້ຊົງປົດປ່ອຍຜູ້ຂ້າຈາກໂສ້ເຫລັກ." ລາວຖວາຍພຣະກຽດພຣະເຈົ້າດ້ວຍການຮັບໃຊ້. ຊົນຊາດອິສຣາເອັນໄດ້ໃຊ້ບົດເພງສັຣເສີນໃນການນະມັສການພຣະຜູ້ເປັນເຈົ້າ (116:17). ການຂອບພຣະຄຸນສຳລັບພວກເຂົາເຈົ້າອາດຈະໝາຍເຖິງເຄື່ອງຖວາຍເພື່ອການຂອບພຣະຄຸນ ຫລືການສະແດງການຂອບພຣະຄຸນແທນເຄື່ອງຖວາຍ. ການນຳເຄື່ອງຖວາຍເພື່ອການຂອບພຣະຄຸນເປັນເຣື່ອງຄວາມສມັກໃຈເພາະພຣະເຈົ້າບໍ່ໄດ້ຊົງສັ່ງໄວ້ ແຕ່ການຖວາຍເຄື່ອງບູຊາທຸກຢ່າງຈະຕ້ອງຖວາຍດ້ວຍຈິດໃຈທີ່ຂອບພຣະຄຸນ. ຜູ້ຂຽນບົດເພງນີ້ສັນຍາທີ່ຈະນະມັສການພຣະເຈົ້າ ດ້ວຍການຂອບພຣະຄຸນ; ລາວຈະຖວາຍພຣະກຽດສຳລັບສິ່ງທີ່ພຣະອົງໄດ້ເຮັດເພື່ອລາວຕໍ່ໜ້າຊຸມຊົນ (116:17-19). ຂໍໃຫ້ພວກເຮົາເປັນຄົນທີ່ຮູ້ບຸນຄຸນ ເພາະພວກເຮົາຮັກພຣະເຈົ້າ ແລະພວກເຮົາຕ້ອງການທີ່ຈະເປັນພຍານໃຫ້ຄົນອື່ນໆສຳລັບພຣະຄຸນພຣະເຈົ້າທີ່ໄດ້ຊົງໄຖ່ຊີວິດຂອງພວກເຮົາ.

<u>ຄຳຖາມ:</u>

1. ໃຫ້ລືມເຣື່ອງໄກ່ແລະໄຂ່. ແມ່ນຫຍັງມາກ່ອນກັນ, ຄວາມຮັກສຳລັບພຣະເຈົ້າຫລືການຮູ້ບຸນຄຸນ?

2. ພຣະພອນແນວໃດແດ່ທີ່ພວກເຮົາມັກລືມຢູ່ເລື້ອຍໆ ເວລາເຮົາສະແດງການຮູ້ບຸນຄຸນຕໍ່ພຣະເຈົ້າ?

3. ພວກເຮົາຈະຕອບແທນຄຸນຄວາມດີຂອງພຣະເຈົ້າໄດ້ວິທີໃດແດ່?

4. ແມ່ນຫຍັງຄືຈຸດສຳຄັນທີ່ຈະຊ່ວຍຄົນອື່ນໆ ໃນຄຳພຍານຂອງຄຣິສຕຽນ?

## <u>ຄຳພຍານສ່ວນຕົວ</u>

ຫລາຍປີຜ່ານມາ ຂ້ອຍລະອາຍທີ່ຈະເປັນພຍານເຣື່ອງພຣະເຈົ້າ. ບໍ່ແມ່ນຂ້ອຍບໍ່ຍິນດີທີ່ພຣະເຈົ້າໄດ້ຊົງໄຖ່ຂ້ອຍໃນພຣະເຢຊູຄຣິດ, ແຕ່ຂ້ອຍບໍ່ຮູ້ວ່າຈະເວົ້າຫຍັງແດ່ທີ່ຕື່ນເຕັ້ນ ຄືກັບຄຳພຍານທີ່ຂ້ອຍເຄີຍໄດ້ຍິນມາ.

ຂ້ອຍເກີດໃນຄອບຄົວຄຣິສຕຽນ ແລະໄປໂບດເປັນປະຈຳ. ພໍ່ແມ່ໄດ້ສັ່ງສອນເຣື່ອງຄວາມຮັກຂອງພຣະເຈົ້າຢູ່ສເມີ. ຂ້ອຍຕອບແທນຄວາມຮັກນີ້ ໂດຍການຮັບພຣະເຢຊູເປັນພຣະຜູ້ໂຜດໃຫ້ພົ້ນເມື່ອອາຍຸໄດ້ຫົກປີ. ຂ້ອຍໃຊ້ຊີວິດຢ່າງຖືກຕ້ອງຕັ້ງແຕ່ນັ້ນມາ. ຂ້ອຍຮູ້ສຶກວ່າພຣະເຈົ້າຊົງເອີ້ນໃຫ້ຮັບໃຊ້ເມື່ອອາຍຸໄດ້ສິບສອງປີ. ຂ້ອຍຕອບຮັບການຊົງເອີ້ນແລະໄດ້ບອກຄອບຄົວແລະຄຣິສຕະຈັກໃຫ້ຮູ້ເຖິງການຕັດສິນໃຈ. ຂ້ອຍໄດ້ຕຽມຕົວເພື່ອການຮັບໃຊ້. ຂ້ອຍຕອບຮັບການເຊີນ ໃຫ້ເປັນສິດຍາພິບານທີ່ໂບດ ບຣຸກສຕັ້ນບັບຕິດ ທີ່ພາກຕາເວັນອອກສ່ຽງເໜືອຂອງຣັຖເທກຊັດ ເວລາຍັງຢູ່ປີທີ່ສາມໃນມະຫາວິທະຍາລັຍ. ຂ້ອຍໄດ້ຮັບໃຊ້ມາເປັນເວລາສາມສິບສີ່ປີ. ທ່ານເຂົ້າໃຈເຣື່ອງທີ່ຂ້ອຍເວົ້າບໍ່?

ໃນຊີວິດຂ້ອຍບໍ່ເຄີຍມີການບໍ່ຟັງຄວາມ ຫລືການຕໍ່ຕ້ານພຣະເຈົ້າ, ແລະກໍບໍ່ເຄີຍພົບຄວາມທຸກລຳບາກຈັກເທື່ອ. ບັດນີ້ຂ້ອຍໄດ້ເຂົ້າໃຈແລ້ວວ່າຄຳພຍານຂອງຂ້ອຍບໍ່ຈຳເປັນຈະຕ້ອງປະກອບດ້ວຍການຫລົງຜິດ. ແຕ່ຄຳພຍານຈະຕ້ອງປະກອບດ້ວຍເວລາ, ສະຖານທີ່, ແລະວິທີທີ່ຂ້ອຍຮູ້ວ່າເຮົາຕ້ອງການພຣະເຢຊູຄຣິດ; ຜູ້ທີ່ຊ່ວຍໃຫ້ມາຮູ້ແລະເຊື່ອພຣະເຢຊູ; ສິ່ງທີ່ໄດ້ປ່ຽນແປງໃນຊີວິດ; ຄວາມຍິນດີໃນສິ່ງທີ່ພຣະເຈົ້າໄດ້ເຮັດ; ແລະສິ່ງທີ່ພຣະເຈົ້າໄດ້ເຮັດໃນຊີວິດຈົນເຖິງປັດຈຸບັນນີ້. ທຸກຄົນທີ່ເປັນຄຣິສຕຽນມີຄຳພຍານຕ່າງໆກັນ.

*ດຣ. ສີດນີ ຄານ*

# ບົດຮຽນບົດທີ່ 10
# ບໍ່ເກີດແຫ່ງຄວາມຮູ້

---

**ຂໍ້ພຣະຄັມພີສໍາລັບບົດຮຽນນີ້:** ສຸພາສິດ 1:7; 3:1-20
**ຂໍ້ພຣະຄັມພີສໍາລັບບົດຮຽນນີ້:** ສຸພາສິດ 1--9
**ຈຸດສໍາຄັນຂອງບົດຮຽນນີ້:** ບອກໃຫ້ຮູ້ວ່າຄວາມຮູ້ມາຈາກພຣະເຈົ້າແລ້ວຊີວິດກໍແຈ່ມໃສ
**ຄໍາຖາມເພື່ອການສໍາຣວດ:** ເປັນຫຍັງຄົນເຮົາຈຶ່ງຂາດຄວາມແຈ່ມໃສໃນເມື່ອຊອກສແວງຫາຢູ່
**ຈຸດປະສົງຂອງບົດຮຽນນີ້:** ເພື່ອບອກໃຫ້ຮູ້ວ່າຄວາມຮູ້ນໍາໄປເຖິງຄວາມແຈ່ມໃສ

**ໜ້າທີ່ສໍາຄັນຂອງຄຣິສຕຽນທຸກຄົນໃຫ້ເຂົ້າໃຈວ່າ**

- ພຣະຄັມພີເທົ່ານັ້ນເປັນຣິດອໍານາດນໍາພາທາງແຫ່ງຊີວິດໃນການເຮັດພາຣະໜ້າທີ່ການຮັບໃຊ້.
- ເພື່ອແບ່ງປັນຂ່າວປະເສີດແກ່ທຸກຄົນໂດຍບໍ່ເລືອກໜ້າ.
- ມະນຸດທຸກຄົນຖືກສ້າງໃຫ້ມີຮູບຮ່າງຄ້າຍຄືພຣະເຈົ້າ.
- ປະຕິບັດຮັບໃຊ້ພຣະເຢຊູໃນການຊ່ອຍເຫລືອຜູ້ອື່ນທາງດ້ານຮ່າງກາຍ, ຈິດວິນຍານ ແລະຈິດໃຈ.
- ນໍາຄອບຄົວໃຫ້ມີຄວາມເຊື່ອເຂັ້ມແຂງ.

## ບົດນໍາ

ທຸກໆຄົນທີ່ຕິດຕາມພຣະເຢຊູຄຣິດຈໍາຕ້ອງມີຄວາມຮູ້ອໍາມະຕະເພື່ອເປັນສະວ່າຣາສີໃນການເປັນໄພ່ພົນຂອງພຣະເຈົ້າຜູ້ບໍຣິສຸດ. ເໝືອນດັ່ງສຸພາສິດລາວກ່າວໄວ້ວ່າ "ເບິ່ງຊ້າງໃຫ້ເບິ່ງຫາງ ເບິ່ງນາງໃຫ້ເບິ່ງແມ່" ຂ້າພະເຈົ້າບໍ່ຮູ້ເຣື່ອງຂອງຊ້າງດີຈຶ່ງບໍ່ຂໍອອກຄໍາເຫັນແຕ່ປະການໃດ ແຕ່ຂ້າພະເຈົ້າພໍຈະເຂົ້າໃຈຄໍາວ່າ "ເບິ່ງນາງໃຫ້ເບິ່ງແມ່" ມີຄວາມໝາຍວ່າແມ່ເປັນແນວໃດລູກສາວກໍເປັນດັ່ງນັ້ນ. ຫາກເຮົາຈະເອົາສຸພາສິດນີ້ມາທຽບໃສ່ເຮົາໃນຖານະທີ່ເຮົາເປັນຜູ້ຕິດຕາມພຣະເຢ ຊູຄຣິດ ຫລືເຮົາຈະຮ້ອງພຣະເຈົ້າວ່າພຣະບິດາ ແປວ່າພໍ່ແລ້ວເຮົາກໍຕ້ອງມີພາກສ່ວນຄືພໍ່ຂອງເຮົາແດ່ເປັນຂອງທັມມະດາ. ດັ່ງນັ້ນເມື່ອເຮົາເປັນຜູ້ຕິດຕາມພຣະເຢຊູຄຣິດເຮົາຈະຕ້ອງມີຄວາມຮູ້ອໍາມະຕະຂອງພຣະເຢຊູຄຣິດ, ມີຄວາມນຶກຄິດຄ້າຍຄືພຣະເຢຊູຄຣິດ.

### ຕົ້ນກໍາເນີດຂອງຄວາມຮູ້ (1:7)

ເລີ້ມຈາກຂໍ້ທີ 1-6 ກ່າວເຖິງຜົນປໂຍດແລະຄຸນຄ່າຂອງຄວາມຮູ້ທີ່ສາມາດຊ່ອຍໄດ້ຫລາຍຢ່າງ, ເມື່ອເວົ້າເຖິງການຊ່ອຍຫລືຊ່ອຍເຫລືອແລ້ວໃຜໆກໍຢາກຮັບການຊ່ອຍເຫລືອ ແຕ່ເຮົາຈະຫາຜູ້ຊ່ອຍຫລືສິ່ງຊ່ອຍເຮົາໃຫ້ພົ້ນຈາກພັຍວິບັດຕ່າງໆ ຍິ່ງໄປກວ່ານັ້ນຍັງຢາກໄດ້ສິ່ງຊ່ອຍໃຫ້ຢູ່ດີກິນດີມີຊີວິດແຈ່ມໃສໄດ້ຢູ່ໃສ? ໃນພຣະທັມສຸພາສິດຂອງເຈົ້າຊີວິດຊະໂລໂມນກະສັດຂອງອິສຣາເອນຜູ້ມີຄວາມສລຽວສລາດແລະມີຄວາມຈໍາດີ ເພິ່ນສາມາດຈື່ສຸພາສິດ 3000 ບົດ ແລະຮ້ອງເພງ 105 ເພງໂດຍການທ່ອງຈໍາ ເພິ່ນແນະນໍາວ່າ *"ທາງທີ່ພາໃຫ້ເກີດຄວາມຮູ້ນັ້ນ ຄືກ່ອນອື່ນພວກເຈົ້າຕ້ອງຢໍາເກງພຣະຜູ້ເປັນເຈົ້າ ຄົນໂງ່ມັກປມາດປັນຍາແລະບໍ່ຍອມສຶກສາຮໍ່າຮຽນ"* (ຂໍ້ 7). ຄໍາເວົ້າຂອງຊະໂລໂມນນັບວ່າເປັນເລີດໃນພຣະທັມສຸພາສິດຈົນຄົນທັງຫລາຍເວົ້າກັນວ່າຄໍາພາສິດຂອງເຈົ້າຊີວິດຊະໂລໂມນເປັນເລີດ ຫາພາສິດໃດໆປຽບ ທຽບບໍ່ໄດ້. ເພິ່ນໄດ້ບອກໃນຂໍ້ 1 ວ່າ *"ສຸພາສິດນີ້ຈະຊ່ອຍໃຫ້ທ່ານຮູ້ຈັກຄຸນຄ່າຂອງປັນຍາ ແລະຄໍາແນະ ນໍາທີ່ດີ*

*ຊ່ອຍໃຫ້ເຂົ້າໃຈຖ້ອຍຄຳທີ່ມີຄວາມໝາຍເລິກ* " ດັ່ງນັ້ນຫາກຜູ້ໃດປະຕິບັດຕາມພາສິດຫລືຄຳແນະນຳຂອງຊະໂລໂມນ ຜູ້ນັ້ນກໍຈະພົບປັນຍາສາມາດເຂົ້າໃຈຖ້ອຍຄຳທີ່ເລິກແລບຂອງອົງພຣະຜູ້ເປັນເຈົ້າ ແລະຜູ້ນັ້ນຈະຮູ້ຈັກຢຳເກງພຣະເຈົ້າຈິນຕົວສັ່ນ, ຊະໂລໂມນຍັງຢ້ຳອີກວ່າ *ຄົນໂງ່ມັກປມາດປັນຍາແລະບໍ່ຍອມສຶກສາຮ່ຳຮຽນ* ດັ່ງນັ້ນຫາກເຮົາບໍ່ຢາກເປັນຄົນໂງ່ກໍຢ່າຄິດປມາດປັນຍາ ແຕ່ຍອມສຶກສາຮ່ຳຮຽນດ້ວຍ.

ຊະໂລໂມນໄດ້ກ່າວຄຳວ່າ *"ຢຳເກງພຣະຜູ້ເປັນເຈົ້າ* " ເຖິງ 11 ເທື່ອເພື່ອເປັນການເນັ້ນໜັກຄຳເວົ້າຂອງເພິ່ນມັນກໍຄ້າຍຄືເຮົາບອກສອນລູກຂອງພວກເຮົາ ບອກແລ້ວກໍບອກອີກດ້ວຍວ່າຢ້ານລູກລືມຫລືຢ້ານລູກບໍ່ເຮັດຕາມຄຳບອກ. ການຢ້ຳທີ່ຊະໂລໂມນກ່າວມີຄວາມໝາຍວ່າ ຢຳເກງດ້ວຍເອົາໃຈໃສ່ສເມີ, ເຊື່ອໄວ້ວາງໃຈໃນທຸກສະພາບການ, ຍ້ອງຍໍສັຣເສີນພຣະອົງໃນທຸກບ່ອນ, ນະມັສການຕາມຂໍ້ກຳໜົດ, ຮັບໃຊ້ພຣະອົງດ້ວຍຄວາມຈິງຮັກພັກດີ, ຖວາຍຕາມມາຕຣາດ້ວຍຄວາມພໍໃຈ ດັ່ງນີ້ເປັນຕົ້ນ. ຄົນໂງ່ທີ່ຊະໂລໂມນກ່າວນັ້ນແມ່ນພວກທີ່ເຮັດກົງກັນຂ້າມກັບສິ່ງທີ່ກ່າວຂ້າງເທິງ.

<u>**ໝາກຜົນຄວາມຮູ້ໃນພຣະເຈົ້າ**</u> (3:1-5 )

ເຮົາສັງເກດເຫັນຄຳວ່າ ຄວາມຮູ້ແລະປັນຍາໄດ້ໃຊ້ກັນເປັນສອງປະເດັນ ເພາະມັນເປັນສີລະປະການຂີດຂຽນຂອງຊາວເຮັບເຣີ ໃນສມັຍໂບຮານ, ດັ່ງໃນພາສາລາວຂອງເຮົາກໍໃຊ້ຄຳເວົ້າສອງຄຳຄືກັນ ຄືຄວາມຮູ້ແລະສະຕິປັນຍາ ແຕ່ສ່ວນຫລາຍແລ້ວເຮົາມັກຈະເຂົ້າໃຈວ່າ ຄວາມຮູ້ນັ້ນແມ່ນການສຶກສາສູງ ສ່ວນປັນຍານັ້ນເຮົາຈະເຂົ້າໃຈວ່າຫົວຄິດປະດິດສ້າງແລະມີພິກໄຫວຄືກັບຊຽງໝ້ຽງ. ຄວາມຈິງທັງຄວາມຮູ້ແລະປັນຍາສອງຢ່າງນີ້ຫາກຢູ່ຄຽງຄູ່ກັນຄົງຈະດີຫລາຍດ້ວຍວ່າຄົນທີ່ມີຄວາມຮູ້ຝ່າຍໂລກນີ້ຈະບໍ່ສາມາດເອົາຄວາມຮູ້ທີ່ມີໃຫ້ຮູ້ຈັກກັບພຣະເຈົ້າໄດ້ ໃນຂະນະທີ່ຄົນບໍ່ມີຄວາມຮູ້ຝ່າຍໂລກນີ້ຫລາຍລ້ານຄົນຮູ້ຈັກພຣະເຈົ້າ ຄວາມຈິງແລ້ວທັງຄວາມຮູ້ແລະສະຕິປັນຍາກໍບໍ່ສາມາດນຳຜູ້ໃດຜູ້ນຶ່ງໃຫ້ຮູ້ຈັກກັບພຣະເຈົ້າໄດ້ ດ້ວຍເຫດນີ້ຊະໂລໂມນຈຶ່ງກ່າວວ່າ *"ຈົ່ງໄວ້ວາງໃຈໃນພຣະເຈົ້າໃຫ້ສຸດຈິດສຸດໃຈຂອງເຈົ້າຢ່າເຊື່ອໝັ້ນໃນຄວາມຮູ້ຂອງຕົນ* " (ຂໍ້ 5). ຄວາມຮູ້ແລະຮູ້ຄວາມຟັງເບິ່ງຄືກັບຫລັງກັນແລະຄວາມໝາຍຂອງມັນກໍກັບຫລັງກັນແທ້ ໂປໂລກ່າວວ່າ *"ຄວາມຮູ້ນັ້ນເຮັດໃຫ້ເຮົາອວດຕົວ* "(1ກຣທ 8:1) ບໍ່ມີໃຜມັກຄົນອວດຕົວເພາະມີຄວາມຮູ້ ແຕ່ຫລາຍຄົນມັກຄົນຮູ້ຄວາມແລະຍ້ອງຍໍວ່າເປັນຕາຮັກຕາແພງແທ້ ແມ່ນລູກຫລານໃຜເດ?.

*"ລູກເອີຍ ຢ່າມລືມໄລສິ່ງທີ່ພໍ່ບອກສອນ ຈົ່ງຈື່ຈຳໃສ່ໃຈສເໝີສິ່ງທີ່ພໍ່ບອກໃຫ້ປະພຶດ ຄຳສັ່ງສອນຂອງພໍ່ຈະໃຫ້ລູກມີຊີວິດຍືນຍາວແລະຈະເຮີນຮຸ່ງເຮືອງ* "(ຂໍ້ 1-2 ສະບັບໃໝ່). ຊະໂລໂມນເວົ້າໃນລັກສະນະພຣະເຈົ້າເປັນພໍ່ແລະເຮົາທັງຫລາຍເປັນລູກ ເພິ່ນບອກເຖິງຜົນປໂຍດຂອງການເຊື່ອຟັງພຣະເຈົ້າຈະມີຊີວິດຍືນຍາວພ້ອມທັງຈະເຮີນຮຸ່ງເຮືອງອີກສ່ວນບຸກຄົນທີ່ບໍ່ຟັງຄຳສັ່ງສອນຂອງພຣະເຈົ້າເຮົາເຫັນຕົວຢ່າງຜົນສະທ້ອນຕົວຢ່າງພວກລູກຫລານທີ່ບໍ່ຟັງຄວາມພໍ່ແມ່ມາຫລາຍແລ້ວ ດັ່ງນັ້ນໃນຖານະທີ່ເຮົາເປັນຄຣິສຕຽນເຮົາຄວນຈື່ຈຳ ແລະປະພຶດຕາມຄຳສັ່ງສອນຂອງພຣະເຈົ້າເພື່ອເຮົາຈະມີຊີວິດຍືນຍາວແລະຈະເຮີນຮຸ່ງເຮືອງຕາມຄຳພາສິດຂອງຊະໂລໂມນ.

*"ຢ່າປະຖິ້ມຈັກເທື່ອຄວາມຈິງຮັກພັກດີແລະຄວາມສັດຊື່. ຈົ່ງເອົາສິ່ງເຫລົ່ານີ້ຄ້ອງຄໍເຈົ້າໄວ້; ຈົ່ງຂຽນຈົດຈຳໄວ້ໃນຫົວໃຈຂອງເຈົ້າ ຖ້າເຈົ້າເຮັດເຊັ່ນນີ້ ທັງພຣະເຈົ້າແລະມະນຸດກໍຈະພໍໃຈນຳ* "(ຂໍ້ 3-4 ສະບັບໃໝ່). ຄຳເວົ້າຂອງຊະໂລໂມນຂາວແຈ້ງເໝືອນແສງຕາເວັນໃນທ່ຽງວັນ ຊຶ່ງເພິ່ນໄດ້ເນັ້ນໜັກຢູ່ສອງຢ່າງຄື;

1: ຄວາມຈິງຮັກພັກດີ ໃນພາລາວທີ່ແປ ມາຈາກພາສາເຮັບເຣີ Faithfulness or truth or fidelity

2. ຄວາມສັດຊື່ ໃນພາສາລາວທີ່ແປມາຈາກພາສາເຮັບເຣີ Loyalty or loving-kindness

ແລະຄຳເວົ້າສອງຄຳນີ້ເປັນຄຳເວົ້າທີ່ເວົ້າກັນເລື້ອຍໆໃນສາຣະຄະດີຂອງຊາວເຮັບເຣີ ເພາະວ່າມັນເປັນການເໝາະສົມທີ່ຈະໃຊ້ຄຳເວົ້າຂອງຄຳນີ້ກັບພຣະເຈົ້າ, ຄຳເວົ້າສອງຄຳນີ້ມັນເປັນຄືເຊືອກເສັ້ນໃຫຍ່ທີ່ຜູກມັດຊາວເຮັດເຣີໃຫ້ເປັນຄົນຈິງຮັກພັກດີດ້ວຍຄວາມສັດຊື່ຕໍ່ພຣະເຈົ້າເປັນຢ່າງດີ.

ສ່ວນຄຳເວົ້າແບບບູຮານເຊັ່ນ *ຈົ່ງເອົາສິ່ງເຫລົ່ານີ້ຄ້ອງຄໍເຈົ້າໄວ້; ຈົ່ງຂຽນຈົດຈຳໄວ້ໃນຫົວໃຈຂອງເຈົ້າ* ເປັນຄຳເວົ້າທີ່ຈຳເປັນຕ້ອງອະທິບາຍໃຫ້ຄົນລຸ້ນໃໝ່ໃຫຍ່ລຸນວ່າບໍ່ແມ່ນເອົາຄ້ອງຄໍແລະຂຽນໃສ່ຫົວໃຈ ເພາະວ່າຫົວໃຈບໍ່ແມ່ນກະດາດທີ່ຂຽນໄດ້ ແລະຈົງຮັກພັກດີນັ້ນບໍ່ມີຕົວຕົນຈະຄ້ອງຄໍໄວ້ຢ່າງໃດ. ຄວາມໝາຍອັກເລິກເຊິ່ງມີຢູ່ວ່າຢ່າລືມສິ່ງທີ່ພຣະເຈົ້າບອກສອນຄ້າຍຄືເອົາຄຳສອນຂອງພຣະເຈົ້າຄ້ອງຄໍໄວ້ມັນຈະກາຍເປັນເໝືອນສາຍສ້ອຍປະດັບຄໍ ຫລືເປັນເຄື່ອງເອ້ໃຫ້ຄົນອື່ນເຫັນ ຈົດມັນໄວ້ທີ່ຫົວໃຈ ແລ້ວໃຈຂອງເຈົ້າຈຶ່ງຈະສະອາດ, ສັດຊື່ດ້ວຍຄວາມຈົງຮັກພັກດີ. ອ່ານພຣະທັມ ພຣະບັນຍັດສອງ 6:4-9.

**<u>ສຸດຍອດຂອງຄວາມຮູ້</u>** (3: 6-10)

ເຈົ້າຊີວິດຊະໂລໂມນອອກຄຳສັ່ງໃຫ້ໄວ້ວາງໃຈໃນພຣະເຈົ້າ ແທນທີ່ຈະເຊື່ອໃນຄວາມຮູ້ຄວາມສລາດຂອງຕົນເອງ ເຖິງແມ່ນເພິ່ນເອງຜູ້ເປັນເຈົ້າຊີວິດຍັງໄວ້ວາງໃຈໃນພຣະເຈົ້າ ເພິ່ນບໍ່ໄດ້ຄິດວ່າເພິ່ນເປັນຄົນສລາດ ເວລາເພິ່ນເຮັດສິ່ງໃດເພິ່ນກໍລະນຶກເຖິງຫລືອ້ອນວອນຂໍການຊົງນຳຈາກພຣະເຈົ້າເສັຽກ່ອນ ເພິ່ນຍັງບອກອີກວ່າຖ້າຫາກອິສຣາເອນເຮັດດັ່ງນີ້ມັນກະກາຍເປັນເໝືອນຢາວິເສດທີ່ປິ່ນປົວບາດແຜໃຫ້ດີ. ແມ່ນແລ້ວເຈົ້າຊີວິດຊະໂລໂມນເປັນເຈົ້າຊີວິດທີ່ເຊື່ອພຣະເຈົ້າຢ່າງເຄັ່ງຄັດ ແລະເພິ່ນມີອຳນາດສັ່ງໃຫ້ອິສຣາເອນໄວ້ວາງໃຈໃນພຣະເຈົ້າ ແຕ່ສຳລັບເຮົາທັງຫລາຍບໍ່ແມ່ນຄົນອິສຣາເອນ ແລະບໍ່ຢູ່ໃຕ້ອຳນາດຂອງເພິ່ນ ດັ່ງນັ້ນໃນຖານະທີ່ເຮົາເປັນຄຣິສຕຽນເຮົາຈະຕ້ອງຕັດສິນໃຈວ່າຈະເຊື່ອໃນຄວາມຮູ້ຄວາມສລາດຂອງຕົນເອງບໍ່? ຫລືຈະໄວ້ວາງໃຈໃນການຊົງນຳຂອງພຣະເຈົ້າ ສຳລັບຂ້າພະເຈົ້າແລ້ວເຂົ້າໃຈວ່າຫາກເຮົາຢາກເປັນສາວົກທີ່ດີ, ເປັນຜູ້ຮັບໃຊ້ທີ່ດີແລະເປັນຄຣິສຕຽນທີ່ດີຈະຕ້ອງເຊື່ອແລະໄວ້ວາງໃຈພຣະເຈົ້າຜູ້ທີ່ເຮົາຕິດຕາມຢ່າງບໍ່ມີຂໍ້ຫລີກລ້ຽງໄດ້.

ເຈົ້າຊີວິດຊະໂລໂມນກ່າວວ່າ *"ຈົ່ງຖວາຍກຽດແດ່ອົງພຣະຜູ້ເປັນເຈົ້າ ດ້ວຍການຖວາຍຜົລປູກອັນດີທີ່ສຸດແກ່ພຣະອົງ ຖ້າເຈົ້າເຮັດດັ່ງນີ້ ເຈົ້າມີເຂົ້າເຕັມເລົ້າ ແລະມີເຫລົ້າອະງຸ່ນຫລາຍຈົນບໍ່ມີໃຫ້ຈະໃສ່"* (ຂໍ້ 9-10). ມີຄວາມໝາຍວ່າຫາກອິສຣາເອນຝຶກຫັດການຖວາຍຜົນແຣກທີ່ດີທີ່ສຸດ ທີ່ຕົນເອງຫາມາໄດ້ດ້ວຍເຫື່ອແຮງແກ່ອົງພຣະຜູ້ເປັນເຈົ້າດ້ວຍໃຈສັດທາ ພຣະເຈົ້າກໍຈະອວຍພອນໃຫ້ຊີວິດຜູ້ນັ້ນອຸດົມສົມບູນ. ການຖວາຍສິບລົດເປັນພາກສ່ວນນຶ່ງຂອງການນະມັສການຂອງຄຣິສຕຽນ, ພຣະເຈົ້າຊົງກ່າວວ່າ *"ຢ່າເຂົ້າມານະມັສການເຮົາໂດຍບໍ່ມີເຄື່ອງຖວາຍ"* (ອົບພະຍົບ 23:15ຂ). ແລະພຣະເຈົ້າທ້າທາຍວ່າກ່ອນຈົບພຣະຄັມພີເດີມວ່າ *"ຈົ່ງລອງເຮັດຢ່າງນັ້ນກັບເຮົາເບິ່ງ ແລະໝູ່ເຈົ້າຈະເຫັນວ່າ ເຮົາຈະໄຂປະຕູສວັນ ແລະຖອກເທພຣະພອນທຸກໆຊະນິດມາຍັງໝູ່ເຈົ້າ"* (ມາລາກີ 3: 10).

ເມື່ອບໍ່ຫລາຍປີມານີ້ ໂບດຂອງພວກເຮົາໄດ້ຮັບໜັງສືນ້ອຍຈາກທະນາຄານຫລາຍເທື່ອດ້ວຍກັນ ແຕ່ລະເທື່ອພວກເຮົາຖືກໃໝປະມານ $6.00 ເພາະວ່າເພິ່ນໄດ້ຂຽນເຊັກຖວາຍໃຫ້ພຣະເຈົ້າໂດຍບໍ່ມີເງິນໃນບັນຊີຂອງເພິ່ນ, ຂ້າພະເຈົ້າຜູ້ເປັນອາຈານຂອງເພິ່ນກໍໄດ້ເອົາຈົດໝາຍນັ້ນໃຫ້ເພິ່ນແລະຍັງບອກເພິ່ນວ່າຫາກບໍ່ມີກໍບໍ່ຕ້ອງຖວາຍກະໄດ້ ແຕ່ເພິ່ນກໍຂໍໂທດ ແລະຂຽນເຊັກໃບໃໝ່ເພີ້ມຕາມຈຳນວນທີ່ຖືກໃໝພ້ອມຈຳນວນເຊັກໃນອາທິດຕໍ່ມາ. ເນື່ອງຈາກຄວາມສັດຊື່ໃນການຖວາຍຂອງເພິ່ນພຣະເຈົ້າໄດ້ອວຍພອນໃນເວລານີ້ ພວກເພິ່ນກາຍເປັນຄອບຄົວອຸດົມສົມບູນ, ພວກລູກທີ່ບໍ່ຄ່ອຍດີຕໍ່ເພິ່ນກໍກັບມາເປັນຜູ້ຊິດຊ່ອຍໂດຍບໍ່ໃຫ້ພໍ່ແມ່ລຳບາກໃນສິ່ງໃດ, ນີ້ແຫລະຄືພຣະພອນໃນການຖວາຍທີ່ຂ້າພະເຈົ້າຢາກຍົກມາເປັນຕົວຢ່າງ.

**<u>ການເອົາໃຈໃສ່ໃນຄຳສອນ</u>** (3:11-20)

ຂໍ້ 11 ເລີ້ມດ້ວຍຄຳວ່າ *"ລູກເອີຍ"* ເປັນຄຳເວົ້າທີ່ອ່ອນຫວານເພາະຊະໂລໂມນເຂົ້າໃຈວ່າພຣະເຈົ້າເປັນພຣະບິດາ (ພໍ່) ຂອງເຮົາທັງຫລາຍທີ່ກຳລັງເວົ້າກັບລູກຂອງພຣະອົງດ້ວຍຄວາມຮັກອັນອ່ອນຫວານຂອງພຣະອົງ, ດັ່ງນັ້ນໃນຖານະຂອງຊະໂລໂມນເປັນກະສັດຂອງອິສຣາເອນກໍປຽບເໝືອນເປັນພໍ່ຂອງອິສຣາເອນເພິ່ນຈຶ່ງຢືມຄຳເວົ້າຂອງພຣະເຈົ້າ

ທີ່ເປັນພຣະບິດາຂອງຄົນທັງປວງມາໃຊ້ກັບອິສຣາເອນໂດຍກ່າວວ່າ *"ລູກເອີຍ, ເມື່ອພຣະຜູ້ເປັນເຈົ້າຊົງບອກສອນເຈົ້າ ຈົ່ງຕັ້ງໃຈຟັງ ແລະຍຶດຖືເປັນເຄື່ອງເຕືອນໃຈ ພຣະເຈົ້າຊົງບອກສອນຜູ້ທີ່ພຣະອົງຊົງຮັກ "* (ຂໍ້ 11). ຄຳວ່າຕັ້ງໃຈຟັງມີຄວາມໝາຍວ່າຢ່າປະລະຄຳສອນຂອງພຣະເຈົ້າມັນອາດຈະເປັນການຍາກທີ່ຈະປະຕິບັດຕາມຄຳສອນ ແຕ່ຈົ່ງເຂົ້າໃຈວ່າພຣະເຈົ້າຮັກເພິ່ນຈຶ່ງສອນ ຖ້າຫາກເຮົາເຂົ້າໃຈໃນສິ່ງທີ່ພຣະເຈົ້າຊົງສອນເຮົາກໍຈະມີຄວາມສຸກໃຈ *"ມະນຸດຜູ້ມີປັນຍາ ແລະມີຄວາມເຂົ້າໃຈຍ່ອມມີຄວາມສຸກ "* (ຂໍ້ 13).

ຄຸນຄ່າຂອງປັນຍາຍ່ອມມີຄ່າຫລາຍກວ່າເງິນຄຳ ດັ່ງຄຳບູຮານກ່າວວ່າ ມີເງິນເຕັມພາບໍ່ເທົ່າຜຍາເຕັມທ້ອງ *"ປະໂຍດທີ່ໄດ້ຈາກປັນຍາມີຫລາຍກວ່າທີ່ໄດ້ຈາກເງິນຄຳ ມັນມີຄຸນຄ່າຫລາຍກວ່າເພັດ ບໍ່ມີອັນໃດໃນໂລກຫາປຽບປັນ ຍາໄດ້"* (ຂໍ້ 14-15). ເຮົາເຫັນພຣະພອນຈາກປັນຍາຢູ່ສີ່ຢ່າງຄື 1. ມີຊີວິດຍືນຍາວ 2. ຊັບສິນ ບັດ 3. ກຽດຕິຍົດ. 4. ມ່ວນຊື່ນແລະ*ປອດພັຍ, "ປັນຍາໃຫ້ເຈົ້າມີຊີວິດຍືນຍາວ ເຊັ່ນດຽວກັບຊັບສິນບັດ ແລະ ກຽດຕິຍົດ ມັນເຮັດໃຫ້ຊີວິດຂອງເຈົ້າມ່ວນຊື່ນປອດພັຍ "* (ຂໍ້ 1-17). ທັງສີ່ປະການທີ່ກ່າວມານີ້ແມ່ນໄດ້ຮັບໃນຂະນະທີ່ເຮົາຢູ່ໃນໂລກນີ້ ດັ່ງນັ້ນໃຜກໍຕາມຫາກຕ້ອງການທັງສີ່ຢ່າງນີ້ ກ່ອນອື່ນໝົດລາວຈະຕ້ອງຢຳເກງພຣະຜູ້ເປັນເຈົ້າເສັຽກ່ອນ.

## <u>ຄຳຖາມ</u>

1. ພຣະທັມສຸພາສິດທີ່ອ່ານວັນນີ້ສອນຫຍັງທ່ານແດ່?
2. ທ່ານພໍຈະເຫັນຜູ້ໃດບໍ່ທີ່ຢຳເກງພຣະເຈົ້າແລ້ວຊີວິດຂອງເພິ່ນກໍອຸດົມສົມບູນ?
3. ສະຕິປັນຍາຂອງໂລກແລະສະຕິປັນຍາຊຶ່ງມາຈາກພຣະເຈົ້າຕ່າງກັນຢ່າງໃດ?
4. ຄຳວ່າຕັ້ງໃຈຟັງທີ່ກະສັດຊະໂລໂມນໄດ້ແນະນຳນັ້ນມີຄວາມໝາຍແນວໃດ?
5. ທ່ານຈະເລີ່ມຕົ້ນຕັ້ງໃຈຟັງພຣະເຈົ້າແນວໃດໃນມື້ນີ້?

*ດຣ. ທຸມພັນ ວົງສຸຣິດທ໌*

# ບົດຮຽນທີ 11
# ຄວາມຮູ້ພາໃຫ້ເຮັດຖືກຕ້ອງ

**ຂໍ້ພຣະຄັມພີສໍາລັບບົດຮຽນນີ້:** ສຸພາສິດ 11:1-11, 17-21, 23-28
**ຂໍ້ພຣະຄັມພີສໍາລັບບົດຮຽນນີ້:** ສຸພາສິດ 10:1--22:16
**ຈຸດສໍາຄັນຂອງບົດຮຽນນີ້:** ຄົນສລາດຈະເຮັດຕາມນໍ້າພຣະທັຍສເມີ
**ຄໍາຖາມເພື່ອການສໍາຣວດ:** ປັນຍາເບິ່ງເຫັນອານາຄົດຢ່າງໃດ?
**ຈຸດປະສົງຂອງບົດຮຽນນີ້:** ເພື່ອຊອກເບິ່ງວ່າ ການດໍາຣົງຊີວິດດ້ວຍປັນຍາຈະມີດີຢ່າງໃດ?

**ໜ້າທີ່ສໍາຄັນຂອງຄຣິສຕຽນທຸກຄົນໃຫ້ເຂົ້າໃຈວ່າ**

- ພຣະຄັມພີເທົ່ານັ້ນເປັນຣິດອໍານາດນໍາພາທາງແຫ່ງຊີວິດໃນການເຮັດພາຣະໜ້າທີ່ການຮັບໃຊ້.
- ເພື່ອແບ່ງປັນຂ່າວປະເສີດແກ່ທຸກຄົນໂດຍບໍ່ເລືອກໜ້າ.
- ມະນຸດທຸກຄົນຖືກສ້າງໃຫ້ມີຮູບຮ່າງຄ້າຍຄືພຣະເຈົ້າ.
- ປະຕິບັດຮັບໃຊ້ພຣະເຢຊູໃນການຊ່ອຍເຫລືອຜູ້ອື່ນທາງດ້ານຮ່າງກາຍ, ຈິດວິນຍານ ແລະຈິດໃຈ.

## ບົດນໍາ

ສິນທັມເປັນເຂັມທິດໃນການເດີນທາງຂອງຊີວິດປະຈໍາວັນຂອງຄົນສິນທັມ ແລະຄໍາວ່າສິນທັມທີ່ກ່າວໃນພຣະທັມຄັມພີມີຄວາມໝາຍວ່າ ແມ່ນສິນທັມທີ່ມາຈາກອົງພຣະຜູ້ເປັນເຈົ້າ ແລະຜູ້ມີສິຣທັມນັ້ນຈະຕ້ອງມີຊີວິດການເປັນຢູ່ຖືກຕ້ອງຕາມສາຍພຣະເນດ (ຕາ) ຂອງອົງພຣະຜູ້ເປັນເຈົ້າ ບໍ່ແມ່ນສິນທັມຕາມມາຕະຖານຂອງມະນຸດທີ່ເຫັນດ້ວຍຕາເປົ່າ. <u>ໝາຍເຫດ:</u> ສໍາລັບບົດຮຽນບົດນີ້ຂ້າພະເຈົ້າໄດ້ໃຊ້ພຣະຄັມພີສະບັບໃໝ່ສີຂຽວຫລືສີຟ້າ ທັງນີ້ກໍເນື່ອງຈາກວ່າພຣະຄັມພີສະບັບສີດໍານັ້ນບໍ່ມີ.

### ລາງວັນມີໃຫ້ຄົນສິຣທັມທຸກວັນ (11:1-11)

*"ພຣະຜູ້ເປັນເຈົ້າກຽດຊັງຜູ້ທີ່ໃຊ້ຕາຊັ່ງຂີ້ຫລັກ ພຣະອົງຊົງດີໃຈນໍາຜູ້ທີ່ຊັ່ງຕວງຢ່າງຖືກຕ້ອງ"* (ຂໍ້ 1). ໃນສມັຍບູຮານຕາຊັ່ງທີ່ເຮັດດ້ວຍເງິນ, ດ້ວຍໄມ້ ແລະລາງເທື່ອກໍເຮັດດ້ວນຫີນໃນການຊື້ຂາຍ ແຕ່ສ່ວນຫລາຍພວກຜູ້ຂາຍມັກຈະໂລບຕາຊິງ ຄົນພວກນີ້ພຣະເຈົ້າປະກາດວ່າເພິ່ນກຽດຊັງ ຂ້າພະເຈົ້າເຂົ້າໃຈວ່າຖ້າເພິ່ນກຽດຊັງແລ້ວພວກນີ້ຄືຈະບໍ່ເຫັນແຜ່ນດິນສວັນຂອງເພິ່ນຕີ. *"ຄົນອວດດີຈະຖືກອັບອາຍຂາຍໜ້າ ແຕ່ຄົນມີປັນຍາກໍຖ່ອມຕົວລົງ"* (ຂໍ້ 2). ຄົນອວດດີໝາຍເຖິງຄົນອວດເກ່ງ, ອວດຕົວວ່າຮູ້ ໃຜເວົ້າຫຍັງ, ບອກຫຍັງກະຮູ້ແລ້ວແຕ່ເຮັດຫຍັງບໍ່ຖືກຈັກເທື່ອ ຊະໂລໂມນບອກວ່າຄົນປະເພດນີ້ຈະຖືກຂາຍໜ້າ ແຕ່ຜູ້ມີປັນຍາແທ້ກໍເປັນຄົນຖ່ອມຕົວຫລືບໍ່ຂີ້ອວດ. *"ຄົນດີມີຄວາມສັດຊື່ນໍາພາແຕ່ຄົນຄົດລ້ຽວກໍຖືກທໍາລາຍດ້ວຍຄວາມບໍ່ຈິງ"* (ຂໍ້ 3). ຄົນດີມີຄວາມສັດຊື່ຄ້າຍຄືຄົນລ້ຽງແກະນໍາພາແກະຂອງຕົນໄປບ່ອນປອດພັຍ ບ່ອນມີຫຍ້າຂຽວສົດດີ ສ່ວນຄົນຄົດລ້ຽວຈະຖືກພຣະເຈົ້າທໍາລາຍ. *"ຄວາມຮັ່ງມີຈະຊ່ອຍຫຍັງບໍ່ໄດ້ໃນມື້ທີ່ປະເຊີນຄວາມຕາຍ ແຕ່ຄວາມສັດຊື່ຊ່ອຍຊີວິດຂອງຕົນໄວ້ໄດ້"* (ຂໍ້ 4). ຊະໂລໂມນພະຍາຍາມສອນໃຫ້ຄົນຮັ່ງມີວ່າເງິນຄໍາທີ່ມີບໍ່ສາມາດຊື້ຊີວິດໃນໂລກນີ້ສັນໃດ ໃນໂລກໜ້າແຮງຊື້ບໍ່ໄດ້ ດັ່ງນັ້ນເມື່ອຮັ່ງມີຈົ່ງຂອບພຣະຄຸນພຣະເຈົ້າ ແລະເອົາຄວາມຮັ່ງມີນັ້ນໄປເປັນຜົນປໂຍດແກ່ຄົນອື່ນ. ສ່ວນຂໍ້ 4-6 ນັ້ນໄດ້ສອນຫລັກຄໍ້າປະກັນຂອງຄວາມຊອບທັມ.

*"ເມື່ອຄົນຊົ່ວຮ້າຍຕາຍໄປ ຄວາມຫວັງຂອງລາວກໍໄປດ້ວຍ. ການໄວ້ໃຈໃນຄວາມຮັ່ງມີກໍອັບປໂຍດ"* (ຂໍ້ 7). ຄົນຊົ່ວຮ້າຍບໍ່ມີສ່ວນໃນແຜ່ນດິນສວັນຂອງພຣະເຈົ້າ ດັ່ງນັ້ນເມື່ອຄົນຊົ່ວຮ້າຍຕາຍໄປຈຶ່ງບໍ່ມີຫວັງຫຍັງອີກ, ສ່ວນຄົນທີ່ໄວ້ໃຈໃນຄວາມຮັ່ງມີເມື່ອຕາຍໄປຂອງທຸກຢ່າງກໍເປັນຂອງຜູ້ອື່ນ. ເຮົາທຸກຄົນເກີດມາໃນໂລກນີ້ຕົວເປົ່າສັນໃດ ເຮົາກໍຈະຈາກ ໂລກນີ້ໄປຕົວເປົ່າສັນນັ້ນ. *"ຄົນຊອບທັມໄດ້ຮັບການຄຸ້ມຄອງໃຫ້ພົ້ນຈາກຄວາມເດືອດຮ້ອນ ແຕ່ຄົນຊົ່ວຮ້າຍເປັນຜູ້ຮັບເອົາແທນ"* (ຂໍ້ 8)ມີຄວາມໝາຍວ່າ ພຣະເຈົ້າຈະຄຸ້ມຄອງຄົນຊອບທັມ ແລະໃຫ້ຄວາມເດືອດຮ້ອນຕົກໃສ່ຄົນຊົ່ວຮ້າຍແທນ. *"ຄົນບໍ່ຮູ້ຈັກພຣະເຈົ້າທຳລາຍຄົນດ້ວຍຄຳເວົ້າຂອງຕົນ ແຕ່ຄົນຊອບທັມພົ້ນພັຍດ້ວຍອາສັຍປັນຍາຊ່ວຍ"* (ຂໍ້ 9). ຄຳເວົ້າຂອງຄົນສາມາດໃຊ້ເໝືອນອາວຸດສົງຄາມ ແລະເວົ້າໃຫ້ຍຸດຕິສົງຄາມ ແຕ່ຄົນຊອບທັມຈະໃຊ້ຄຳເວົ້າທີ່ຖືກຕ້ອງ ເພາະລາວມີປັນຍາທີ່ມາຈາກພຣະເຈົ້າ. *"ເມື່ອຄົນສັດຊື່ຮັ່ງມີເປັນດີ ຊາວເມືອງກໍເປັນສຸກໃຈ ເມື່ອຄົນຊົ່ວຮ້າຍຕາຍໄປກໍຈະມີສຽງຮ້ອງຢ່າງຊົມຊື່ນ ຄົນຊອບທັມນຳຄວາມຈະເຣີນມາສູ່ປະເທດຊາດ ແຕ່ຄົນຊົ່ວຮ້າຍທຳລາຍປະເທດຊາດດ້ວຍຄຳເວົ້າຂອງຕົນ" (ຂໍ້ 10-11).* ທັງສອງຂໍ້ນີ້ເວົ້າເຖິງຄົນດີມີປໂຍດແກ່ສັງຄົມ, ແກ່ບ້ານເມືອງສ່ວນຄົນຊົ່ວຈະຢູ່ໃສກໍຕາມລາວມັກຈະເປັນຄົນລ່ຳໄລທຸກຢ່າງ.

<u>**ຜົນຮັບຂອງການກະທຳ**</u> (11:17-21, 23-25, 28)

ຄົນສົນທັມແລະຄົນຊົ່ວຈະຕ້ອງຮັບໝາກຜົນທີ່ຕົນກະທຳດັ່ງທີ່ຊະໂລໂມນກ່າວ *"ຄົນດີມີສີແກ່ຕົວ ຄົນຊົ່ວທຳຕົວໃຫ້ໝົ່ນໝອງ ຄົນຊົ່ວຮ້າຍບໍ່ໄດ້ຮັບສິ່ງໃດສິ່ງນຶ່ງເລີຍ; ແຕ່ຄົນທີ່ຫວ່ານຄວາມຊອບທັມຍ່ອມໄດ້ຮັບບຳເໜັດເປັນແນ່ແທ້"* (ຂໍ້ 17-18). ມີຫລາຍເທື່ອຄົນສົນທັມມັກຈະມີຄຳຖາມວ່າ ເປັນຫຍັງຄົນຊົ່ວຮ້າຍຈຶ່ງຮັ່ງມີເປັນດີແທ້? ອີງຕາມພຣະທັມຄັມພີສອນພວກເຮົາວ່າ ຄວາມອຸດົມສົມບູນຂອງຄົນຊົ່ວຮ້າຍຈະບໍ່ຍາວນານເທົ່າໃດ ແຕ່ຄວາມຊອບທັມນັ້ນຈະຮັບລາງວັນອັນອຸດົມສົມບູນເປັນນິດ, ດັ່ງນັ້ນເຮົາທັງຫລາຍຜູ້ຢູ່ໃນຄວາມຊອບທັມຊຶ່ງເປັນເຣື່ອງຂອງຈິດວິນຍານ ສົມຄວນຕັ້ງໝັ້ນຄົງຢູ່ຈົນກວ່າວັນນັ້ນມາເຖິງແລ້ວເຮົາຈະເຫັນການປ່ຽນແປງໃນລະວ່າງຄົນຊອບທັມແລະອະທັມໄດ້ຮັບ *"ຜູ້ທີ່ຕັ້ງໝັ້ນຢູ່ໃນຄວາມຊອບທັມຈະມີຊີວິດຢູ່; ແຕ່ຜູ້ທີ່ມັກເຮັດຜິດຢູ່ເລື້ອຍໆ ກໍຈະເຖິງແກ່ຄວາມຕາຍ"* (ຂໍ້ 19). ຄວາມຕາຍເປັນຄ່າຈ້າງຂອງຄວາມຜິດບາບ ດັ່ງນັ້ນເມື່ອບຸກຄົນໃດເຮັດບາບກໍຈະຕາຍໃນຄວາມບາບ ແລະຍ້ອນຄວາມບາບນັ້ນບຸກຄົນນັ້ນຈຶ່ງຂາດຈາກຣັສມີຂອງອົງພຣະຜູ້ເປັນເຈົ້າ ແປວ່າບຸກຄົນນັ້ນບໍ່ໄດ້ຮັບການຄຸ້ມຄອງຈາກ ພຣະເຈົ້າ (ໂຣມ 3:23). ສ່ວນບຸກຄົນທີ່ຢູ່ໃນຄວາມຊອບທັມນັ້ນ ພຣະເຈົ້າໄດ້ຊົງຖືວ່າຄວາມຜິດບາບຂອງຜູ້ນັ້ນໄດ້ຖືກຄຶງໄວ້ທີ່ໄມ້ກາງແຂນຂອງພຣະເຢຊູແລ້ວ ແປວ່າພຣະເຢຊູຕາຍແທນຄວາມຜິດບາບຜູ້ຊອບທັມແລ້ວ. *"ພຣະເຈົ້າຊົງ ກຽດຊັງຄົນມີໃຈຊົ່ວຊ້າ ແຕ່ພຣະອົງຊົງຮັກຜູ້ປະພຶດດີ ຄົນຊົ່ວຮ້າຍຈະຕ້ອງຖືກທຳລາຍແນ່ນອນ; ແຕ່ຄົນຊອບທັມຈະຜິກໜີໄປໄດ້"* (ຂໍ້ 20-21). ບັນດາຄົນຊົ່ວຮ້າຍພຣະເຈົ້າແລະມະນຸດກໍຊັງເໝືອນກັນ ແຕ່ໃນເວລານີ້ມະນຸດບໍ່ສາມາດເຮັດອັນຕະລາຍຫຍັງໄດ້ ຍ້ອນວ່າບໍ່ທັນເຖິງເວລາຂອງອົງພຣະຜູ້ເປັນເຈົ້າ ແຕ່ເມື່ອໃດຫາກເວລາຂອງພຣະອົງມາເຖິງແລ້ວຄົນຊົ່ວຮ້າຍ ທຸກຄົນຈະຕ້ອງຖືກທຳລາຍແນ່ນອນ ສ່ວນຄົນຊອບທັມນັ້ນພຣະເຈົ້າຈະຊົງໂຜດໃຫ້ພົ້ນ.

*"ຜູ້ຍິງງາມແຕ່ບໍ່ສລາດ ກໍປານວ່າເອົາແຫວນຄຳເກາະດັງໝູ"* (ຂໍ້ 22). ຄົນຈີບງາມເປັນພຣະພອນອັນນຶ່ງ ແຕ່ຫາກວ່າງາມຊື່ໆແຕ່ເຮັດຫຍັງກໍບໍ່ເປັນຄວາມງາມນັ້ນກໍບໍ່ເໝາະກັບລາວ, ອີກປະການນຶ່ງຄຳເປັນຂອງມີຣາຄາໃນບັນດາພວກເຄື່ອງເອ້ຕ່າງໆມາແຕ່ດຶກດຳບັນ ໂດຍສະເພາະຢ່າງຍິ່ງໃນສມັຍບູຮານພວກຜູ້ຍິງເອົາແຫວນຄຳເກາະຮູດັງເປັນເຄື່ອງເອ້ ດັ່ງທີ່ເຫັນໃນພຣະຄັມພີເດີມດັ່ງນີ້; *ດັ່ງນັ້ນຂ້ອຍຈຶ່ງເອົາແຫວນຄຳປະດັບທີ່ດັງ ຂອງນາງ"* (ປຖກ 24:47). ໂລກທຸກວັນນີ້ຍັງໃຊ້ແຫວນຄຳເກາະຮູດັງຢ່າງຫລວງຫລາຍໃນປະເທດອິນເດັຽ ແລະຫລາຍເທື່ອເຮົາຍັງເຫັນພວກຍິງໜຸ່ມ, ຊາຍໜຸ່ມຕາມບ້ານເມືອງເຮົາໃຊ້ກັນຢູ່. ແຕ່ຈະເອົາແຫວນຄຳເກາະໃສ່ຮູດັງ ໝູມັນກໍຈະຢຽບຖິ້ມ ເທົ່ານັ້ນເພາະໝູເປັນສັດຢູ່ຢ່າງເປິະເປື້ອນ ແລະຄຳກໍຈະບໍ່ມີຄ່າສຳລັບມັນ ດ້ວຍເຫດນີ້ຊະໂລໂມນຈຶ່ງກ່າວວ່າ *ຜູ້ຍິງງາມແຕ່ບໍ່ສລາດ ກໍປານວ່າເອົາແຫວນຄຳເກາະດັງໝູ* ແປວ່າງາມແຕ່ບໍ່ສລາດພໍທີ່ຈະຮູ້ຈັກພຣະເຈົ້າຜູ້ເປັນຫົນທາງແຫ່ງຄວາມລອດພົ້ນຄວາມງາມຂອງນາງກໍບໍ່ມີຄ່າອັນໃດ, ມັນຄ້າຍຄືກັບຕົວໝູອ້ວນພີທີ່ບໍ່ສົມຄວນທີ່ຈະເອົາແຫວນຄຳໄປ

ເກາະໃສ່ດັງມັນເພາະມັນຈະທຳລາຍຖົ້ມຊື່ງ.

*"ຍິ່ງໃຫ້ຍິ່ງມີ ຍິ່ງຂີ້ຖີ່ຍິ່ງທຸກຈົນລົງ "* (ຂໍ້ 24) ເປັນຄຳປິດສນາທີ່ແປຍາກ ແຕ່ສຳລັບພີ່ນ້ອງຄຣິສຕຽນຈະເຂົ້າໃຈວ່າ ພຣະເຈົ້າຈະອວຍພຣະພອນຜູ້ຖວາຍ ແລະຜູ້ໃຫ້ຄົນອື່ນດ້ວຍຄວາມເຕັມໃຈດັ່ງມີຄຳກ່າວໄວ້ວ່າ *"ເຮົາຈະໄຂປະຕູສວັນ ແລະຖອກເທພຣະພອນທຸກໆຊະນິດມາຍັງພູ່ເຈົ້າ "* (ມາລາກີ 3: 10ຂ). *"ຈົ່ງຖວາຍກຽດແດ່ພຣະຜູ້ເປັນເຈົ້າ ດ້ວຍການຖວາຍຜົລປູກອັນດີທີ່ສຸດແກ່ພຣະອົງ ຖ້າເຮັດດັ່ງນັ້ນເຈົ້າຈະມີເຂົ້າເຕັມເລົ້າ ແລະມີເຫລົ້າອະງຸ່ນຫລາຍຈົນບໍ່ມີໃຫໃສ່ "* (ສຸພາສິດ 3:9-10). *"ຈົ່ງໃຫ້ເຂົາແລະພຣະເຈົ້າຈະຊົງໃຫ້ທ່ານແລະ ໃນການຕັກຂອງທ່ານຈະໄດ້ຮັບຕວງດ້ວຍເຄື່ອງຜອງອັນໃດພຣະເຈົ້າຈະຊົງຕວງໃຫ້ພວກທ່ານດ້ວຍເຄື່ອງຜອງອັນນັ້ນ "* (ລູກາ 6:38). *ຍິ່ງຂີ້ທີ່ຍິ່ງທຸກຈົນລົງ* ຄົນຂີ້ຖີ່ມັກຈະບໍ່ຍອມແບ່ງປັນຜູ້ໃດ ແມ້ກະທັ້ງຄົນຍາກຈົນ, ພຣະຄັມພີສອນວ່າຄົນຂີ້ຖີ່ຍິ່ງທຸກຈົນລົງເພາະວ່າ *"ພຣະອົງຊົງໂຜດໃຫ້ ຄົນອຶດຢາກອີ່ມດ້ວຍຂອງດີ ແລະຊົງກະທຳໃຫ້ຄົນຮັ່ງມີໜີໄປມືເປົ່າ "* (ລູກາ 1:53).

*"ຜູ້ທີ່ເພິ່ງໃນຊັບສົມບັດຂອງຕົນນັ້ນ ຈະຖືກທຳລາຍດັ່ງໃບໄມ້ທີ່ຫລົ່ນຈາກກິ່ງ ແຕ່ຜູ້ທີ່ຊອບທັມຈະຈະເຣີນຮຸ່ງເຮືອງ "* (ຂໍ້ 28). ຊັບສົມບັດບໍ່ແມ່ນຂອງຊົ່ວນິຈໜອງແຕ່ຢ່າງໃດ ໃຜໆກໍຢາກມີຊັບສົມບັດ ແຕ່ຈະບໍ່ສາມາດເພິ່ງຊັບສົມບັດຂອງຕົນໄດ້ ດັ່ງທີ່ໄດ້ອ່ານມາແລ້ວ *"ຄວາມຮັ່ງມີຈະຊ່ອຍຫຍັງບໍ່ໄດ້ ໃນມື້ທີ່ປະເຊີນກັບຄວາມຕາຍ "* (ຂໍ້ 4). ມີຜູ້ນຶ່ງຊື່ຊີໂມນເປັນໝໍເວດມົນທີ່ເຄີຍເຮັດໃຫ້ຊາວເມືອງຊະມາເຣັຽງີດງໍ້ດ້ວຍເວດມົນຄາຖາຂອງຕົນ, ວັນນຶ່ງເປໂຕກັບໂຢຮັນໄດ້ໄປອ້ອນວອນໃຫ້ຄຣິສຕຽນໃໝ່ທີ່ຊະມາເຣັຽແລ້ວເຂົາກໍໄດ້ຮັບພຣະວິນຍານບໍຣິສຸດ *"ຝ່າຍຊີໂມນ, ເມື່ອໄດ້ເຫັນວ່າພຣະວິນຍານເປັນທີ່ຊົງປະທານດ້ວຍການວາງມືຂອງພວກສາວົກ ກໍນຳເງິນມາໃຫ້ພວກທ່ານ ໂດຍເວົ້າວ່າ ຂໍໃຫ້ຂ້ານ້ອຍມີຣິດອຳນາດຢ່າງນີ້ເໝືອນກັນ ເພື່ອວ່າເມື່ອຂ້ານ້ອຍວາງມືໃສ່ຜູ້ໃດ ຜູ້ນັ້ນຈະໄດ້ຮັບພຣະວິນຍານບໍຣິສຸດ ແຕ່ເປໂຕຕອບຊີໂມນວ່າຈົ່ງໃຫ້ເງິນຂອງເຈົ້າຈິບຫາຍໄປກັບເຈົ້າ ເພາະເຈົ້າຄຶດຈະຊື້ຂອງປະທານແຫ່ງພຣະເຈົ້າດ້ວຍເງິນ "* (ກິຈການ 8: 17-19). ຊະໂລໂມນກ່າວວ່າຄົນພວກນີ້ຈະເປັນເໝືອນໃບໄມ້ລົ່ນໃນຣະດູໃບໄມ້ລົ້ນນັ້ນເອງ, ແຕ່ສ່ວນຜູ້ຊອບທັມຈະຈະເຣີນຮຸ່ງເຮືອງເພາະລາວເປັນຄືເຄືອອະງຸ່ນທີ່ຕິດພັນກັບຕົ້ນອະງຸ່ນແລ້ວຈະເກີດຜົນງອກງາມ.

<u>ຄຳຖາມ:</u>

1. ຄຳພາສິດທີ່ທ່ານສົນທະນາກັນ ແລະຄຳສຸພາສິດນີ້ມີຜົນປໂຍດຕໍ່ຊີວິດປະຈຳວັນຂອງທ່ານຢ່າງໃດ?

2. ເປັນຫຍັງພຣະເຈົ້າຈຶ່ງກຽດຊັງຜູ້ໃຊ້ຕາຊັ່ງຂີ້ຫລັກ ຫາກເວົ້າວ່າພຣະເຈົ້າຊົງເປັນຄວາມຮັກ?

3. ຄວາມຮັ່ງມີຈະຊ່ອຍຫຍັງບໍ່ໄດ້ ໃນມື້ທີ່ປະເຊີນກັບຄວາມຕາຍ ທ່ານຄຶດເຫັນແນວໃດ?

4. ຄົນຊົ່ວຮ້າຍຕາຍ ຄວາມຫວັງຂອງລາວກໍຕາຍ ໝາຍຄວາມວ່າແນວໃດ?

5. ຜູ້ຍິງງາມແຕ່ບໍ່ສລາດ ກໍປານວ່າເອົາແຫວນຄຳເກາະດັງໝູ ໝາຍຄວາມວ່າແນວໃດ?

6. ຍິ່ງໃຫ້ ຍິ່ງມີ ຍິ່ງຂີ້ຖີ່ ຍິ່ງຈົນ ທ່ານຈະອະທິບາຍແນວໃດ?

7. ຜູ້ເພິ່ງຊັບສົມບັດຂອງຕົນຈະຖືກທຳລາຍຢ່າງໃດ?

*ດຣ. ທຸມພັນ ວົງສຸຣິດທ໌*

# ບົດຮຽນທີ 12
# ຢູ່ຢ່າງຜູ້ມີປັນຍາ

---

**ຂໍ້ພຣະຄັມພີສໍາລັບບົດຮຽນນີ້:** ສຸພາສິດ 22:17-25; 23:10-11, 19-28; 24:10-12, 15-20
**ຂໍ້ພຣະຄັມພີສໍາລັບບົດຮຽນນີ້:** 22:17--24:22
**ຈຸດສໍາຄັນຂອງບົດຮຽນນີ້:** ປັນຍາພາຢູ່ຢ່າງຖືກຕ້ອງ
**ຄໍາຖາມເພື່ອການສໍາຣວດ:** ຄໍາພາສິດໂບຮານຊ່ອຍຄົນສມັຍໃໝ່ແນວໃດ?
**ຈຸດປະສົງຂອງບົດຮຽນນີ້:** ເພື່ອຊອກເບິ່ງວ່າພາສິດໂບຮານແປງທາງຄົນສມັຍໃໝ່ໄດ້

**ໜ້າທີ່ສໍາຄັນຂອງຄຣິສຕຽນທຸກຄົນໃຫ້ເຂົ້າໃຈວ່າ**

- ພຣະຄັມພີເທົ່ານັ້ນເປັນຣິດອໍານາດນໍາພາທາງແຫ່ງຊີວິດໃນການເຮັດພາຣະໜ້າທີ່ການຮັບໃຊ້.
- ເພື່ອແບ່ງປັນຂ່າວປະເສີດແກ່ທຸກຄົນໂດຍບໍ່ເລືອກໜ້າ.
- ມະນຸດທຸກຄົນຖືກສ້າງໃຫ້ມີຮູບຮ່າງຄ້າຍຄືພຣະເຈົ້າ.
- ນໍາຄອບຄົວໃຫ້ມີຄວາມເຊື່ອເຂັ້ມແຂງ.
- ປະຕິບັດຮັບໃຊ້ພຣະເຢຊູໃນການຊ່ອຍເຫລືອຜູ້ອື່ນທາງດ້ານຮ່າງກາຍ, ຈິດວິນຍານ ແລະຈິດໃຈ.
- ຈັດຕຽມໄພ່ພົນຂອງພຣະເຈົ້າໃຫ້ຕຽມພ້ອມໃນການດີ

## ບົດນໍາ

ສຸພາສິດຂອງຊະໂລໂມນເປັນການລຽງຄໍາເວົ້າແລະກາບກອນຂອງຊາວເຮັບເຣີ ຊຶ່ງເປັນການເຂົ້າໃຈຍາກສໍາລັບຄົນສມັຍໃໝ່ ເພາະຄົນສມັຍໃຫມ່ບໍ່ມັກໃຊ້ສຸພາສິດແລະກາບກອນແຕ່ຢ່າງໃດ ຄືຢາກເວົ້າຫຍັງກໍແມ່ນເວົ້າໂລດບໍ່ຕ້ອງເວົ້າອ້ອມຄ້ອມ, ຄົນບູຮານແລະຄົນສມັຍໃໝ່ມີຄວາມຄິດແຕກຕ່າງກັນ ດັ່ງນັ້ນຄົນສມັຍໃໝ່ຈໍາເປັນຈະຕ້ອງໄປໂຮງຮຽນເພື່ອຈະໄດ້ເຂົ້າໃຈຄວາມຄິດຂອງຄົນບູຮານ. ສຸພາສິດສາມສິບຄວາມກ່າວໃນ 22:17-24:22 ເປັນຄໍາເວົ້າຂອງຄົນມີປັນຍາທີ່ເຮົາຈະເວົ້າກັນໃນວັນນີ້.

**ການປະຕິບັດກັບຄົນຍາກຈົນ** (22:22-23)
ນັກຮຽນຄວນອ່ານ 22:17-21 ເພາະແມ່ນຄໍານໍາຂອງຊະໂລໂມນກ່ອນໜ້າເພິ່ນຈະເວົ້າຄໍາພາສິດສາມສິບຄໍາ ຊຶ່ງເປັນຄໍາພາສິດທີ່ປະກອບດ້ວຍຕະຕິປັນຍາດັ່ງນີ້; ຄໍາເວົ້າໜຶ່ງໃນສາມສິບ, "*ຢ່າເອົາປຽບຄົນທຸກຍ້ອນວ່າເຈົ້າ ໄດ້ປຽບເຂົາ ຢ່າເອົາປຽບຄົນຂື້ນສານໂດຍບໍ່ມີທາງສູ້ ພຣະຜູ້ເປັນເຈົ້າຈະເປັນຜູ້ໂຕ້ຖຽງຄະດີໃຫ້ເຂົາ ແລະຂົ່ມຂູ່ເອົາຊີວິດຄົນທີ່ຂົ່ມຂູ່ຊີວິດເຂົານັ້ນ* "(ຂໍ້ 22-23). ການກົດຂີ່ຂົ່ມເຫງໃນສມັຍບູຮານເປັນເຣື່ອງໃຫຍ່ ດ້ວຍວ່າສມັຍນັ້ນ ເປັນສມັຍຂອງສັກດີນາ ດັ່ງນັ້ນການເອົາປຽບກັນແລະກົນນັນກາຍເປັນຂອງທັມມະດາຂອງພວກຄົນຮັ່ງມີແລະພວກເຈົ້ານາຍຈະຕ້ອງເອົາປຽບຄົນຍາກຈົນ, ແຕ່ກະສັດຊະໂລໂມນຜູ້ເປັນກະສັດທີ່ເຕັມໄປດ້ວຍອໍານາດທຸກປະການກໍບໍ່ ເຫັນດີໃນເຣື່ອງນີ້.

ຊາວອະເມຣິກັນຄົງຈະບໍ່ເຂົ້າໃຈໃນເຣື່ອງນີ້ເທົ່າໃດ ເພາະວ່າໃນສມັຍກ່ອນຊາວອະເມຣິກາຂາວກໍເປັນພວກນຶ່ງທີ່ກົດຂີ່

ຂົ່ມເຫງອະເມຣິກັນດໍາ, ສ່ວນຄົນລາວເຮົາອາຈມີຈໍານວນນຶ່ງທີ່ເຂົ້າໃຈໃນເຣື່ອງນີ້ເນື່ອງຈາກວ່າຖານະຊີວິດການເປັນຢູ່ໃນສມັຍສັກດີນາທີ່ພວກເຮົາໄດ້ປະສົບມາກ່ອນ. ພວກເຈົ້ານາຍແທ້ກໍບໍ່ມີຫຼາຍເທົ່າໃດແຕ່ຂ້າທາດນັ້ນມີຫຼວງຫຼາຍພາຍ ມາກ ຫລືບາງທີ່ທ່ານຜູ້ນຶ່ງອາຈຢູ່ໃນສະພາບຂອງຂ້າທາດມາກ່ອນແລະເວລານີ້ທ່ານກໍບໍ່ເປັນດັ່ງນັ້ນອີກ ແລະແຖມຍັງເປັນນາຍຕາມໂຮງຈັກໂຮງງານອີກຊໍ້າ ເມື່ອເປັນເຊັ່ນນັ້ນເຮົາກໍຄວນຂອບພຣະຄຸນພຣະເຈົ້າແລະລະວັງໃນການໃຊ້ອໍານາດຂອງທ່ານຕໍ່ຜູ້ເປັນລູກນ້ອງທ່ານ. ມີຄໍາພາສິດບູຮານລາວກ່າວວ່າ "<u>ຄັນວ່າໄດ້ຂີ່ຊ້າງກັ້ງຮົ່ມເປັນພະຍາ ຢ່າ ໄດ້ລືມເສນາຜູ້ແຫ່ນໍາຕີນຊ້າງ</u>". ເພາະພຣະຄັມພີກ່າວໄວ້ແລ້ວວ່າ*ພະຜູ້ເປັນເຈົ້າຈະເປັນຜູ້ໂຕ້ຖຽງຄະດີໃຫ້ເຂົາ.*

**<u>ອັນຕະລາຍຂອງການຄົບຄົນ</u>** (22:24-25)

*"ຢ່າເປັນໝູ່ກັບຄົນໃຈຮ້ອນແລະໂຫດຮ້າຍທາລຸນ ເຈົ້າອາດຈະຮຽນເອົານິສັຍຂອງເຂົາ ແລະບໍ່ອາດປ່ຽນນິສັຍໄດ້" (ຂໍ້ 24-25).* ຊະໂລໂມນເຕືອນເຮົາທັງຫລາຍໃຫ້ລະມັດລະວັງໃນການຄົບຄ້າສະມາຄົມກັບຄົນໂດຍສະເພາະຢ່າງຍິ່ງແມ່ນຄົນທີ່ມີໃຈໂຫດຮ້າຍທາລຸນ ເຫດຜົນຂອງເພິ່ນຄືວ່າເພິ່ນຢ້ານອໍານາດແຫ່ງການໂຫດຮ້າຍທີ່ເຮົາເຫັນນັ້ນຈະກາຍເປັນນິສັຍຂອງເຮົາໂດຍບໍ່ຮູ້ສຶກຕົວ ເໝືອນດັ່ງລູກຂອງເຮົາທັງຫລາຍເຫັນພໍ່ແມ່ເປັນຕົວຢ່າງໃນເຣື່ອງບໍ່ດີ ສ່ວນເຣື່ອງດີນັ້ນຫລາຍເທື່ອລູກຂອງເຮົາອາດຈະເບິ່ງບໍ່ເຫັນ. ຄໍາພາສິດລາວກ່າວວ່າ "<u>ຕົກໝູ່ແຮ້ງເປັນແຮ້ງ ຕົກໝູ່ກາເປັນກາ</u>" ນັ້ນເປັນຄວາມຈິງ, ມີລາງຄົນເວົ້າວ່າ ຂ້ອຍບໍ່ເປັນແນວນັ້ນດອກ ໄປຢູ່ໃສກະເປັນຂ້ອຍຄືເກົ່ານັ້ນແຫລະ. ຂ້າພະເຈົ້າເຄີຍແນະນໍາພວກຊາຍໂສດແລະຍິງໂສດໃນການຊອກຫາຄູ່ຄອງວ່າ ເຈົ້າຢາກໄດ້ຄູ່ຄອງແນວໃດຈົ່ງໄປບ່ອນແນວນັ້ນ, ຫາກ ໄປບ່ອນຫລິ້ນໄພ້ກໍຈະໄດ້ຄົນຂີ້ໄພ້ , ຫາກໄປບາກໍຈະໄດ້ຄົນໃນບາ, ຫາກໄປໂບດກໍຈະໄດ້ຄົນຢູ່ໂບດ. ຊີວິດຄົນເຮົາເລືອກເກີດບໍ່ໄດ້ ແຕ່ເລືອກທີ່ຈະເປັນຄົນດີຫລືຊົ່ວເຮົາສາມາດເລືອກໄດ້ໂດຍການເລືອກຄົບຄົນຕາມທາງເລືອກຂອງເຮົາ. ມີຄໍາທີ່ກ່າວວ່າ "<u>ຄົບຄົນດີມີສີແກ່ຕົວ ຄົບຄົນຊົ່ວພາຕົວໝົ່ນໝອງ</u>" ແລະ "<u>ຄົບຄົນໃຫ້ເລືອກໜ້າ ຊື້ຜ້າໃຫ້ເລືອກຄົນ</u>"

**<u>ຄົບເພື່ອນຜິດພາຄິດຈົນຕາຍ</u>** (23:19-21)

*"ລູກເອີຍຈົ່ງຟັງເທີ້ນ ຈົ່ງມີປັນຍາແລະຄວາມຄິດໃຫ້ດີ ເຖິງທາງທີ່ເຈົ້າດໍາເນີນຊີວິດ ຢ່າຮ່ວມສັງສັນກັບຜູ້ທີ່ດື່ມເຫລົ້າໜັກຫລືກິນຫລາຍໂພດ ຄົນຂີ້ເມົາແລະຄົນຂີ້ໂລບຈະກາຍເປັນຄົນຍາກຈົນ ຖ້າເຈົ້າມີແຕ່ກິນກັບນອນ ບໍ່ດົນເຈົ້າກໍຈະນຸ່ງສົ້ງຂາດ "* ມີຄວາມໝາຍວ່າໃຫ້ລະວັງຈິດໃຈໃຫ້ດີທີ່ຈະພົບກັບຄົນຂີ້ເຫລົ້າ ມັນບໍ່ເປັນການຜິດທີ່ມີໝູ່ຂີ້ເຫລົ້າ ແຕ່ເປັນການຜິດທີ່ຈະຕ້ອງກາຍເປັນຄົນຂີ້ເຫລົ້າຄືເຂົາ. ການຄົບກັບຄົນຂີ້ເຫລົ້າບໍ່ແມ່ນຈະເຮັດຄືເຂົາເປັນຄົນເມົາຢູ່ວັນຍັ່ງຄໍ່າບໍ່ມີຂີ້ເຫລົ້າຜູ້ໃດກາຍເປັນຄົນຮັ່ງມີຍ້ອນການກິນເຫລົ້ານອກຈາກຈະກາຍເປັນຄົນຍາກຈົນຍ້ອນເຫລົ້າ.

**<u>ຄົນມີປັນຍາຈະຟັງຄວາມພໍ່ແມ່</u>** (23:22-25)

*"ຈົ່ງຟັງຄວາມພໍ່ຂອງເຈົ້າ; ຖ້າບໍ່ມີເພິ່ນເຈົ້າກໍບໍ່ມີຊີວິດ ເມື່ອແມ່ຂອງເຈົ້າເຖົ້າແກ່ ຈົ່ງຮູ້ຈັກບຸນຄຸນຂອງເພິ່ນ. ຄວາມຈິງ, ປັນຍາ, ການຮຽນຮູ້, ແລະຄວາມເຂົ້າໃຈເປັນທີ່ມີຄ່າທີ່ຄວນຊື້ຫາມາໄວ້; ສິ່ງເຫລົ່ານີ້ທັງໝົດມີຄ່າສູງທີ່ສຸດເກີນກວ່າທີ່ເຈົ້າຈະຂາຍອອກໄປ ຄວາມສຸກຂອງພໍ່ແມ່ລູກເປັນຄົນຊອບທັມ ເມື່ອລູກມີປັນຍາພໍ່ກໍພາກພູມໃຈນໍາ ຈົ່ງເຮັດໃຫ້ພໍ່ຂອງເຈົ້າພູມໃຈໃນຕົວເຈົ້າ ແລະຈົ່ງເຮັດໃຫ້ແມ່ຂອງເຈົ້າມີຄວາມສຸກ ".* ຄໍາວ່າຟັງຄວາມທີ່ຊະໂລໂມນກ່າວນັ້ນມີຄວາມໝາຍວ່າ ເຮັດຕາມຄໍາສອນຂອງພໍ່ແມ່ໂດຍບໍ່ຖຽງຄວາມເພິ່ນ ແລະບໍ່ຄິດໝິ່ນປມາດພໍ່ແມ່ຂອງຕົນຈັກເທື່ອ. ຊະໂລໂມນບອກວ່າປັນຍາເປັນຂອງມີຄຸນຄ່າທີ່ຄວນຊື້ໄວ້ ໝາຍຄວາມວ່າເຖິງແມ່ນຈະໃຊ້ເງິນຄໍາເພື່ອຊອກສແວງຫາປັນຍາກໍເປັນການສົມຄວນ ເພາະວ່າມັນມີຄ່າເກີນກວ່າຈະຂາຍອອກໄປ ແປວ່າບໍ່ສົມຄວນຈະເສັຽປັນຍາໄປງ່າຍໆ.

**<u>ຢ່າອ່ອນແອ</u>** (24:10)

ແມ່ນຫຍັງເປັນເຄື່ອງທົດລອງເບິ່ງບຸກຄົນເຂັ້ມແຂງຫລືອ່ອນແອ? ຊະໂລໂມນມີຄໍາຕອບດັ່ງນີ້ *"ຖ້າເຈົ້າເປັນຄົນອ່ອນແອໃນຍາມຄັບຂັນ ເຈົ້າກໍເປັນຄົນອ່ອນແອແທ້"* (ຂໍ້ 10). ໃນຍາມຍາກລໍາບາກຫລືອັນຕະລາຍເປັນເຄື່ອງວັດແທກຂອງຄວາມເຂັ້ມແຂງຂອງບຸກຄົນ, ເຢເຣມີຢາຖາມພຣະເຈົ້າໃນບັນຫາຕ່າງໆວ່າ *"ເປັນຫຍັງຄົນຊົ່ວຈຶ່ງຈະເຣີນຮຸ່ງເຮືອງຂຶ້ນແທ້? ເປັນຫຍັງຄົນບໍ່ສັດຊື່ຄົນຂີ້ສໍ້ຂີ້ໂກງຈຶ່ງໄດ້ຮັບຜົນສໍາເຣັດໃນຊີວິດ?* (ເຢຣີມາຢາ 12: 1). ນອກຈາກເຢຣີມາຢາຖາມແລ້ວຂ້າພະເຈົ້າກໍເຊື່ອວ່າຫລາຍຄົນໃນພວກເຮົາກໍຢາກຖາມຄືກັນ ແຕ່ຫາກເຮົາຢາກຖາມຈົ່ງມາອ່ານເບິ່ງຄໍາຕອບຂອງພຣະເຈົ້າທີ່ຕອບເຢເຣມີອາວ່າ *"ຖ້າເມື່ອຍແລ່ນແຂ່ງກັບຄົນ ເຮັດຈັ່ງໃດເຈົ້າຈະແລ່ນແຂ່ງກັບໂຕມ້າໄດ້"* (ເຢເຣມີຢາ 12: 5). ມີຄວາມໝາຍວ່າເຈົ້າອ່ອນແອແທ້ ຫາກພົບບັນຫາໃຫຍ່ກວ່ານີ້ເຈົ້າຈະທົນໄດ້ບໍ່? ສຸພາສິດຄໍານີ້ສອນເຮົາບໍ່ໃຫ້ຈົ່ມໃນເຣື່ອງຕ່າງໆໃຫ້ຄິດເສັຽວ່າເປັນການຝຶກຫັດໃຫ້ເຮົາເຂັ້ມແຂງເພື່ອຈະຕໍ່ສູ້ກັບບັນໃຫຍ່ຂ້າງໜ້າ.

<u>ການເລືອກທາງ</u> (24:11-20)

*"ຢ່າລັງເລໃຈທີ່ຈະຊ່ອຍຄົນພວມຈະຖືກປະຫານຊີວິດຢ່າງບໍ່ຍຸດຕິທັມ ເຈົ້າອາດເວົ້າວ່າບໍ່ແມ່ນທຸຣະຂອງເຈົ້າແຕ່ພຣະຜູ້ເປັນເຈົ້າຮູ້ແລະຕັດສິນໃຈຄວາມຕັ້ງໃຈຂອງເຈົ້າ ພຣະອົງເຝົ້າເບິ່ງເຈົ້າຢູ່ ພຣະອົງຮູ້ຈັກທຸກຢ່າງດີ ແລະພຣະອົງຈະຕອບແທນຕາມທີ່ເຈົ້າໄດ້ເຮັດນັ້ນ"* (ຂໍ້ 11-12). ໃນສມັຍກ່ອນຄົນທີ່ບໍ່ມີຄວາມຜິດຖືກຂ້າຕາຍຢ່າງຫລວງຫລາຍແມ່ນແຕ່ພຣະເຢຊູເອງຜູ້ບໍ່ມີຄວາມຜິດໃດໆກໍຍັງຕາຍໃນສະພາບນັ້ນ, ດັ່ງນັ້ນເມື່ອເຮົາພົບກັບເຫດການເຊັ່ນນີ້ຊະໂລໂມນສອນວ່າຈົ່ງ ມີໃຈກ້າພໍທີ່ຈະຊ່ອຍຊີວິດລາວໄວ້ ເພາະວ່າພຣະເຈົ້າຈະເປັນຜູ້ຕອບແທນການກະທໍາຂອງເຮົາ.

*"ລູກເອີຍ ຈົ່ງກິນນໍ້າເຜີ້ງເພາະມັນແຊບດີ ນໍ້າເຜີ້ງຈາກຮັງຫວານຢູ່ໃນປາກຂອງເຈົ້າສັນໃດ ເຈົ້າອາດຈະຮູ້ດີວ່າປັນຍາກໍດີສໍາລັບຈິດວິນຍານຂອງເຈົ້າສັນນັ້ນ ຈົ່ງຮັບເອົາປັນຍາ ແລະເຈົ້າຈະມີອະນາຄົດອັນແຈ່ມໃສ"* (ຂໍ້ 13-14). ສຸພາສິດຕອນນີ້ເປັນຄໍາຜຍາຂອງຄົນໂບຮານ ຄໍາວ່າລູກເອີຍ *ຈົ່ງກິນນໍ້າເຜີ້ງເພາະມັນແຊບດີ* ແປວ່າຈົ່ງວ່ອງໄວໃນການຊອກສແວງຫາປັນຍາ ຄົນມີປັນຍາຈະມີຊີວິດຫວານດັ່ງນໍ້າເຜີ້ງ.

*"ຢ່າເປັນດັ່ງຄົນຊົ່ວຮ້າຍທີ່ວາງແຜນປຸ້ນຄົນສັດຊື່ ຫລືຍຶດບ້ານເຮືອນຂອງລາວໄປ ບໍ່ວ່າຄົນສັດຊື່ຈະຫລົ້ມຈົມຢ່າງໃດກໍຕາມ ລາວຈະລຸກຂຶ້ນຕັ້ງຕົວໃໝ່ໄດ້ສເມີ; ແຕ່ຄວາມຈິບຫາຍນັ້ນມັນທໍາລາຍຄົນຊົ່ວຮ້າຍລົງເລີຍ"* (ຂໍ້ 15-16). ພວກຄົນຊົ່ວຮ້າຍທີ່ວາງແຜນປຸ້ນສໍາເຣັດກໍມີ ແຕ່ບໍ່ແມ່ນຕລອດໄປ ບັ້ນປາຍຈະຖືກທໍາລາຍລົງບືງໄຟນະຣົກ, ຊະໂລໂມນປຽບທຽບວ່າ ບຸກຄົນທີ່ບໍ່ມັກກົ້ມນໍ້າເຜີ້ງຫວານ ຈະໄດ້ກິນນໍ້າຂົມໃນອະນາຄົດ. ຢ່າລືມວ່າ ເຮົາເລືອກເກີດບໍ່ໄດ້ແຕ່ເລືອກເປັນໄດ້.

*"ຢ່າດີໃຈເມື່ອສັດຕູຂອງເຈົ້າໄດ້ຮັບພັຍວິບັດ ແລະຢ່າດີໃຈເມື່ອລາວສະດຸດລົ້ມ ຖ້າເຈົ້າສົມນໍ້າໜ້າລາວ ພຣະຜູ້ເປັນເຈົ້າຮູ້ຈັກພຣະອົງຈະບໍ່ມັກແລະບາງທີພຣະອົງອາດບໍ່ລົງໂທດລາວກໍໄດ້"* (ຂໍ້ 17-18). ຄໍາວ່າສົມນໍ້າໜ້າແປວ່າເຍາະເຍີ້ຍສັດຕູທີ່ເຂົາຖືກລົ້ມລົງ ພຣະເຈົ້າບໍ່ພໍພຣະທັຍ ເມື່ອພຣະອົງບໍ່ພໍພຣະທັຍແລ້ວ ພຣະອົງອາດຈະບໍ່ລົງໂທດເຂົາກໍໄດ້. ພາສິດບູຮານກ່າວວ່າ *"ຄົນລົ້ມຢ່າຂ້າມ ໄມ້ລົ້ມຈຶ່ງຂ້າມ"*.

*"ຢ່າອຸກໃຈຍ້ອນຄົນຊົ່ວ ຢ່າຄິດອິດສາເຂົາເຈົ້າ ຄົນຊົ່ວຮ້າຍບໍ່ມີອະນາຄົດເລີຽ ຊີວິດຂອງລາວເປັນດັ່ງໂຄມໄຟທີ່ຈວນຈະມອດ"* (ຂໍ້ 19-20). ເຮົາມັກຈະເຫັນຄົນຊົ່ວໄດ້ດີມີຫລວງຫລາຍ ສ່ວນຄົນເຮັດດີບໍ່ຄ່ອຍຈະໄດ້ດີເທົ່າໃດ ຈຶ່ງເຮັດໃຫ້ເຮົາທັງຫລາຍຜູ້ທີ່ເຮັດດີມາເປັນປະຈໍາອ່ອນກໍາລັງໃຈ ດ້ວຍເຫດນີ້ພວກຄົນດີມັກຈະເວົ້າວ່າ "<u>ເຮັດດີໄດ້ດີມີຢູ່ໃສ ເຮັດຊົ່ວໄດ້ດີມີຖົມໄປ</u>" ນີ້ແຫລະແມ່ນຄໍາຄິດອິດສາຄົນຊົ່ວທີ່ຮັບຜົນດີຊົ່ວຄາວ, ຄົນຊົ່ວເປັນຄືໂຄມໄຟຈວນຈະມອດຫລືນໍ້າມັນໃນໂຄມໄຟໃກ້ຈະໝົດ ເມື່ອໂຄມໄຟນັ້ນມອດແລ້ວກໍບໍ່ມີໂອກາດຈະໄດ້ຂຶ້ນໃໝ່ອີກ ເພາະຄວາມຈະເຣີນຮຸ່ງເຮືອງ

ຂອງຄົນຊົ່ວນັ້ນບໍ່ແມ່ນຄວາມຈະເຣີນອັນແທ້ຈິງຊຶ່ງເປັນຢູ່ຊົ່ວຄາວເທົ່ານັ້ນ ຊະໂລໂມນຮ້ອງຄົນພວກນີ້ວ່າພວກບໍ່ມີອະນາຄົດ.

<u>ຄຳຖາມ:</u>

1. *ຢ່າເອົາປຽບຄົນທຸກຍ້ອນວ່າເຈົ້າໄດ້ປຽບເຂົາ* (22:22-23) ຄຳວ່າເອົາປຽບໝາຍຄວາມວ່າຢ່າງໃດ?

2. *ຢ່າເປັນໝູ່ກັບຄົນໃຈຮ້ອນແລະໂທດຮ້າຍທາລຸນ* (22:24-25) ຄຳວ່າບໍ່ໃຫ້ເປັນໝູ່ໝາຍຄວາມວ່າແນວໃດ? ເປັນຫຍັງຈຶ່ງບໍ່ໃຫ້ເປັນໝູ່?

3. *ຢ່າຮ່ວມສັງສັນກັບຜູ້ທີ່ດື່ມເຫລົ້າໜັກ ຫລືກິນຫລາຍໂພດ ຄົນຂີ້ເມົາແລະຄົນຂີ້ໂລບ* (23:19-21) ດ້ວຍເຫດໃດຊະໂລໂມນຈຶ່ງຫ້າມ? ຫາກເຮົາບໍ່ພົວພັນກັບຄົນເຫລົ່ານີ້ເຂົາຈະພົ້ນໄດ້ຢ່າງໃດ?

4. *ປັນຍາ, ການຮຽນຮູ້, ແລະຄວາມເຂົ້າໃຈ ເປັນທີ່ມີຄ່າທີ່ຄວນຊື້ຫາມາໄວ້ (23:22-25).* ຄຳວ່າທີ່ຄວນຊື້ໄວ້ໝາຍຄວາມວ່າແນວໃດ?

5. *"ຖ້າເຈົ້າເປັນຄົນອ່ອນແອ ໃນຍາມຄັບຂັນເຈົ້າກໍເປັນຄົນອ່ອນແອແທ້" (24:10).* ເພິ່ນເວົ້າເຣື່ອງຫຍັງ?

6. *ຈົ່ງກິນນ້ຳເຜິ້ງເພາະມັນແຊບດີ* (24:13) ແປວ່າຫຍັງ?

7. *ຄົນຊົ່ວຮ້າຍທີ່ວາງແຜນປຸ້ນຄົນສັດຊື່* (24:15) ພວກນີ້ແມ່ນພວກບໍ່ມັກນ້ຳເຜິ້ງຈະມີອະນາຄົດແນວໃດ?

8. *ຢ່າອຸກໃຈຍ້ອນຄົນຊົ່ວ ຢ່າຄິດອິດສາເຂົາເຈົ້າ* (24:19). ຄົນດີອິດສາຄົນຊົ່ວມີອາການແນວໃດ?

*ດຣ. ທຸນພັນ ວົງສຸຣິດທ໌*

# ບົດຮຽນທີ 13
# ສັມພັນຢ່າງມີປັນຍາ

---

**ຂໍ້ພຣະຄັມພີສຳລັບບົດຮຽນນີ້:** ສຸພາສິດ 25:11-23; 26:18-28

**ຂໍ້ພຣະຄັມພີສຳລັບບົດຮຽນນີ້:** 25--31

**ຈຸດສຳຄັນຂອງບົດຮຽນນີ້:** ເພື່ອເຂົ້າໃຈໃຊ້ປັນຍາໃນການຜູກສັມພັນກັບຄົນອື່ນ

**ຄຳຖາມເພື່ອການສຳຣວດ:** ຈະຢູ່ຢ່າງສັນຕິກັບຍາດພີ່ນ້ອງໄດ້ຢ່າງໃດ?

**ຈຸດປະສົງຂອງບົດຮຽນນີ້:** ເພື່ອຊອກຫາວິທີໃຊ້ພຣະທັມສຸພາສິດເພື່ອການປອງດອງຕໍ່ຄົນອື່ນ

**ໜ້າທີ່ສຳຄັນຂອງຄຣິສຕຽນທຸກຄົນໃຫ້ເຂົ້າໃຈວ່າ**

- ພຣະຄັມພີເທົ່ານັ້ນເປັນຣິດອຳນາດນຳພາທາງແຫ່ງຊີວິດໃນການເຮັດພາຣະໜ້າທີ່ການຮັບໃຊ້.
- ນຳຄອບຄົວໃຫ້ມີຄວາມເຊື່ອເຂັ້ມແຂງ.
- ຈັດຕຽມໄພ່ພົນຂອງພຣະເຈົ້າໃຫ້ຕຽມພ້ອມໃນການດີ

## ບົດນຳ

ພຣະທັມສຸພາສິດຈາກບົດ 25 ເຖິງບົດ 29 ແມ່ນເຈົ້າຊີວິດ ເຮເສກີຢາ ຜູ້ເປັນເຈົ້າຊີວິດແຫ່ງຢູດາພາກເໜືອຂອງອິສຣາເອນ, ໄດ້ກ່າຍສຸພາສິດຂອງເຈົ້າຊີວິດຊະໂລໂມນອອກມາອີກ ເພື່ອປະຊາຊົນຂອງເພິ່ນຈະໄດ້ຮຽນຮູ້ແລະເຂົ້າໃຈໃນການນັບຖືພຣະເຈົ້າ ແລະຢູ່ກັບມະນຸດຢ່າງສັນຕິສຸກ. (ຂໍ້ພຣະຄັມພີທຸກຕອນໃນບົດຮຽນນີ້ແມ່ນສະບັບໃໝ່ສີຂຽວ/ຟ້າ).

**ຄ່າຂອງປັນຍາ** (25:11-12 )

"*ຄວາມຄິດເຫັນອັນເດັ່ນຊັດກໍເໝືອນດັ່ງລາຍຄຳທີ່ປະດັບຢູ່ໃນເງິນ ຜູ້ທີ່ຍອມຟັງຄຳເຕືອນຂອງຄົນມີປັນຍາ ກໍມີຄຸນຄ່າກວ່າແຫວນຄຳຫລືເຄື່ອງເອ້ທີ່ເປັນຄຳນໍ້າໜຶ່ງ* " (ຂໍ້ 11-12). ສຸພາສິດຕອນນີ້ສາມາດແບ່ງອອກເປັນສອງຢ່າງຄື;

1. *ຄວາມຄິດເຫັນອັນເດັ່ນຊັດກໍເໝືອນດັ່ງລາຍຄຳທີ່ປະດັບຢູ່ໃນເງິນ* ເປັນຫລັກຈະຣິຍາທັມຂອງຄຣິສຕຽນທີ່ໃຊ້ຄຳ ເວົ້າສິດສອນກັນ, ລາງເທື່ອຄຳເວົ້າອາດຈະເຮັດໃຫ້ຄົນເຮົາເຈັບ ຄ້າຍຄືເອົາຢາດີໃສ່ບາດແຜມັນກໍແສບເປັນຂອງທຳມະດາ ແຕ່ມັນເປັນຜົນດີຕາມພາຍຫລັງ, ແລະຄຳເວົ້າດຽວກັນມັນອາດຊ່ອຍລາງຄົນໃຫ້ຮູ້ສຶກສຳນຶກແລ້ວກໍຮັບເອົາດ້ວຍຄວາມຍິນດີ. ທັງນີ້ມັນຂຶ້ນກັບຜູ້ຟັງເປັນຄົນຊະນິດໃດເພາະຜູ້ຟັງເປັນຄືເງິນ (Silver) ແລະຄຳຄິດເຫັນເດັ່ນຊັດເຈນເປັນຄືຄຳທີ່ປະດັບຢູ່ໃນເຄື່ອງເອ້ທີ່ເຮັດດ້ວຍເງິນ.

2. *ຜູ້ທີ່ຍອມຟັງຄຳເຕືອນຂອງຄົນມີປັນຍາ ກໍມີຄຸນຄ່າກວ່າແຫວນຄຳຫລືເຄື່ອງເອ້ທີ່ເປັນຄຳນໍ້າໜຶ່ງ* " ຄຳເປັນວັດຖຸທີ່ມີຄ່າຣາຄາສູງທີ່ໃຜໆກໍຢາກໄດ້ໄວ້ຄອບຄອງ ແຕ່ສິ່ງທີ່ມາຄຸນຄ່າຫລາຍກວ່າທອງຄຳແມ່ນປັນຍາ ດ້ວຍວ່າປັນຍາບໍ່ແມ່ນວັດຖຸທີ່ໃຊ້ແລ້ວກໍໝົດໄປ ແຕ່ມັນກົງກັນຂ້າມຍິ່ງໃຊ້ປັນຍາກໍໄດ້ປັນຍາເພີ້ມຂຶ້ນທຸກວັນ ສ່ວນທອງຄຳຍິ່ງໃຊ້ເທົ່າໃດກໍໝົດໄປເທົ່ານັ້ນ. ດ້ວຍເຫດນີ້ພຣະທັມສຸພາສິດຈຶ່ງສອນເຮົາໃຫ້ຍອມຟັງຄຳເຕືອນຂອງຄົນມີປັນຍາ ເພາະມັນມີຄ່າຫລາຍກວ່າທອງຄຳນໍ້າໜຶ່ງ, ທັງສອງຂໍ້ທີ່ກ່າວມານີ້ເປັນຫລັກຈະຣິຍະທັມຂອງຄຣິສຕຽນ. ມີຄຳພາສິດບູຮານກ່າວວ່າ "ມີເງິນເຕັມພາ ບໍ່ເທົ່າພະຫຍາເຕັມທ້ອງ".

**ຈົ່ງເປັນທີ່ເຊື່ອຖື** (25:13-14)
*"ນ້ຳເຢັນໃຫ້ຄວາມສົດຊື່ນແກ່ຜູ້ເກັບກ່ຽວໃນຍາມຮ້ອນສັນໃດ ຜູ້ນຳຂ່າວທີ່ເຊື່ອໃຈໄດ້ກໍເຮັດໃຫ້ຜູ້ໃຊ້ຕົນໄປຊື່ນບານສັນນັ້ນ "* (ຂໍ້ 13). ຊະໂລໂມນໄດ້ປຽບເອົານ້ຳເຢັນກັບຊາວນາຜູ້ເຮັດວຽກໃນຣະດູຮ້ອນໃສ່ກັບພວກຜູ້ນຳຂ່າວປະເສີດຂອງພຣະເຈົ້າໄປຍັງໄພ່ພົນຂອງພຣະເຈົ້າ, ຜູ້ປະກາດພຣະທັມພຣະເຈົ້າຄວນຈະຍົກລະດັບຈິດວິນຍານຂອງຜູ້ຟັງດ້ວຍການປະກາດຂອງຕົນ ເມື່ອລາວຍົກລະດັບຈິດວິນຍານຂອງຜູ້ຟັງລາວກໍຈະກາຍເປັນຜູ້ທີ່ພຣະເຈົ້າໄວ້ໃຈໃນການປະກາດນັ້ນ.

*"ຄົນທີ່ສັນຍາຈະເອົາຂອງໃຫ້ແຕ່ບໍ່ໃຫ້ກໍສ່ຳກັບເມກໝອກແລະລົມບໍ່ມີຝົນ "*(ຂໍ້14). ພວກຊາວນາເຫັນເມກໝອກປົກຄຸມຟ້າກໍດີໃຈເພາະຈະມີຝົນຕົກລົງມາໃນທົ່ງນາຂອງຕົນ ແລະດ້ວຍນ້ຳຝົນນັ້ນຈະເຮັດໃຫ້ທົ່ງນາຂຽວສົດງົດງາມ, ຫາກມີເມກໝອກປົກຄຸມປາສຈາກຝົນ ຊາວນາທັງຫລາຍກໍພາກັນຜິດຫວັງຕາມໆກັນ. ບຸກຄົນທີ່ສັນຍາແຕ່ບໍ່ເຮັດຕາມສັນຍາຈະກາຍເປັນຄົນທີ່ບໍ່ໜ້າເຊື່ອຖືນັ້ນເອງ.

**ອົດທົນນຳຄົນທີ່ມີອຳນາດ** (25:15)
*"ໃຊ້ຄວາມອົດທົນຊັກຊວນ ກໍທຳລາຍຄວາມຂັດຂວາງອັນແຂງແກ່ງໄດ້ ແລະຍັງເຮັດໃຫ້ບັນດາຜູ້ປົກຄອງຍອມເຮັດຕາມອີກ "* ພວກເຈົ້ານາຍແລະຄົນໃຈແຂງບໍ່ແມ່ນຈະຍອມຕໍ່ສິ່ງໃດສິ່ງນຶ່ງງ່າຍໆ ເພາະເພິ່ນມີກຽດແລະສັກສີ, ແຕ່ຫາກເຮົາໃຊ້ຄວາມອົດທົນດົນນານຊັກຊວນເພິ່ນຢູ່ເລື້ອຍວັນນຶ່ງເພິ່ນຈະຍອມເຮັດຕາມຄຳຊັກຊວນຂອງເຮົາ, ຄົນຊຳນານແລະອົດທົນຈະໃຊ້ມີດນ້ອຍຕັດກະດູກໃຫຍ່ໄດ້ຢ່າງສວຍງາມ. ດັ່ງເນື້ອເພງໄທຕອນນຶ່ງກ່າວວ່າ "ນ້ຳຢົດໃສ່ຫີນທຸກວັນ ວັນຫີນມັນຍັງກ່ອນ(ເປື່ອຍ)"

**ຣະວັງຄົນບາງປະເພດ** (25:16-20)
*"ຢ່າກິນນ້ຳເຜີ້ງຫລາຍເກີນຄວາມຕ້ອງການ; ກິນຫລາຍໄປອາດເຮັດໃຫ້ເຈົ້າຮາກອອກ "*(25:16) ມີຄວາມໝາຍຢ່າງໃດນັ້ນຂໍນຳທ່ານອ່ານ *"ກິນນ້ຳເຜີ້ງຫລາຍບໍ່ເປັນການດີສັນໃດ ຢາກໄດ້ຄຳຍ້ອງຍໍຫລາຍກໍບໍ່ເປັນການດີສັນນັ້ນ "* (25:27). ຊະໂລໂມນໃຊ້ນ້ຳເຜີ້ງຢູ່ສອງປະການຄື 1. ນ້ຳເຜີ້ງເປັນປັນຍາທີ່ຈະຕ້ອງຮຽນຮູ້. 2. ນ້ຳເຜີ້ງເປັນເໝືອນຄົນປາກ ຫວານແຕ່ໃຈບໍ່ເປັນເຊັ່ນນັ້ນ, ລາງເທື່ອເຮົາມັກຍ້ອງຫລາຍເຮົາກໍຈະຕາຍຄືໂຕເຫງັນຕາຍຍ້ອນໄກ່ຜູ້ຍ້ອງນັ້ນແລ້ວ.ຄວາມຈິງແລ້ວການດື່ມນ້ຳເຜີ້ງນັ້ນດີຫາກດື່ມພໍດີພໍງາມ ແຕ່ຫາກດື່ມຫລາຍເກີນໄປກໍຈະຮາກອອກແທ້, ຊະໂລໂມນເປີດເຜີຍເຣື່ອງດັ່ງນີ້; "ຢ່າໄປຢ້ຽມເພື່ອນບ້ານດຸຫລາຍ; *"ເພາະລາວອາຈຊັງແລະເບື່ອໜ່າຍເຈົ້າກໍໄດ້ "*(ຂໍ້ 17).

*"ການເພິ່ງພາຜູ້ເຊື່ອໃຈບໍ່ໄດ້ໃນຍາມຄັບຂັນ ກໍສ່ຳກັບແຂ້ວຄອນຫຍ້ຳເຂົ້າ ຫລືຕີນພິການຍ່າງໄປ "*(ຂໍ້ 19). ຫາກເຮົາຕົກຢູ່ໃນຍາມຄັບຂັນຈົ່ງຊອກຫາຜູ້ຊ່ອຍທີ່ໜ້າໄວ້ວາງໃຈແລະຮຽນຮູ້ຄວາມສາມາດຂອງລາວກ່ອນ, ລາງຄົນມີຄວາມສາມາດແຕ່ບໍ່ໜ້າໄວ້ໃຈກໍຄ້າຍຄືແຂ້ວຄອນຫຍ້ຳເຂົ້າ ຫລືຄົນພິການພະຍາຍາມຍ່າງເອງນັ້ນແລ້ວ. ຫາກຜູ້ໃດຊອກຫາພຣະຜູ້ຊ່ອຍໃຫ້ພົ້ນ ກໍຄວນສຶກສາເບິ່ງວ່າຕົວເພິ່ນເອງພົ້ນບໍ່? ເພິ່ນຮັບປະກັນວ່າຊ່ອຍໄດ້ບໍ່? ຫາກເພິ່ນບໍ່ຮັບປະກັນກໍສົມຄວນທີ່ຊະຊອກຫາຜູ້ອື່ນດີກວ່າ.

*"ຮ້ອງເພງໃຫ້ຄົນທຸກໃຈຟັງ ກໍສ່ຳກັບແກ້ເສື້ອໃນຍາມໜາວ ຫລືເອົາເກືອໂຮຍໃສ່ບາດ "*(ຂໍ້ 20). ມັນເປັນການບໍ່ຖືກຕ້ອງທີ່ຈະຮ້ອງເພງແຫ່ງຄວາມຊົມຊື່ນຍິນດີໃຫ້ຜູ້ທຸກໃຈຟັງ ລາງເທື່ອຜູ້ທຸກໃຈບໍ່ມີຈິດໃຈຢາກຟັງເພງ ຫາກໄປຮ້ອງເພງໃຫ້ລາວຟັງມັນ *ກໍສ່ຳກັບແກ້ເສື້ອໃນຍາມໜາວ ຫລືເອົາເກືອໂຮຍໃສ່ບາດ.* ແກ້ເສື້ອຍາມໜາວກໍເພີ້ມຄວາມໜາວເອົາເກືອໃສ່ບາດແຜກໍເພີ້ມຄວາມເຈັບແສບ.

**<u>ຄົນສັບສົນຫວຸ້ນວາຍ</u>** (26: 18-21)

*"ຜູ້ໃດຫລອກລວງຄົນອື່ນໃຫ້ຫລົງຜິດ ແລ້ວອ້າງວ່າຕົວເອງເຮັດຢອກ ກໍສ່ຳກັບຄົນບ້າຫລິ້ນປືນ. ບໍ່ມີຟືນໄຟກໍມອດ; ບໍ່ມີຄົນປາກບອນກໍບໍ່ຜິດຖຽງກັນ, ຖ່ານດິບເຮັດໃຫ້ຖ່ານໄຟແດງ ຟືນເຮັດໃຫ້ໄຟລຸກ, ຄົນທີ່ສ້າງຄວາມເດືອດຮ້ອນເຮັດໃຫ້ເກີດຜິດຖຽງກັນ "* (ຂໍ້ 18-21). ຄົນແນວນີ້ພຣະເຢຊູກ່າວວ່າ *ເອົາຫີນໂມ້ກ້ອນໃຫຍ່ຜູກຄໍຜູ້ນັ້ນຈົມລົງນ້ຳທະເລເລິກເສັຽກໍດີກວ່າ "* (ມັດທາຍ 18:6). ເພາະຫີນໂມ້ເຂົ້າມີຮູຊຶ່ງເປັນບ່ອນເໝາະທີ່ຈະສອດເຊືອກເຂົ້າໃນຮູແລ້ວຜູກໃສ່ກັບຄໍບຸກຄົນດັ່ງກ່າວມາແລ້ວໂຍນລົງນ້ຳຈະບໍ່ມີໂອກາດຟູຂຶ້ນແນ່ນອນ. ເຮົາຮູ້ແລ້ວວ່າພຣະເຈົ້າແລະມະນຸດກຽດຊັງຄົນປະເພດນີ້, ດ້ວຍເຫດນີ້ຫາກວ່າເຮົາເອງເປັນຜູ້ເຮັດໃຫ້ຜູ້ອື່ນຫລົງຜິດຄິດຊົ່ວ ເຮົາສົມຄວນຈະຫາວິທີທາງພາຄົນນັ້ນກັບຄືນທາງຖືກແລະຂໍອະພັຍໂທດນຳເພິ່ນພ້ອມທັງສາຣະພາບຜິດຕໍ່ພຣະເຈົ້າຈະດີກວ່າບອກເພິ່ນວ່າ ເວົ້າຫລິ້ນຊື່ໆກະເຮັດແທ້ໜໍ້.

**<u>ຫລັກສະນະຄົນຂີ້ຕົວະ</u>** (26:23-28)

*"ຄຳເວົ້າອັນບໍ່ຈິງໃຈ ທີ່ເຊື່ອງຊ້ອນແນວຄິດບໍ່ຈິງ ກໍສ່ຳກັບເງິນສົດ ໂອບໝໍ້ດິນດາກ "* (ຂໍ້ 23). ເພື່ອນທີ່ເວົ້າແຕ່ປາກແຕ່ໃຈບໍ່ເປັນແນວນັ້ນມັນເບິ່ງຄືມີຄ່າສ່ຳກັບເອົາເງິນ Silver ໂອບໝໍ້ທີ່ເຮັດດ້ວຍດິນດາກ ເມື່ອເບິ່ງທາງນອກເປັນເງິນ ສ່ວນທາງໃນເປັນດິນດາກຊື່ໆ. ພວກຄົນຂີ້ຕົວະສ່ວນຫລາຍຈະເປັນຄົນປາກຫວານເພື່ອໃຫ້ຜູ້ຟັງຕາຍໃຈ ແລ້ວກໍກິນເຂົາທັງເປັນ. ຄົນພວກນີ້ຊະໂລໂມນບອກວ່າເປັນເໝືອນເງິນໂອບນອກໝໍ້ດິນເທົ່ານັ້ນ, ເຮົາຈະເຫັນໝໍ້ດິນນັ້ນເປັນໝໍ້ເງິນເພາະເຮົາເຫັນແຕ່ຂ້າງນອກຂອງໝໍ້ ແປວ່າເບິ່ງຄົນກໍເຫັນແຕ່ນອກ.

ໂຊໂລໂມນກ່າວຕໍ່ໄປວ່າ *"ຄົນໜ້າຊື່ໃຈຄົດແຝງຄວາມກຽດໄວ້ໃນຄຳເວົ້າອັນປະຈົບປະແຈງ ມັນເປັນຄຳເວົ້າອັນມ່ວນຫູ ແຕ່ຢ່າສູ່ເຊື່ອລາວເວົ້າ ເພາະຄວາມກຽດຊັງຄອງໃຈລາວຢູ່ ລາວອາດຈະປິດບັງຄວາມກຽດຊັງໄວ້ແຕ່ທຸກຄົນຈະໄດ້ເຫັນຄວາມຊົ່ວທີ່ລາວກະທຳ ຜູ້ທີ່ຫ້າງແຮ້ວໃສ່ຄົນອື່ນ ແຮ້ວນັ້ນຊ້ຳພັດລັ່ນຖືກຕົນເອງ ຜູ້ທີ່ເຮັດໃຫ້ຫີນກິ້ງລົງກໍຖືກຫີນນັ້ນກິ້ງທັບ ຄວາມພອນມີຄຳຕົວະກໍສ່ຳໃສ່ຄວາມກຽດຊັງໃຫ້ ເວົ້າບໍ່ຈິງໃຈນຳໄປສູ່ການທຳລາຍ "* (ຂໍ້ 24-28). ຊະໂລໂມນໄດ້ເຕືອນປະຊາຊົນຂອງເພິ່ນຢ່າເຊື່ອໃຈຄົນທີ່ເວົ້າອ່ອນຫວານແຕ່ຊຸກຊ້ອນຄວາມກຽດຊັງຢູ່ທາງໃນ, ນອກຈາກບໍ່ໃຫ້ເຊື່ອຟັງແລ້ວເພິ່ນຍັງແນະນຳບໍ່ໃຫ້ພົວພັນກັບຄົນແນວນີ້ແລະຢ່າເປັນຄືຄົນແນວນີ້, ເພາະມັນຄ້າຍຄືຢາພິດໃນຖ້ວຍນ້ຳຕານເພື່ອເບື່ອຜູ້ອື່ນໃຫ້ຕາຍ. ຊະໂລໂມນບອກອີກວ່າຄົນທີ່ເຮັດຢ່າງນີ້ກໍຈະຕົກຖືກຕົວເຂົາເອງໃນວັນນຶ່ງຂ້າງໜ້າ, ລາວຈະເປັນເໝືອນນາຍພານ ຫ້າງແຮ້ວເພື່ອຈັບສັດ ແຕ່ແຮ້ວນັ້ນກັບລັ່ນໃສ່ຕົວເອງ.

**<u>ຄຳຖາມ:</u>**

1. *ຄວາມຄິດເຫັນອັນເດັ່ນຊັດກໍເໝືອນດັ່ງລາຍຄຳທີ່ປະດັບຢູ່ໃນເງິນ* (25:11). ໝາຍຄວາມວ່າແນວໃດ?

2. *ຄຳເຕືອນຂອງຄົນມີປັນຍາ ກໍມີຄຸນຄ່າກວ່າແຫວນຄຳຫລືເຄື່ອງເອ້ທີ່ເປັນຄຳນ້ຳໜຶ່ງ* (ຂໍ້ 12). ທ່ານເຂົ້າໃຈແນວໃດ?

3. *ຄົນທີ່ສັນຍາຈະເອົາຂອງໃຫ້ແຕ່ບໍ່ໃຫ້ກໍສ່ຳກັບເມກໝອກແລະລົມບໍ່ມີຝົນ* "(ຂໍ້14) ເມກໝອກບໍ່ມີຝົນເປັນແນວໃດ?

4. *ໃຊ້ຄວາມອົດທົນຊັກຊວນ* (ຂໍ້ 15). ມີຜົນແນວໃດ?

5. ເຣື່ອງນໍ້າເຜີ້ງ *ກິນຫລາຍໄປອາດເຮັດໃຫ້ເຈົ້າຮາກອອກ* "(25:16) ເພິ່ນເອົານໍ້າເຜີ້ງມາເວົ້າເຮັດຫຍັງ? ເປັນຫຍັງຈຶ່ງຮາກຫາກກິນຫລາຍ?

6. *ການເພິ່ງພາຜູ້ເຊື່ອໃຈບໍ່ໄດ້ໃນຍາມຂັບຂັນ* (25:19) ເປັນແນວໃດ?

7. ຄົນສັບສົນຫວຸ້ນວາຍ (26: 18-21) ມີຫຍັງແດ່? ທ່ານຮຽນຮູ້ຈາກບົດຮຽນນີ້ແນວໃດ?

8. *ຄໍາເວົ້າອັນບໍ່ຈິງໃຈ ທີ່ເຊື່ອຊ້ອນແນວຄິດບໍ່ຈິງ ກໍສໍ່າກັບເງິນສິດ ໂອບໝໍ້ດິນດາກ* "(ຂໍ້ 23). ໃຫ້ອະທິບາຍເງິນ Silver ໂອບໝໍ້.

9. *ຄົນໜ້າຊື່ໃຈຄົດ* Hypocrite (26:23-28). ເປັນຄົນແນວໃດ? ເຮັດແນວໃດເຮົາຈຶ່ງຈະບໍ່ເປັນຄົນແນວນີ້?

*ດຣ. ທຸມພັນ ວົງສຸຣິດທ໌*